ທະນາຄານຮ່ວມພັດທະນາ ມະຫາຊົນ
Joint Development Bank Public
联合发展公众银行

# ບົດລາຍງານປະຈຳປີ 2025

# ANNUAL REPORT 2025

ເຕີບໃຫຍ່ໄປພ້ອມກັນ
BLOOMING TOGETHER

**JDB**

ທະນາຄານຮ່ວມພັດທະນາ ມະຫາຊົນ
Joint Development Bank Public
联合发展公众银行

# ສຳນັກງານໃຫຍ່ ທະນາຄານຮ່ວມພັດທະນາ ມະຫາຊົນ
# Head Quarter Location


ອາຄານເລກທີ 82, ຖະໜົນ ລ້ານຊ້າງ, Building No.82, Lanexang Ave
ບ້ານ ຫັດສະດີ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, Ban Hatsadee, Chanthabouly District, Vientiane Capital
ຕູ້ໄປສະນີ P.O. Box 3187 ໂທລະສັບ Tel: 021 - 213 531, ສາຍດ່ວນ Hotline 1499, ໂທລະສານ Fax: 021 - 213 530
Website: www.jdbbank.com.la
E-mail: info@jdbbank.la





**ເຕີບໃຫຍ່ໄປພ້ອມກັນ**
**BLOOMING TOGETHER**

# ສະມາຊິກ ສະພາບໍລິຫານ ທະນາຄານຮ່ວມພັດທະນາ ມະຫາຊົນ

## Board of Directors of Joint Development Bank Public






## ເຕີບໃຫຍ່ໄປພ້ອມກັນ

## BLOOMING TOGETHER

# ສາລະບານ
## ANNUAL REPORT 2025


1. ບົດຄວາມເຫັນຂອງ ປະທານສະພາຜູ້ບໍລິຫານ ທະນາຄານຮ່ວມພັດທະນາ ມະຫາຊົນ ທ່ານ ວິໄລ ສີພະພອນ — 2
Speech of Chairman of the Board of Directors of JDB
Mr. Vilay Siphaphone

2. ບົດຄວາມເຫັນຂອງ ຜູ້ອຳນວຍການ ທະນາຄານຮ່ວມພັດທະນາ ມະຫາຊົນ ທ່ານ ສາຄອນ ຍໍພັນໄຊ — 4
Speech of General Director of JDB
Mr. Sakhone Yorphanxay

3. ຂໍ້ມູນດ້ານການເງິນໂດຍຫຍໍ້ — 6
Summary of Financial Information

4. ສະພາບໍລິຫານ ທະນາຄານຮ່ວມພັດທະນາ ມະຫາຊົນ — 8
Board of Directors of Joint Development Bank Public

5. ຄະນະອຳນວຍການ ທະນາຄານຮ່ວມພັດທະນາ ມະຫາຊົນ — 9
Board of Management of Joint Development Bank Public

6. ຄະນະກຳມະການ ຄຸ້ມຄອງບໍລິຫານ — 10
Strategy and Governance Committee

7. ຄະນະກຳມະການ ບໍລິຫານຄວາມສ່ຽງ — 11
Risk Management Committee

8. ຄະນະກຳມະການ ກວດສອບພາຍໃນ
Audit Committee

9. ໂຄງຮ່າງການຈັດຕັ້ງ ປະຈຳປີ 2025
Organization Chart 2025

10. ບົດສະຫຼຸບການດຳເນີນທຸລະກິດ ປະຈຳປີ 2025 — 15
Annual Business Operation Summary 2025

11. ວຽກງານເຄື່ອນໄຫວ ປະຈຳປີ 2025 ຂອງທະນາຄານຮ່ວມພັດທະນາ ມະຫາຊົນ — 23
Activities of Joint Development Bank Public 2025

12. ບົດລາຍງານຂອງນັກກວດສອບອິດສະຫຼະ — 26
Report of Independent Auditor (Lao and English)

13. ໜ່ວຍບໍລິການຕ່າງໆ — 114
Service Units

14. ໂປຣໂມຊັນປະຈຳປີ 2025 — 121
Promotion 2025

ທະນາຄານຮ່ວມພັດທະນາ ມະຫາຊົນ
Joint Development Bank Public
联合发展公众银行



# ທ່ານ ເອກະພັນ ພະພິທັກ
## Mr. EKAPHANH PHAPITHACK

ປະທານຜູ້ຖືຮຸ້ນ
The Chairman of Shareholders

**JDB**

ທະນາຄານຮ່ວມພັດທະນາ ມະຫາຊົນ
Joint Development Bank Public
联合发展公众银行



# ທ່ານ ວິໄລ ສີພະພອນ

**Mr. Vilay SIPHAPHONE**

ປະທານສະພາບໍລິຫານ ທະນາຄານຮ່ວມພັດທະນາ ມະຫາຊົນ
Chairman of the Board of Directors of Joint Development Bank Public

# ບົດປະກອບຄໍາເຫັນ

## Speech of Mr. Vilay SIPHAPHONE

Chairman of the Board of Directors of JDB

ໃນທ່າມກາງສະພາບເສດຖະກິດໂລກ ມີຄວາມຜັນແປຢ່າງສັບສົນ ກອງທຶນການເງິນລະຫວ່າງປະເທດ (IMF) ແລະ ທະນາຄານໂລກ (World Bank) ໄດ້ປະເມີນພາບລວມຂອງເສດຖະກິດໂລກໃນປີ 2025 ວ່າຢູ່ໃນສະພາວະ "ຟື້ນຕົວແບບຄ່ອຍເປັນຄ່ອຍໄປ" ແລະ ຍັງຕ້ອງປະເຊີນກັບຄວາມທ້າທາຍຫຼາຍດ້ານ, ນີ້ແມ່ນສະຫຼຸບຈຸດສໍາຄັນຂອງເສດຖະກິດໂລກໃນປີ 2025,ການຂະຫຍາຍຕົວຂອງ GDP ໂລກ, ອັດຕາການເຕີບໂຕຄາດຄະເນວ່າ GDP ໂລກຈະຂະຫຍາຍຕົວຢູ່ທີ່ປະມານ 3.1% ຫາ 3.2%. ກຸ່ມປະເທດພັດທະນາແລ້ວ: ເຊັ່ນ ສະຫະລັດອາເມລິກາ ແລະ ເອີຣົບ ອາດຈະມີການເຕີບໂຕທີ່ຊ້າລົງຍ້ອນຜົນກະທົບຈາກອັດຕາດອກເບ້ຍທີ່ສູງໃນໄລຍະຜ່ານມາ, ກຸ່ມປະເທດກໍາລັງພັດທະນາ: ໂດຍສະເພາະໃນອາຊີ (ເຊັ່ນ ອິນເດຍ ແລະ ອາຊຽນ) ຍັງເປັນຕົວຂັບເຄື່ອນຫຼັກຂອງເສດຖະກິດໂລກ, ອັດຕາເງິນເຟີ້ ແລະ ນະໂຍບາຍການເງິນ, ເງິນເຟີ້ເລີ່ມຫຼຸດລົງ: ອັດຕາເງິນເຟີ້ໃນທົ່ວໂລກມີທ່າອ່ຽງຫຼຸດລົງເຂົ້າສູ່ລະດັບເປົ້າໝາຍຂອງທະນາຄານກາງຫຼາຍແຫ່ງ, ການປັບຫຼຸດດອກເບ້ຍ ມີການຄາດການວ່າທະນາຄານກາງສະຫະລັດ (Fed) ແລະ ທະນາຄານກາງປະເທດອື່ນໆ ຈະເລີ່ມປັບຫຼຸດອັດຕາດອກເບ້ຍລົງເພື່ອຊ່ວຍກະຕຸ້ນເສດຖະກິດ, ເຊິ່ງຈະສົ່ງຜົນດີຕໍ່ສະພາບຄ່ອງໃນຕະຫຼາດການເງິນໂລກ.

Amidst complex fluctuations in the global economy, the International Monetary Fund (IMF) and the World Bank have assessed the overall global economic outlook for 2025 as being in a state of "Gradual Recovery" and continuing to face numerous challenges. The key highlights of the global economy in 2025 include global GDP expansion, with the growth rate projected to be at approximately 3.1% to 3.2%. Developed countries: such as the United States and Europe may experience slower growth due to the lingering effects of high interest rates in the recent past. Developing countries: particularly in Asia (such as India and ASEAN) remain the primary engines driving the global economy. Inflation and monetary policy, inflation is beginning to decline: global inflation exhibits a downward trend, approaching the target levels set by many central banks. Interest rate reductions is anticipated that the US Federal Reserve (Fed) and central banks in other nations will begin to initiate interest rate cuts to help stimulate the economy, which will positively impact liquidity in global financial markets.

ໃນຂະນະດຽວກັນ ສະພາບເສດຖະກິດຂອງ ສປປ ລາວ ໃນປີ 2025 ໄດ້ມີການປະຕິຮູບຫຼາຍຢ່າງ ເພື່ອສະໜັບສະໜູນໃຫ້ເສດຖະກິດພາຍໃນ ໃຫ້ມີຄວາມເຂັ້ມແຂງ ໂດຍສະເພາະຫຼາຍຂະແໜງການ ໄດ້ປະຕິບັດນະໂຍບາຍຂອງຕົນ ໃນທິດທາງທີ່ຮັດກຸມຂື້ນ ການຄຸ້ມຄອງເງິນຕາຕ່າງປະເທດ ໄດ້ຫັນເຂົ້າສູ່ກົດໝາຍໃນທິດທາງທີ່ເຂັ້ມງວດຂື້ນ.

ເສດຖະກິດຂອງ ສປປ ລາວ ຍັງສືບຕໍ່ປະເຊີນກັບສິ່ງທ້າທາຍຫຼາຍດ້ານ ທັງສະພາບການເງິນສາກົນ ເນື່ອງຈາກ ບາງເສດຖະກິດໃຫຍ່ໄດ້ຮັກສາອັດຕາດອກເບ້ຍນະໂຍບາຍໃນລະດັບສູງເປັນເວລາດົນ ເຮັດໃຫ້ເງິນຕາຂອງຫຼາຍປະເທດມີຄວາມຜັນຜວນ ແລະ ອ່ອນຄ່າ ແລະ ໂຄງສ້າງສະພາບເສດຖະກິດຂອງ ສປປ ລາວ ຍັງຂາດຄວາມສົມດຸນທາງດ້ານການຜະລິດ ແລະ ການຊົມໃຊ້. ນອກນັ້ນ, ຄວາມອາດສາມາດໃນການສະໜອງເງິນຕາຕ່າງປະເທດຍັງຈຳກັດ ເຮັດໃຫ້ການຄຸ້ມຄອງອັດຕາເງິນເຟີ້ ແລະ ອັດຕາແລກປ່ຽນຍັງມີຄວາມຫຍຸ້ງຍາກ ເຊິ່ງ ເປັນສິ່ງທ້າທາຍຫຼາຍ ໃນການຄຸ້ມຄອງ. ທະນາຄານຮ່ວມພັດທະນາ ມະຫາຊົນ ໄດ້ຕັດສິນໃຈ ອອກຈຳໜ່າຍຮຸ້ນ ໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ຂອງທະນາຄານຮ່ວມພັດທະນາ ມະຫາຊົນ ເປັນການເປີດກວ້າງໃຫ້ແກ່ຜູ້ລົງທຶນທັງພາຍໃນ ແລະ ຕ່າງປະເທດໃນການເຂົ້າມາລົງທຶນ.

ການເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ ຍັງເປັນການສ້າງຄວາມເຊື່ອໝັ້ນໃຫ້ແກ່ລູກຄ້າ ແລະ ຜູ້ລົງທຶນທົ່ວໄປ ການທີ່ຈະເປັນບໍລິສັດຈົດທະບຽນໄດ້ນັ້ນ ທະນາຄານຮ່ວມພັດທະນາ ມະຫາຊົນ ຕ້ອງເປັນທະນາຄານ ທີ່ໄດ້ມາດຕະຖານສາກົນ ທີ່ຖືກຕ້ອງ ແລະ ສອດຄ່ອງຕາມເງື່ອນໄຂ ແລະ ມາດຕະຖານຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບລາວ. ເປັນການເປີດໂອກາດໃຫ້ແກ່ ບັນດາລູກຄ້າ, ພະນັກງານຂອງທະນາຄານຮ່ວມພັດທະນາ ມະຫາຊົນ ແລະ ມວນຊົນທົ່ວໄປໃນການເຂົ້າມາມີສ່ວນຮ່ວມ ຫຼື ເປັນເຈົ້າຂອງທະນາຄານຮ່ວມພັດທະນາ ມະຫາຊົນ ອີກດ້ວຍ, ທະນາຄານຮ່ວມພັດທະນາ ມະຫາຊົນ ໄດ້ພັດທະນາລະບົບເຄື່ອງມືຊຳລະສະສາງທັງພາຍໃນ ແລະ ຕ່າງປະເທດໃຫ້ທັນສະໄໝ, ຮັບປະກັນຄວາມປອດໄພ, ມີການເຜີຍແຜ່ຂໍ້ມູນຂ່າວສານໃຫ້ສັງຄົມໄດ້ຮັບຮູ້ຢ່າງເປັນປະຈຳ ແລະ ລູກຄ້າມາໃຊ້ບໍລິການ ທະນາຄານຮ່ວມພັດທະນາ ມະຫາຊົນ ນັບມື້ນັບຫຼາຍຂື້ນ.

Simultaneously, the economic situation of the Lao PDR in 2025 has undergone numerous reforms to support and strengthen the domestic economy. Notably, several sectors have implemented their policies in a more prudent direction, and the management of foreign exchange has been codified into law in a stricter direction.

The economy of the Lao PDR continues to face multifaceted challenges, including the international financial environment. Prolonged high policy interest rates maintained by major economies have caused the currencies of many nations to experience volatility and depreciation, and the structural economy of the Lao PDR still lacks balance between production and consumption. Additionally, the capacity to supply foreign currency remains limited, making the management of inflation and exchange rates difficult, which is a significant challenge for regulatory oversight. Joint Development Bank Public made the decision to launch the Initial Public Offering (IPO) of Joint Development Bank Public, opening up opportunities to attract both domestic and foreign investors.

Listing on the Lao Securities Exchange also builds confidence among general customers and investors. To become a listed company, Joint Development Bank Public must be a bank with proper international standards and comply with the conditions and standards of the Lao Securities Commission Office and the Lao Securities Exchange. This provides an opportunity for customers, employees of Joint Development Bank Public, and the general public to participate in or become owners of Joint Development Bank Public as well. Joint Development Bank Public has modernized its domestic and international payment and settlement systems, ensuring security, consistently disseminating information for public awareness, and seeing an increasing number of customers coming to use the services of Joint Development Bank Public day by day.

ທ້າຍສຸດນີ້ ຂ້າພະເຈົ້າ ຂໍອວຍໄຊໃຫ້ພອນ ແດ່ການນຳ ພັກ-ລັດ, ນັກທຸລະກິດພາຍໃນ ແລະ ຕ່າງປະເທດ, ລູກຄ້າຂອງທະນາຄານຮ່ວມພັດທະນາ ມະຫາຊົນ ທຸກທ່ານ ລວມທັງຜູ້ບໍລິຫານ ແລະ ພະນັກງານທັງໝົດທົ່ວປະເທດ ຈົ່ງມີສຸຂະພາບແຂງແຮງ, ມີອາຍຸໝັ້ນຍືນຍາວ ມີຜົນສຳເລັດໃນການປະຕິບັດໜ້າທີ່ວຽກງານ ແລະ ມີຄວາມຜາສຸກໃນຊີວິດ ຂອງທ່ານຕະຫຼອດໄປ.

In closing, I would like to extend my best wishes to the Party and State leadership, domestic and foreign business professionals, all customers of Joint Development Bank Public, as well as the entire management team and employees nationwide. May you be blessed with strong health, a long life, success in the performance of your duties, and enduring happiness in your life forever.

ປະທານສະພາບໍລິຫານ ທະນາຄານຮ່ວມພັດທະນາ ມະຫາຊົນ
ທ່ານ ວີໄລ ສີພະພອນ

Chairman of the Board of Directors of Joint Development Bank Public
Mr. Vilay SIPHAPHONE

ທະນາຄານຮ່ວມພັດທະນາ ມະຫາຊົນ

Joint Development Bank Public

联合发展公众银行



# ທ່ານ ສາຄອນ ຍໍພັນໄຊ

**Mr. Sakhone YORPHANXAY**

ຜູ້ອຳນວຍການ ທະນາຄານຮ່ວມພັດທະນາ ມະຫາຊົນ

General Director of Joint Development Bank Public

# ບົດປະກອບຄຳເຫັນ

**Speech of Mr. Sakhone YORPHANXAY**

**General Director of Joint Development Bank Public**

ສະພາບເສດຖະກິດຂອງລາວໃນປີ 2025 ຖືວ່າເປັນປີທີ່ເຕັມໄປດ້ວຍ "ສິ່ງທ້າທາຍທີ່ມາພ້ອມກັບກຳລັງແຮງໃໝ່". ອີງຕາມການຄາດຄະເນຈາກຫຼາຍພາກສ່ວນ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ລັດຖະບານລາວໄດ້ວາງເປົ້າໝາຍໃຫ້ເສດຖະກິດຂະຫຍາຍຕົວໃນລະດັບ 4,5 % ຫຼື ສູງກວ່າ ໃນປີ 2025. ໂດຍມີປັດໃຈຍູ້ດັນຫຼັກຈາກຂະແໜງບໍລິການ ແລະ ທ່ອງທ່ຽວ ທີ່ຍັງສືບຕໍ່ໄດ້ຮັບແຮງສົ່ງຈາກປີທ່ອງທ່ຽວລາວ 2024 ແລະ ການເຊື່ອມໂຍງກັບທາງລົດໄຟ ລາວ-ຈີນ. ການສົ່ງອອກໂດຍສະເພາະແມ່ນພະລັງງານໄຟຟ້າ ແລະ ຜະລິດຕະພັນກະສິກຳ, ການລົງທຶນຈາກຕ່າງປະເທດ ໃນຂະແໜງພະລັງງານສະອາດ ແລະ ບໍ່ແຮ່. ສິ່ງທ້າທາຍທີ່ຍັງຄົງຄ້າງ ເຖິງວ່າ GDP ຈະເຕີບໂຕ, ແຕ່ປະຊາຊົນຍັງຕ້ອງປະເຊີນກັບຄວາມກົດດັນທາງດ້ານການເງິນ, ອັດຕາເງິນເຟີ້ ທີ່ຍັງເປັນບັນຫາໃຫຍ່ທີ່ລັດຖະບານພະຍາຍາມຄວບຄຸມໃຫ້ລົງມາຢູ່ໃນລະດັບເລກຕົວດຽວ (ເຊິ່ງເປັນວຽກທີ່ທ້າທາຍຫຼາຍ). ຄວາມຜັນຜວນຂອງອັດຕາແລກປ່ຽນຍັງສົ່ງຜົນກະທົບໂດຍກົງຕໍ່ລາຄາສິນຄ້າອຸປະໂພກ-ບໍລິໂພກ ທີ່ສ່ວນໃຫຍ່ແມ່ນນຳເຂົ້າຈາກຕ່າງປະເທດ. ການບໍລິຫານຈັດການໜີ້ສິນຍັງເປັນບຸລິມະສິດສູງສຸດເພື່ອຮັກສາສະຖຽນລະພາບທາງການເງິນຂອງປະເທດ.

The economic situation of Laos in 2025 is considered a year full of "challenges accompanied by new momentum." Based on forecasts from various sectors and the National Socio-Economic Development Plan, the Lao government has set a target for economic growth at a rate of 4.5% or higher in 2025. The primary driving factors are the service and tourism sectors, which continue to receive momentum from Visit Laos Year 2024 and integration with the Laos-China Railway. Other drivers include exports, particularly of electricity and agricultural products, and foreign direct investment in the clean energy and mining sectors. Remaining challenges: Despite GDP growth, the public still faces financial pressure. Inflation remains a major issue that the government is attempting to control and bring down to a single-digit level (which is a highly challenging task). Exchange rate volatility also continues to have a direct impact on the prices of consumer goods, the majority of which are imported from abroad. Debt management remains a top priority in order to maintain the country's financial stability.

ທະນາຄານຮ່ວມພັດທະນາ ມະຫາຊົນ (JDB) ໄດ້ເປີດການຊື້-ຂາຍຮຸ້ນຢ່າງເປັນທາງການ, ພາຍຫຼັງ ປະສົບຜົນສຳເລັດໃນການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ຈຳນວນ 75,333,900 ຮຸ້ນ, ລາຄາ 8,800 ກີບ/ຮຸ້ນ ແລະ ສາມາດລະດົມທຶນໄດ້ 656,158,260,000 ກີບ ຫຼື ປະມານ 30ລ້ານໂດລາ. ລ່າສຸດ, ການເປີດຂາຍຮຸ້ນຄັ້ງທຳອິດຂອງ ທະນາຄານຮ່ວມພັດທະນາ ມະຫາຊົນ (JDB) ໃນຕອນເຊົ້າຂອງວັນທີ 10 ຕຸລາ 2025 ເຮັດໃຫ້ລາຄາປັບຕົວເພີ່ມຂຶ້ນຢູ່ທີ່ 9,100 ກີບ/ຮຸ້ນ, ສົ່ງຜົນໃຫ້ພາບລວມຂອງທຸລະກິດ ແລະ ຜູ້ຊື້ຮຸ້ນມີກຳໄລເພີ່ມຂຶ້ນຫຼາຍສົມຄວນ. ທະນາຄານຮ່ວມພັດທະນາ ມະຫາຊົນ (JDB) ເປັນທະນາຄານທຸລະກິດເອກະຊົນທີ່ນຳໜ້າໃນ ສປປ ລາວ. ໄດ້ສຳເລັດຕໍ່ IPO ທີ່ໄດ້ຂາຍໄປ, ນີ້ແມ່ນການອອກຈຳໜ່າຍຮຸ້ນທີ່ມີຂະໜາດໃຫຍ່ທີ່ສຸດໃນຕະຫຼາດຫຼັກຊັບລາວໃນຊ່ວງຫຼາຍປີທີ່ຜ່ານມາ ແລະ ເປັນການສະທ້ອນໃຫ້ເຫັນເຖິງຄວາມໄວ້ວາງໃຈຂອງຕະຫຼາດຕໍ່ທະນາຄານຮ່ວມພັດທະນາ ມະຫາຊົນ (JDB) ແລະ ທັງເປັນບາດກ້າວໃໝ່ ທີ່ສະແດງໃຫ້ເຫັນເຖິງການເປີດກວ້າງ ແລະ ກ້າວເປັນທັນສະໄໝໃນລະດັບໜຶ່ງຂອງລະບົບການເງິນປະເທດ.

ທະນາຄານຮ່ວມພັດທະນາ ມະຫາຊົນ (JDB) ໄດ້ເປີດກອງປະຊຸມ ຜູ້ຖືຮຸ້ນ ແລະ ໄດ້ພິຈາລະນາ ຮັບຮອງການຈັດສັນກຳໄລຫຼັງອາກອນ ປະຈຳປີ 2024 ເພື່ອຈ່າຍເຂົ້າຄັງຕ່າງໆ ຕາມລະບຽບ ແລະ ຈ່າຍເງິນປັນຜົນໃຫ້ກັບຜູ້ຖືຮຸ້ນ ເຊິ່ງມີລາຍລະອຽດດັ່ງນີ້ :

- ກຳໄລສຸດທິ : 741,260,968,798 ກີບ;
- ຫັກເງິນແຮ່(ຕາມລະບຽບການ ): 74,126,096,880 ກີບ;
- ຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນທັງໝົດ : 660,000,000,000 ກີບ;
- ຄັງຂະຫຍາຍ: 7,134,871,918 ກີບ;
- ຈຳນວນຮຸ້ນທັງໝົດ: 750,000,000 ຮຸ້ນ;
- ຈ່າຍເງິນ ປັນຜົນ: 880 ກີບ/ຮຸ້ນ;
- ມື້ຈ່າຍເງິນປັນຜົນ: 25 ທັນວາ 2025 ທີ່ຜ່ານມານີ້.

Joint Development Bank Public (JDB) has officially commenced share trading, following the successful Initial Public Offering (IPO) of 75,333,900 shares at a price of 8,800 LAK/share, successfully raising 656,158,260,000 LAK, or approximately 30 million USD. Most recently, the first day of trading for Joint Development Bank Public (JDB) shares on the morning of October 10, 2025, saw the price adjust upward to 9,100 LAK/share, resulting in a considerable profit increase for the overall business and shareholders. Joint Development Bank Public (JDB) is a leading private commercial bank in the Lao PDR. The successful completion of this IPO represents the largest share issuance on the Lao Securities Exchange in recent years. It reflects the market's trust in Joint Development Bank Public (JDB) and marks a new milestone that demonstrates the expanding openness and modernization of the country's financial system.

Joint Development Bank Public (JDB) convened a shareholders' meeting and considered and approved the allocation profit after tax for the year 2024 to various reserves in accordance with regulations, and the payment of dividends to shareholders, with the following details:

- Net Profit: 741,260,968,798 LAK;
- Deduction for Reserves (as per regulations): 74,126,096,880 LAK;
- Total Dividend Payment to Shareholders: 660,000,000,000 LAK;
- Expansion Fund: 7,134,871,918 LAK;
- Total Number of Shares: 750,000,000 shares;
- Dividend Payment: 880 LAK/share;
- Dividend Payment Date: 25 December 2025.

ຂ້າພະເຈົ້າ ຂໍສະແດງຄວາມຂອບໃຈເປັນຢ່າງສູງ ມາຍັງ ການນຳ ພັກ-ລັດ ໂດຍສະເພາະ ທະນາຄານແຫ່ງ ສປປ ລາວ ທີ່ໄດ້ໃຫ້ທິດຊີ້ນຳຢ່າງໃກ້ສິດ ຕິດແທດ ເພື່ອພັດທະນາ ທະນາຄານຮ່ວມພັດທະນາ ມະຫາຊົນ (JDB) ໃຫ້ທັນສະໄໝ, ທະນາຄານຮ່ວມພັດທະນາ ມະຫາຊົນ (JDB) ໄດ້ປ່ຽນແປງຮູບແບບການບໍລິຫານ ຢ່າງມືອາຊີບ ເຊິ່ງໄດ້ເອົາໃຈໃສ່ ວຽກງານການບໍລິການ ໃຫ້ເປັນທີ່ປະທັບໃຈຂອງລູກຄ້າທຸກລະດັບ, ເຮັດໃຫ້ ທະນາຄານຮ່ວມພັດທະນາ ມະຫາຊົນ (JDB) ກາຍເປັນທະນາຄານ ທີ່ທັນສະໄໝ ໄດ້ມາດຕະຖານສາກົນ, ບໍລິການລູກຄ້າທຸກລະດັບຢ່າງປະທັບໃຈ.

ຂ້າພະເຈົ້າ ຂໍຕາງໜ້າໃຫ້ແກ່ຄະນະຜູ້ບໍລິຫານ ພ້ອມດ້ວຍພະນັກງານທຸກຄົນ ສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນເປັນຢ່າງສູງ ແລະ ຂໍອວຍພອນໄຊອັນປະເສີດ ໃຫ້ແກ່ລູກຄ້າທີ່ມາໃຊ້ບໍລິການທຸກໆທ່ານ ຈົ່ງປະສົບຜົນສຳເລັດຕໍ່ໜ້າທີ່ການງານຂອງທ່ານ ປາສະຈາກພະຍາດໂລຄາ ແລະ ສຸຂະພາບແຂງແຮງດີ.

I would like to express my deepest gratitude to the Party and State leadership, particularly the Bank of the Lao PDR, for providing close guidance for the modernization of Joint Development Bank Public (JDB). Joint Development Bank Public (JDB) has transformed its management model professionally, focusing on the work of customer service to ensure an impressive experience for our customers at all levels, as well as meeting international standards and exceptional service delivery to our customers.

On behalf of the Executive Management team and all employees, I would like to express our deepest gratitude and appreciation. I extend my best wishes to all customers who utilize our services; may you achieve continued success in your professional endeavors and enjoy excellent health.

ຜູ້ອຳນວຍການໃຫຍ່ ທະນາຄານຮ່ວມພັດທະນາ ມະຫາຊົນ
ທ່ານ ສາຄອນ ຍໍພັນໄຊ

General Director of Joint Development Bank Public
Mr. Sakhone YORPHANXAY

# Financial Highlight

| | 2017 | 2018 | 2019 | 2020 | 2021 | 2022 | 2023 | 2024 | 2025 |
|---|---|---|---|---|---|---|---|---|---|
| **Asset** | 2,889,413 | 3,632,186 | 5,018,043 | 7,679,049 | 10,970,251 | 17,649,864 | 26,083,248 | 33,144,411 | 43,783,399 |
| **Deposit to customers** | 2,356,742 | 2,925,232 | 4,240,095 | 5,945,355 | 8,727,580 | 14,140,149 | 21,867,163 | 27,476,248 | 37,439,881 |
| **Loan** | 1,913,425 | 2,190,461 | 3,314,709 | 4,595,516 | 7,566,039 | 11,977,808 | 16,637,986 | 20,548,354 | 25,021,933 |




| | 2017 | 2018 | 2019 | 2020 | 2021 | 2022 | 2023 | 2024 | 2025 |
|---|---|---|---|---|---|---|---|---|---|
| **Revenues** | 308,455 | 278,890 | 356,325 | 505,037 | 726,306 | 1,308,655 | 2,047,797 | 3,050,320 | 3,481,002 |
| **Expenses** | 302,177 | 271,052 | 316,663 | 419,353 | 592,116 | 1,027,226 | 1,537,494 | 2,309,059 | 2,762,924 |
| **Profit** | 6,278 | 7,838 | 39,662 | 85,684 | 134,190 | 281,429 | 510,303 | 741,261 | 718,078 |



# ຄະນະອຳນວຍການ ທະນາຄານຮ່ວມພັດທະນາ ມະຫາຊົນ

## Board of Management of Joint Development Bank Public






## ເຕີບໃຫຍ່ໄປພ້ອມກັນ

## BLOOMING TOGETHER

# ສະພາບໍລິຫານ ທະນາຄານຮ່ວມພັດທະນາ ມະຫາຊົນ

## Board of Directors of Joint Development Bank Public



**ທ່ານ ວິໄລ ສີພະພອນ**

**Mr. Vilay SIPHAPHONE**

ປະທານສະພາບໍລິຫານ

**The Executive Board of Director**



**ທ່ານ ນາງ ພອນສະໄໝ ສຸກຂະພົນ**

**Mrs. Phonesamay SOUKHAPHON**

ຮອງປະທານ ສະພາບໍລິຫານ

**Deputy Executive Board of Director**



**ທ່ານ ສາຄອນ ຍໍພັນໄຊ**

**Mr. Sakhone YORPHANXAY**

ສະມາຊິກ ສະພາບໍລິຫານ

**Executive Board Member**



**ທ່ານ ຄຳສິງ ສອນສິນນະວົງ**

**Mr. Khamsing SONESINNAVONG**

ສະມາຊິກ ສະພາບໍລິຫານ

**Executive Board Member**



**ທ່ານ ວິລັນເດດ ໄວຍະສົມສັກ**

**Mr. Vilandeth VAYASOMSAK**

ສະມາຊິກ ສະພາບໍລິຫານ

**Executive Board Member**



**ທ່ານ ວິສູດ ບົວສີສະອາດ**

**Mr. Visoud BUASISAARD**

ສະມາຊິກ ສະພາບໍລິຫານ

**Executive Board Member**



**ທ່ານ ບຸນຊຸ່ມ ສີສະຫວັດ**

**Mr. Bounsoum SISAVAT**

ສະມາຊິກ ສະພາບໍລິຫານ ຈາກພາຍນອກ

**Non-Executive Board Member**



**ທ່ານ ສຸກສະຫວັນ ມະນີວັນ**

**Mr. Souksavanh MANIVANH**

ສະມາຊິກ ສະພາບໍລິຫານ ຈາກພາຍນອກ

**Non-Executive Board Member**



**ທ່ານ ປອ. ຈອມຄຳ ບຸບຜາລີວັນ**

**Mr. Chomkham BOUPHALLIVANH**

ສະມາຊິກ ສະພາບໍລິຫານ ຈາກພາຍນອກ

**Non-Executive Board Member**

# ຄະນະອຳນວຍການ ທະນາຄານຮ່ວມພັດທະນາ ມະຫາຊົນ

## Board of Management of Joint Development Bank Public



**ທ່ານ ສາຄອນ ຍໍພັນໄຊ**
**Mr. Sakhone YORPHANXAY**
ຜູ້ອຳນວຍການ
**Managing Director**



**ທ່ານ ວິລັນເດດ ໄວຍະສົມສັກ**
**Mr. Vilandeth VAYASOMSAK**
ຮອງອຳນວຍການ
**Deputy Managing Director**



**ທ່ານ ຈັນຊະນະ ສິງຫາວົງ**
**Mr. Chansana SINGHAVONG**
ຮອງອຳນວຍການ
**Deputy Managing Director**



**ທ່ານ ຈັນທະພອນ ຈັນທະວົງ**
**Mr. Chanthaphone CHANTHAVONG**
ຮອງອຳນວຍການ
**Deputy Managing Director**



**ທ່ານ ນາງ ຄອນສະຫວັນ ວິຊາເທບ**
**Mrs. Khonesavahn VISATHEP**
ຮອງອຳນວຍການ
**Deputy Managing Director**



**ທ່ານ ໄຊ ບູລົມມະວົງ**
**Mr. Xay BOULOMMAVONG**
ຮອງອຳນວຍການ
**Deputy Managing Director**



**ທ່ານ ວິລະພົງ ພິຈິດ**
**Mr. Vilaphong PHICHIT**
ຮອງອຳນວຍການ
**Deputy Managing Director**



**ທ່ານ ນາງ ນິດຕາ ນາມມະວົງ**
**Mrs. Nitta NAMMAVONG**
ຮອງອຳນວຍການ
**Deputy Managing Director**

# ຄະນະກຳມະການ ຄຸ້ມຄອງບໍລິຫານ
## Stretegy & Governance Comittee



**ທ່ານ ວິລັນເດດ ໄວຍະສົມສັກ**
**Mr. Vilandeth VAYASOMSAK**
ປະທານຄະນະກຳມະການ
**Head of Committee**



**ທ່ານ ນາງ ພອນສະໄໝ ສຸກາຂະຜົນ**
**Mrs. Phonesamay SOUKHAPHON**
ຄະນະກຳມະການ
**Committee Member**



**ທ່ານ ຄຳສິງ ສອນສິນນະວົງ**
**Mr. Khamsing SONESINNAVONG**
ຄະນະກຳມະການ
**Committee Member**

**ເຕີບໃຫຍ່ໄປພ້ອມກັນ**
**BLOOMING TOGETHER**



**ທ່ານ ວິສູດ ບົວສີສະອາດ**
**Mr. Visoud BUASISAARD**
ປະທານຄະນະກຳມະການ
**Head of Committee**



**ທ່ານ ສາຄອນ ຍໍພັນໄຊ**
**Mr. Sakhone YORPHANXAY**
ຄະນະກຳມະການ
**Committee Member**



**ທ່ານ ບຸນຊຸ່ມ ສີສະຫວັດ**
**Mr. Bounsoum SISAVAT**
ຄະນະກຳມະການ
**Committee Member**

**ເຕີບໃຫຍ່ໄປພ້ອມກັນ**
**BLOOMING TOGETHER**

# ຄະນະກຳມະການ ກວດສອບພາຍໃນ
## Audit Comittee



**ທ່ານ ສຸກສະຫວັນ ມະນີວັນ**
**Mr. Souksavanh MANIVANH**
ປະທານຄະນະກຳມະການ
**Head of Committee**



**ທ່ານ ວິສູດ ບົວສີສະອາດ**
**Mr. Visoud BUASISAARD**
ຄະນະກຳມະການ
**Committee Member**



**ທ່ານ ປອ. ຈອມຄຳ ບຸບຜາລີວັນ**
**Mr. Chomkham BOUPHALLIVANH**
ຄະນະກຳມະການ
**Committee Member**

**ເຕີບໃຫຍ່ໄປພ້ອມກັນ**
**BLOOMING TOGETHER**

ເລກທີ: 578 /ທຄຮ.2025
ນະຄອນຫຼວງວຽງຈັນ, ວັນທີ: 28 OCT 2025

# ໂຄງຮ່າງການຈັດຕັ້ງ
# ທະນາຄານຮ່ວມພັດທະນາ ມະຫາຊົນ




**ທະນາຄານຮ່ວມພັດທະນາ ມະຫາຊົນ**
**ຜູ້ອຳນວຍການ**

ແຂວງ ສປປ ລາວ ທະນາຄານ ຮ່ວມພັດທະນາ ມະຫາຊົນ JOINT DEVELOPMENT BANK Public ນະຄອນ ຫຼວງ ວຽງຈັນ

**ສາຄອນ ຍໍພັນໄຊ**

# Organizational Chart
# Joint Development Bank Public (JDB)

Ref No: 578 /JDB.2025
Vientiane Cap., Date: 28 OCT 2025




**Joint Development Bank Public**
**Managing Director**

Sakhone YORPHANXAY

# ສະຫຼຸບຜົນການດຳເນີນທຸລະກິດ ປີ 2025
## Annual Business Performance Report for 2025




## I ພາບລວມເສດຖະກິດໂລກ \ Global Economy in 2025

ສະພາບເສດຖະກິດໂລກໃນປີ 2025 ເປັນໄລຍະຂອງການປັບຕົວຫຼັງຈາກທີ່ຜ່ານສະພາວະເງິນເຟີ້ສູງໃນຊ່ວງປີ 2025. ເຖິງວ່າຈະມີສັນຍານທີ່ດີຂຶ້ນໃນບາງດ້ານ, ແຕ່ກໍ່ຍັງມີຄວາມສ່ຽງທີ່ຕ້ອງຈັບຕາເບິ່ງຢ່າງໃກ້ຊິດ (ນີ້ຄືສະຫຼຸບຈຸດສຳຄັນຂອງເສດຖະກິດໂລກໃນປີ 2025).

1. ການເຕີບໂຕທີ່ຄ່ອຍເປັນຄ່ອຍໄປ

ອົງການການເງິນລະຫວ່າງປະເທດ (IMF) ແລະ ທະນາຄານໂລກຄາດການວ່າເສດຖະກິດໂລກຈະເຕີບໂຕໃນລະດັບປະມານ 3.2%, ເຊິ່ງຖືວ່າເປັນການເຕີບໂຕທີ່ຄົງທີ່, ບັນດາປະເທດພັດທະນາແລ້ວເຊັ່ນ: ສະຫະລັດອາເມລິກາ ແລະ ເອີຣົບ ອາດຈະມີການເຕີບໂຕທີ່ຊ້າລົງຍ້ອນຜົນກະທົບຈາກດອກເບ້ຍທີ່ສູງໃນໄລຍະຜ່ານມາ. ປະເທດທີ່ກຳລັງພັດທະນາ: ໂດຍສະເພາະໃນອາຊີ (ອິນເດຍ ແລະ ອາຊຽນ) ຍັງຄົງເປັນຕົວຂັບເຄື່ອນຫຼັກຂອງເສດຖະກິດໂລກ.

2. ທິດທາງດອກເບ້ຍ ແລະ ເງິນເຟີ້

ເງິນເຟີ້ເລີ່ມຫຼຸດລົງຫຼາຍປະເທດສາມາດຄວບຄຸມເງິນເຟີ້ໃຫ້ເຂົ້າໃກ້ລະດັບເປົ້າໝາຍໄດ້ແລ້ວ. ການປັບຫຼຸດດອກເບ້ຍ ທະນາຄານກາງຂອງແຕ່ລະປະເທດ (ໂດຍສະເພາະ FED ຂອງສະຫະລັດ) ເລີ່ມມີນະໂຍບາຍປັບຫຼຸດອັດຕາດອກເບ້ຍລົງ ເພື່ອຊ່ວຍກະຕຸ້ນການລົງທຶນ ແລະ ການບໍລິໂພກ.

3. ປັດໃຈຄວາມສ່ຽງທີ່ຕ້ອງລະວັງ

ເຖິງຈະມີສັນຍານບວກ, ແຕ່ກໍ່ຍັງມີ "ແຮງຕ້ານ" ທີ່ສຳຄັນຄວາມຂັດແຍ່ງທາງພູມສາດ: ສົງຄາມໃນຢູເຄຣນ ແລະ ຕາເວັນອອກກາງ ຍັງສົ່ງຜົນກະທົບຕໍ່ລາຄາພະລັງງານ ແລະ ຕ່ອງໂສ້ການສະໜອງ. ໄພສົງຄາມສົ່ງຜົນກະທົບຕໍ່ເສດຖະກິດໂລກໃນຫຼາຍມິຕິ ໂດຍສະເພາະໃນຍຸກປະຈຸບັນທີ່ລະບົບເສດຖະກິດມີຄວາມເຊື່ອມໂຍງກັນສູງ (Globalization) ເຫັນໄດ້ຊັດເຈນ ດັ່ງນີ້:

The global economic situation in 2025 represents a period of adjustment following the high inflation environment experienced during 2025. Although there are positive signals in certain areas, there remain risks that must be monitored closely (here is a summary of the key highlights of the global economy in 2025).

1. Gradual Growth

The International Monetary Fund (IMF) and the World Bank estimates that the global economy will grow at approximately 3.2%, which is considered steady growth. Developed countries: such as the United States and Europe may experience slower growth due to the lingering effects of high interest rates from the previous period.

Developing countries: particularly in Asia (India and ASEAN) remain the primary engines driving the global economy.

2. Interest Rate and Inflation Trends

Inflation is beginning to decline and many countries have successfully managed to control inflation, bringing it closer to target levels. Interest rate reductions: central banks in various countries (especially the FED of the United State ) are initiating policies to cut interest rates to help stimulate investment and consumption.

3. Risk Factors

Despite positive signals, significant "headwinds" persist. Geopolitical conflicts: the wars in Ukraine and the Middle East continue to impact energy prices and supply chains.

The threat of war affects the global economy in multiple dimensions, especially in the current era where economic systems are highly interconnected (Globalization), as clearly seen below:

3.1 ວິກິດການດ້ານພະລັງງານ ແລະ ສິນຄ້າອຸປະໂພກ

ສົງຄາມມັກເກີດຂຶ້ນໃນເຂດທີ່ມີຊັບພະຍາກອນສຳຄັນ ຫຼື ເປັນເສັ້ນທາງຂົນສົ່ງ: ລາຄານ້ຳມັນ ແລະ ກ໊າສ (Gas), ເມື່ອມີຄວາມບໍ່ສະຫງົບ, ລາຄາພະລັງງານຈະພຸ່ງສູງຂຶ້ນທັນທີ ເຊິ່ງສົ່ງຜົນກະທົບຕໍ່ຕົ້ນທຶນການຜະລິດ ແລະ ການຂົນສົ່ງທົ່ວໂລກ. ຄວາມໝັ້ນຄົງທາງອາຫານ: ຫາກສົງຄາມເກີດໃນປະເທດຜູ້ຜະລິດກະສິກຳລາຍໃຫຍ່ (ເຊັ່ນ: ເຂົ້າ, ປຸ໋ຍ), ຈະເຮັດໃຫ້ລາຄາອາຫານໂລກແພງຂຶ້ນ ແລະ ເກີດການຂາດແຄນໃນບາງພື້ນທີ່.

3.2 ອັດຕາເງິນເຟີ້ ແລະ ຄ່າຄອງຊີບ

ເມື່ອຕົ້ນທຶນການຜະລິດ (ພະລັງງານ ແລະ ວັດຖຸດິບ) ສູງຂຶ້ນ, ຜູ້ຜະລິດກໍ່ຕ້ອງຂຶ້ນລາຄາສິນຄ້າ. ອັດຕາເງິນເຟີ້ຈະເພີ່ມສູງຂຶ້ນທົ່ວໂລກ, ເຮັດໃຫ້ທະນາຄານກາງຫຼາຍປະເທດຕ້ອງຂຶ້ນອັດຕາດອກເບ້ຍ (Interest Rates) ເພື່ອຄວບຄຸມເງິນເຟີ້, ເຊິ່ງອາດສົ່ງຜົນໃຫ້ເສດຖະກິດຊະລໍຕົວ.

3.3 ການຢຸດສະງັກຂອງສາຍໂສ້ການຜະລິດ (Supply Chain Disruption)

ການປິດນ່ານຟ້າ, ເສັ້ນທາງເດີນເຮືອ ຫຼື ການຂວ້ຳບາດທາງເສດຖະກິດ ເຮັດໃຫ້ການສົ່ງອອກ-ນຳເຂົ້າສິນຄ້າ ແລະ ຊິ້ນສ່ວນອຸດສາຫະກຳຕ່າງໆ ລ່າຊ້າ ຫຼື ຢຸດສະງັກ.

3.4 ຄວາມຜັນຜວນຂອງຕະຫຼາດເງິນຕາ ແລະ ການລົງທຶນ

ຄວາມເຊື່ອໝັ້ນ: ນັກລົງທຶນຈະເກີດຄວາມບໍ່ໝັ້ນໃຈ ແລະ ຍ້າຍເງິນທຶນອອກຈາກສິນຊັບທີ່ມີຄວາມສ່ຽງ (ເຊັ່ນ: ຕະຫຼາດຮຸ້ນໃນປະເທດທີ່ໃກ້ຄຽງ) ໄປສູ່ສິນຊັບທີ່ປອດໄພກວ່າ ເຊັ່ນ: ຄຳ ຫຼື ສະກຸນເງິນໂດລາສະຫະລັດ.

ຄ່າເງິນ: ສົ່ງຜົນໃຫ້ຄ່າເງິນຂອງຫຼາຍປະເທດອ່ອນຄ່າລົງ ເມື່ອທຽບກັບສະກຸນເງິນຫຼັກ.

3.5. ງົບປະມານ ແລະ ໜີ້ສິນສາທາລະນະ

ລັດຖະບານຕ້ອງເພີ່ມງົບປະມານດ້ານປ້ອງກັນຊາດ ແລະ ການຊ່ວຍເຫຼືອມະນຸດສະທຳ. ເງິນງົບປະມານທີ່ຄວນຈະເອົາມາໃຊ້ພັດທະນາໂຄງລ່າງພື້ນຖານ, ການສຶກສາ ຫຼື ສາທາລະນະສຸກ ພັດຖືກນຳໄປໃຊ້ໃນຈຸດປະສົງທາງການທະຫານແທນ.

3.6 ການຍົກຍ້າຍຖິ່ນຖານ ແລະ ແຮງງານ

ສົງຄາມເຮັດໃຫ້ເກີດມີຜູ້ລີ້ໄພຈຳນວນມະຫາສານ, ເຊິ່ງສ້າງແຮງກົດດັນດ້ານງົບປະມານ ແລະ ຊັບພະຍາກອນໃຫ້ກັບປະເທດທີ່ຮັບຮອງ, ແຕ່ໃນໄລຍະຍາວກໍ່ອາດຈະເປັນການເພີ່ມກຳລັງແຮງງານໃນບາງຂະແໜງການ.
ການເລືອກຕັ້ງ ແລະ ນະໂຍບາຍການຄ້າ: ການປ່ຽນແປງຜູ້ນຳໃນຫຼາຍປະເທດມະຫາອຳນາດ ອາດນຳໄປສູ່ການຕັ້ງກຳແພງພາສີ ຫຼື ສົງຄາມການຄ້າຄັ້ງໃໝ່.

ໜີ້ສິນສາທາລະນະ: ຫຼາຍປະເທດມີລະດັບໜີ້ສິນທີ່ສູງຫຼາຍ ເຮັດໃຫ້ມີງົບປະມານຈຳກັດໃນການພັດທະນາ.

ເຕັກໂນໂລຊີ ແລະ ພະລັງງານສະອາດ AI Revolution: ການນຳໃຊ້ AI ເຂົ້າໃນລະບົບເສດຖະກິດເລີ່ມສົ່ງຜົນຕໍ່ປະສິດທິພາບການຜະລິດ (Productivity) ຢ່າງເຫັນໄດ້ຊັດເຈນ.

Green Economy: ການລົງທຶນໃນພະລັງງານທົດແທນຍັງຄົງເປັນທ່າອ່ຽງຫຼັກ ເນື່ອງຈາກຂໍ້ກຳນົດດ້ານສິ່ງແວດລ້ອມທີ່ເຂັ້ມງວດຂຶ້ນ.

3.1 Energy and Consumer Goods Crises

Wars often occur in areas with vital resources or along key transportation routes: Oil and gas prices: when instability arises, energy prices surge immediately, which in turn affects production and transportation costs worldwide.

Food security: If a war breaks out in a major agricultural producing country (e.g., affecting rice/grain, fertilizers), it will drive up global food prices and cause shortages in certain regions.

3.2 Inflation and Cost of Living

When production costs (energy and raw materials) rise, producers must increase the prices of goods. Inflation rates will surge globally, compelling central banks in many countries to raise interest rate to control inflation, which may result in an economic slowdown.

3.3 Supply Chain Disruption

Closures of airspace, shipping routes, or economic sanctions cause delays or stagnation in the export and import of goods and various industrial components.

3.4 Currency Market and Investment Volatility

Confidence: Investors will lose confidence and shift capital away from risky assets (e.g., stock markets in neighboring countries) toward safer assets, such as gold or the US dollar.
Currency Value: This results in the depreciation of many countries' currencies against major currencies.

3.5 Public Budget and Debt

Governments must increase budgets for national defense and humanitarian aid. Budgetary funds that should be utilized for developing infrastructure, education, or public health are instead diverted toward military purposes.

3.6 Migration and Labor

Wars generate a massive number of refugees, creating budgetary and resource pressures on host countries; however, in the long term, this may augment the labor force in certain sectors.

Elections and Trade Policies: Leadership changes in major global powers may lead to the imposition of tariff barriers or new trade wars.

Public Debt: Many countries have exceptionally high levels of debt, resulting in limited budgets for development.

Technology and Clean Energy - AI Revolution: The integration of AI into the economic system has begun to visibly impact productivity.

Green Economy: Investments in renewable energy remain a primary trend due to increasingly stringent environmental regulations.

ຖືວ່າຢູ່ໃນໄລຍະທີ່ມີທັງໂອກາດ ແລະ ສິ່ງທ້າທາຍ ທີ່ໜ້າຕິດຕາມຫຼາຍ. ອີງຕາມການຄາດຄະເນຈາກຫຼາຍພາກສ່ວນ ລວມທັງທະນາຄານໂລກ (World Bank) ແລະ ອົງການຈັດຕັ້ງພາຍໃນ, ສາມາດສະຫຼຸບຈຸດສຳຄັນໄດ້ດັ່ງນີ້:

1. ການຂະຫຍາຍຕົວຂອງ GDP

ຄາດວ່າເສດຖະກິດລາວໃນປີ 2025 ຈະຂະຫຍາຍຕົວຢູ່ໃນລະດັບ 4.0% ຫາ 4.5%. ປັດໃຈຫຼັກທີ່ຊຸກຍູ້ແມ່ນ: ຂະແໜງບໍລິການ ແລະ ທ່ອງທ່ຽວ: ຍັງເປັນຕົວຂັບເຄື່ອນຫຼັກ ຍ້ອນການເຊື່ອມໂຍງຂອງລົດໄຟ ລາວ-ຈີນ ແລະ ການເປີດປະເທດຢ່າງເຕັມຮູບແບບ.

ການສົ່ງອອກ: ໂດຍສະເພາະພະລັງງານໄຟຟ້າ ແລະ ຜະລິດຕະພັນກະສິກຳ. ການລົງທຶນຈາກຕ່າງປະເທດ ໃນຂະແໜງບໍ່ແຮ່ ແລະ ພະລັງງານສະອາດ.

2. ສິ່ງທ້າທາຍທີ່ຍັງຄົງຄ້າງ

ເຖິງວ່າ GDP ຈະເຕີບໂຕ, ແຕ່ລາວຍັງຕ້ອງຜະເຊີນກັບບັນຫາໂຄງສ້າງທີ່ໜັກໜ່ວງ:

- ອັດຕາເງິນເຟີ້: ຍັງຢູ່ໃນລະດັບສູງ ເຖິງວ່າຈະມີທ່າອ່ຽງຫຼຸດລົງເລັກໜ້ອຍເມື່ອທຽບກັບປີ 2023-2024 ແຕ່ກໍ່ຍັງສົ່ງຜົນກະທົບຕໍ່ຄ່າຄອງຊີບ.
- ຄ່າເງິນກີບ: ຄວາມຜັນຜວນຂອງອັດຕາແລກປ່ຽນຍັງເປັນປັດໃຈສ່ຽງທີ່ເຮັດໃຫ້ລາຄາສິນຄ້ານຳເຂົ້າສູງຂຶ້ນ.
- ໜີ້ສິນຕ່າງປະເທດ: ການບໍລິຫານຈັດການໜີ້ສິນຍັງເປັນບຸລິມະສິດສູງສຸດຂອງລັດຖະບານ ເພື່ອຮັກສາສະຖຽນລະພາບທາງການເງິນ.

3. ຈຸດສຸມຂອງລັດຖະບານໃນປີ 2025

ໃນປີນີ້, ລັດຖະບານລາວໄດ້ວາງມາດຕະການເຂັ້ມງວດໃນຫຼາຍດ້ານ:

- ການຫັນເປັນທັນສະໄໝ: ການນຳໃຊ້ລະບົບດິຈິຕອນເຂົ້າໃນການເກັບລາຍຮັບ ແລະ ຄຸ້ມຄອງງົບປະມານ.
- ການສົ່ງເສີມການຜະລິດພາຍໃນ: ເພື່ອຫຼຸດຜ່ອນການນຳເຂົ້າ ແລະ ສ້າງຄວາມເຂັ້ມແຂງໃຫ້ SME.

ການແກ້ໄຂບັນຫາເງິນຕາ: ເພີ່ມທະວີການຄວບຄຸມການໄຫຼເຂົ້າ-ອອກຂອງເງິນຕາຕ່າງປະເທດຜ່ານລະບົບທະນາຄານ, ເຖິງແນວໃດກໍ່ຕາມໃນປີ 2025 ມີທ່າອ່ຽງປັບຕົວດີຂຶ້ນຢ່າງຈະແຈ້ງ ເມື່ອທຽບກັບໄລຍະ 2-3 ປີຜ່ານມາ ໂດຍມີຕົວຊີ້ບອກທີ່ສຳຄັນດັ່ງນີ້:

3.1 ການເຕີບໂຕຂອງ GDP

- ອັດຕາການຂະຫຍາຍຕົວ: ຄາດຄະເນວ່າເສດຖະກິດຈະເຕີບໂຕຢູ່ໃນລະດັບ 3.7% ຫາ 4.8%.
- ຂະແໜງການຫຼັກ: ຂະແໜງ ບໍລິການ ແລະ ການທ່ອງທ່ຽວ ເປັນຕົວຂັບເຄື່ອນຫຼັກ ເຊິ່ງຄາດວ່າຈະຂະຫຍາຍຕົວເຖິງ 4.5%. ນອກຈາກນີ້, ຂະແໜງອຸດສາຫະກຳພະລັງງານ (ໄຟຟ້າ) ແລະ ການຂຸດຄົ້ນບໍ່ແຮ່ ກໍ່ຍັງຮັກສາຈັງຫວະການເຕີບໂຕໄດ້ດີ.

3.2 ສະຖຽນລະພາບທາງດ້ານເງິນຕາ ແລະ ອັດຕາເງິນເຟີ້

- ອັດຕາເງິນເຟີ້ຫຼຸດລົງ: ມີທ່າອ່ຽງຫຼຸດລົງຢ່າງຕໍ່ເນື່ອງ ຈາກທີ່ເຄີຍສູງກວ່າ 20% ໃນປີ 2024 ລົງມາສະເລ່ຍຢູ່ທີ່ປະມານ 8% - 8.5% ໃນປີ2025 ແລະ ມີບາງໄລຍະທີ່ຫຼຸດລົງມາຢູ່ລະດັບເລກຕົວດຽວ (ປະມານ 4.8% ໃນທ້າຍປີ).
- ຄ່າເງິນກີບ: ເລີ່ມມີຄວາມສະຫງົບ (Stabilize) ຫຼາຍຂຶ້ນເນື່ອງຈາກການເຂັ້ມງວດໃນການຄຸ້ມຄອງ ເງິນຕາຕ່າງປະເທດ ແລະ ລາຍຮັບຈາກການສົ່ງອອກທີ່ເຂົ້າມາຜ່ານລະບົບທະນາຄານໄດ້ຫຼາຍຂຶ້ນ (ບັນລຸໄດ້ກວ່າ 70%).

This is considered a period presenting both opportunities and challenges that warrant close monitoring. Based on forecasts from various entities, including the World Bank and domestic organizations, the key highlights can be summarized as follows:

1. GDP Expansion

It is estimated that the Lao economy in 2025 will expand at a rate of 4.0% to 4.5%. The primary driving factors are: The service and tourism sectors: These remain the main engines driving growth due to the connectivity provided by the Laos-China Railway and the full opening of the country.

Exports: particularly electricity and agriculture products together with foreign investment in the mining and clean energy sectors.

2. Remaining Challenges

Despite GDP growth, Laos continues to face significant structural issues:

Inflation: Remains at a high level; although it shows a slight downward trend compared to 2023-2024, it continues to impact the cost of living.

Value of the Kip: Exchange rate volatility remains a risk factor driving up the prices of imported goods.

Foreign Debt: Debt management remains the government's highest priority to maintain financial stability.

3. Government Priorities for 2025

This year, the Lao government has implemented stringent measures across various areas:

- Modernization: The integration of digital systems into revenue collection and budget management.
- Promotion of Domestic Production: Aimed at reducing imports and strengthening SMEs.

Resolving Currency Issues: Intensifying controls on the inflow and outflow of foreign currency through the banking system. However, in 2025, there is a clear trend of improvement compared to the previous 2-3 years, with the following key indicators:

3.1 GDP Growth

- Expansion Rate: It is estimated that the economy will grow at a rate between 3.7% and 4.8%.
- Key Sectors: The service and tourism sectors serve as the main drivers, projected to expand by up to 4.5%. Furthermore, the energy industry (electricity) and mining sectors also maintain a solid growth pace.

3.2 Monetary Stability and Inflation

- Declining Inflation: There is a continuous downward trend; having previously exceeded 20% in 2024, it has dropped to an average of approximately 8% - 8.5% in 2025, occasionally falling to single digits (approximately 4.8% by year-end).
- Value of the Kip: Beginning to stabilize further due to stricter management of foreign currency and increased export revenues entering through the banking system (achieving over 70%).

4. ປັດໃຈບວກທີ່ຊ່ວຍຊຸກຍູ້

- ການທ່ອງທ່ຽວ: ຈຳນວນນັກທ່ອງທ່ຽວ ເພີ່ມຂຶ້ນຢ່າງຫຼວງຫຼາຍ (ຫຼາຍກວ່າ 3 ລ້ານເທື່ອຄົນໃນ 8 ເດືອນທຳອິດ), ເຊິ່ງຊ່ວຍສ້າງລາຍຮັບເງິນຕາຕ່າງປະເທດໂດຍກົງ.
- ການລົງທຶນ: ມີການໄຫຼເຂົ້າຂອງການລົງທຶນຈາກຕ່າງປະເທດຢ່າງຕໍ່ເນື່ອງ ໃນຂະແໜງພະລັງງານສະອາດ ແລະ ກະສິກຳປຸງແຕ່ງ.
- ພື້ນຖານໂຄງລ່າງ: ການນຳໃຊ້ທາງລົດໄຟ ລາວ-ຈີນ ຢ່າງເຕັມຮູບແບບ ຊ່ວຍຫຼຸດຕົ້ນທຶນການຂົນສົ່ງ ແລະ ເພີ່ມໂອກາດໃນການສົ່ງອອກສິນຄ້າໄປຕ່າງປະເທດ.

5. ສິ່ງທ້າທາຍທີ່ຍັງຄົງມີໜີ້ສິນຕ່າງປະເທດ: ຍັງເປັນຄວາມກົດດັນຫຼັກຕໍ່ການຄຸ້ມຄອງງົບປະມານຂອງລັດ.

- ຄັງສຳຮອງເງິນຕາ: ເຖິງວ່າຈະເພີ່ມຂຶ້ນ (ປະມານ 2.8 ຕື້ໂດລາ) ແຕ່ກໍ່ຍັງຖືວ່າຢູ່ໃນລະດັບທີ່ຈຳກັດ ເມື່ອທຽບກັບຄວາມຕ້ອງການໃຊ້ຈ່າຍຕົວຈິງ.
- ການຂາດແຄນແຮງງານ: ບັນຫາແຮງງານລາວຍ້າຍໄປເຮັດວຽກຢູ່ຕ່າງປະເທດ ສົ່ງຜົນກະທົບຕໍ່ຜະລິດຕະພາບຂອງບາງຂະແໜງການໃນຕົວເມືອງ.

ສະຫຼຸບ: ເສດຖະກິດລາວປີ 2025 ແມ່ນຢູ່ໃນໄລຍະ "ຟື້ນຕົວ ແລະ ສ້າງສະຖຽນລະພາບ" ໃນກອງປະຊຸມຄົບຄະນະ ຄັ້ງທີ 10 ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI ໄດ້ດຳເນີນມາແຕ່ວັນທີ 19-23 ພຶດສະພາ 2025 ທີ່ສຳນັກງານສູນກາງພັກ (ຫສພ), ພາຍໃຕ້ການເປັນປະທານຂອງ ທ່ານ ທອງລຸນ ສີສຸລິດ ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກປະຊາຊົນ ປະຕິວັດລາວ ປະທານປະເທດ ແຫ່ງ ສປປ ລາວ ແລະ ໄດ້ປິດລົງດ້ວຍຜົນສຳເລັດອັນຈົບງາມ. ຄະນະບໍລິຫານງານສູນກາງພັກ ໄດ້ພ້ອມກັນຄົ້ນຄວ້າ, ປຶກສາຫາລື ແລະ ໃຫ້ທິດຊີ້ນຳຕໍ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ-ເງິນຕາໃນ 6 ເດືອນຕົ້ນປີ 2025; ຕີລາຄາຜົນການດຳເນີນກອງປະຊຸມໃຫຍ່ ຂອງອົງຄະນະພັກເມືອງ-ນະຄອນ, ບັນດາຮາກຖານພັກອ້ອມຂ້າງສູນກາງ ແລະ ທ້ອງຖິ່ນ; ພິເສດໄດ້ປຶກສາຫາລື ແລະ ມີຄວາມເຫັນຊີ້ນຳຕໍ່ບັນດາຮ່າງເອກະສານທີ່ຈະນຳລາຍງານຕໍ່ກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກຢ່າງເປັນລະບົບ, ອັນໄດ້ສ່ອງແສງໃຫ້ເຫັນເຖິງຄວາມຮັບຜິດຊອບຂອງຄະນະບໍລິຫານງານສູນກາງພັກ, ສະແດງເຖິງຄວາມມີຊີວິດຊີວາ ຂອງການເສີມຂະຫຍາຍປະຊາທິປະໄຕ, ສະຕິປັນຍາລວມໝູ່ຢູ່ພາຍໃນພັກ ໃນການບູລະນະແນວທາງການເມືອງ ແລະ ແນວທາງການຈັດຕັ້ງຂອງພັກເຮົາໃຫ້ຖືກຕ້ອງ, ແທດເໝາະ, ສອດຄ່ອງ, ຮັດກຸມ ແລະ ສົມບູນຂຶ້ນຢ່າງຕໍ່ເນື່ອງ.

ລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນຂັ້ນຕ່າງໆ ມີຄວາມພະຍາຍາມສູງ ໃນການຈັດຕັ້ງປະຕິບັດ ແຜນພັດທະນາ-ເສດຖະກິດສັງຄົມ, ການຊຸກຍູ້ຂະບວນການດ້ານຕ່າງໆ ເຮັດໃຫ້ປະເທດລາວສືບຕໍ່ຮັກສາ ສະຖຽນລະພາບທາງການເມືອງໄດ້ຢ່າງໜັກແໜ້ນ, ສັງຄົມມີຄວາມເປັນລະບຽບຮຽບຮ້ອຍ, ສາມາດຜ່ານຜ່າ ແລະ ແກ້ໄຂບັນຫາເຄັ່ງຮ້ອນໄດ້ໂດຍພື້ນຖານ, ການພັດທະນາເສດຖະກິດ-ສັງຄົມ ຮັກສາ ຈັງຫວະການຂະຫຍາຍຕົວໄດ້ຢ່າງຕໍ່ເນື່ອງ, ການຜະລິດສິນຄ້າ, ການຈັດເກັບ ແລະ ຄຸ້ມຄອງງົບປະມານປະຕິບັດໄດ້ຕາມຄາດໝາຍ ເຊິ່ງໃນໄຕມາດທີ 1 ປີ 2025 ເສດຖະກິດຂະຫຍາຍຕົວ ໃນລະດັບ 4,5%. (ຂໍ້ມູນຈາກເສດຖະກິດ-ການຄ້າ ).

4. Positive Driving Factors

Tourism: A substantial increase in tourist arrivals (exceeding 3 million in the first 8 months), which directly contributes to foreign currency revenue generation.

Investment: Continuous inflows of foreign investment in the clean energy and processing agriculture sectors.

Infrastructure: The full utilization of the Laos-China Railway helps reduce transportation costs and increases opportunities for exporting goods abroad.

5. Remaining Challenges

Foreign Debt: Continues to be the primary pressure on state budget management.

Foreign Currency Reserves: Although they have increased (approximately USD 2.8 billion), they are still considered limited compared to actual expenditure requirements.

Labor Shortages: The migration of the Lao workforce to seek employment overseas negatively impacts the productivity of certain urban sectors.

Summary: The Laos economy in 2025 is in a phase of "recovery and stabilization." The 10th Plenary Session of the 11th Party Central Committee was held from 19-23 May 2025, at the Party Central Committee Headquarters, under the chairmanship of H.E. Thongloun Sisoulith, General Secretary of the Lao People's Revolutionary Party and President of the Lao PDR, concluding with resounding success. The Party Central Committee collectively researched, discussed, and provided guiding directives on the implementation of the socio-economic development plan and the monetary-budget plan for the first six months of 2025. It evaluated the outcomes of the congresses of district and city party committees, as well as grassroots party organizations at both central and local levels. Notably, systematic discussions and directives were provided on the draft documents to be reported at the 12th Party Congress. This reflects the profound responsibility of the Party Central Committee and demonstrates the vitality of expanding democracy and collective wisdom within the Party to continuously refine our political and organizational guidelines to be accurate, relevant, consistent, prudent, and increasingly comprehensive.

The Government and local administrative authorities at various levels have exerted tremendous effort in implementing the socio-economic development plan and promoting various initiatives. Consequently, Laos has firmly maintained political stability and social order, successfully navigating and fundamentally resolving urgent issues. Socio-economic development has sustained continuous growth momentum. Commodity production, revenue collection, and budget management have met their targets, with the economy expanding at a rate of 4,5% in the first quarter of 2025. (Source: Economic-Trade)

ປະຈຸບັນແມ່ນມີຄວາມດຸເດືອດ ແລະ ໜ້າສົນໃຈຫຼາຍ. ຈາກທີ່ເຄີຍເນັ້ນການຂະຫຍາຍສາຂາ, ຕອນນີ້ໄດ້ປ່ຽນມາເປັນການແຂ່ງຂັນດ້ານເຕັກໂນໂລຊີ ແລະ ການບໍລິການ ຢ່າງເຕັມຮູບແບບ. ພາບລວມຂອງຈຸດແຂ່ງຂັນທີ່ສຳຄັນ ມີດັ່ງນີ້:

**1. ການແຂ່ງຂັນດ້ານ Digital Banking (Mobile App)**

ນີ້ຄືສະໜາມຮົບທີ່ໃຫຍ່ທີ່ສຸດ, ທຸກທະນາຄານພະຍາຍາມເຮັດໃຫ້ App ຂອງຕົນເອງເປັນ "Super App" ທີ່ເຮັດໄດ້ທຸກຢ່າງ ທີ່ຄອບຄຸມການຊຳລະສະສາງຄ່າທຳນຽມລັດ, ພາສີ ແລະ ຄ່າສາທາລະນຸປະໂພກ ແລະ ຄູ່ແຂ່ງອື່ນໆ ກໍ່ໄດ້ອັບເກຣດ App ໃຫ້ມີຄວາມໄວ, ໃຊ້ງ່າຍ ແລະ ມີຟີເຈີທີ່ທັນສະໄໝ ເພື່ອດຶງດູດລູກຄ້າທຸກລຸ້ນ, ທຸກຄົນ ແລະ ນັກທຸລະກິດ.

**2. ການບໍລິການ ແລະ ປະສົບການລູກຄ້າ (Customer Experience),**

ເມື່ອເຕັກໂນໂລຊີໃກ້ຄຽງກັນ, ສິ່ງທີ່ຈະຕັດສິນແມ່ນ "ການບໍລິການ" ຄວາມໄວ: ການອະນຸມັດສິນເຊື່ອ (ເງິນກູ້) ທີ່ໄວຂຶ້ນ ແລະ ຂັ້ນຕອນທີ່ບໍ່ຊັບຊ້ອນ. ການບໍລິການຢູ່ໜ້າເຄົາເຕີທີ່ເປັນກັນເອງ ແລະ ມືອາຊີບ ເພື່ອສ້າງຄວາມປະທັບໃຈໃຫ້ລູກຄ້າກັບມາໃຊ້ບໍລິການຄືນອີກຫຼາຍໆຄັ້ງ.

**3. ສິນເຊື່ອ ແລະ ອັດຕາດອກເບ້ຍ (Interest Rates)**

ໃນສະພາບເສດຖະກິດທີ່ມີຄວາມຜັນຜວນ:

- ເງິນຝາກ: ມີການແຂ່ງຂັນກັນອອກຜະລິດຕະພັນເງິນຝາກປະຫຍັດ ຫຼື ເງິນຝາກປະຈຳທີ່ມີອັດຕາດອກເບ້ຍ ສູງເພື່ອດຶງດູດສະພາບຄ່ອງ (ເງິນກີບ) ເຂົ້າລະບົບ.
- ເງິນກູ້: ການປັບເງື່ອນໄຂການກູ້ຢືມໃຫ້ເຂົ້າກັບ SME ຫຼື ບຸກຄົນທົ່ວໄປ ເພື່ອຊ່ວຍກະຕຸ້ນເສດຖະກິດ.

**4. ການຂະຫຍາຍຕົວຂອງທະນາຄານຕ່າງປະເທດ**

ທະນາຄານຈາກປະເທດໄທ, ຫວຽດນາມ, ຈີນ ແລະ ມາເລເຊຍ ທີ່ເຂົ້າມາເປີດສາຂາໃນລາວ ໄດ້ນຳເອົາ ມາດຕະຖານສາກົນ ແລະ ເຄືອຂ່າຍການຄ້າລະຫວ່າງປະເທດ ມາແຂ່ງຂັນ ເຮັດໃຫ້ທະນາຄານທ້ອງຖິ່ນຕ້ອງປັບຕົວຢ່າງແຮງ. ການທີ່ທະນາຄານຕ່າງໆໃນ ສປປ ລາວ ຫັນມາພັດທະນາ Mobile Banking App ຢ່າງຈິງຈັງນັ້ນ ຖືວ່າເປັນການປ່ຽນໂສມໜ້າການນຳໃຊ້ເງິນສົດໃນສັງຄົມເຮົາໄດ້ຫຼາຍ , ມັນບໍ່ແມ່ນພຽງແຕ່ຄວາມສະດວກສະບາຍສ່ວນຕົວເທົ່ານັ້ນ, ແຕ່ຍັງມີຜົນດີຕໍ່ພາບລວມຂອງສັງຄົມດັ່ງນີ້:

The current landscape is fiercely competitive and highly dynamic. Shifting away from a traditional focus on branch network expansion, the competition has now transitioned into a full-scale race driven by technology and service excellence.

An overview of the key competitive focal points is as follows:

1. Competition in Digital Banking (Mobile Apps)

This represents the most significant battleground. Every bank is striving to evolve its application into a comprehensive "Super App" capable of handling all transactions, encompassing the settlement of state fees, taxes, and utility payments.

Competitors have continually upgraded their applications to be faster, more user-friendly, and equipped with modern features to attract individuals across all generations, as well as business professionals.

2. Service and Customer Experience

When technological capabilities are comparable, the deciding factor becomes "services":

Speed: Faster credit (loan) approvals with streamlined and uncomplicated procedures.

Friendly and professional front-counter service to create a lasting impression, encouraging customers to return repeatedly.

3. Credit and Interest Rates

In a fluctuating economic environment:

- Deposits: There is intense competition to launch savings or fixed-deposit products with high interest rates to attract liquidity (Lao Kip) into the system.
- Loans: Adjusting borrowing conditions to be suitable for SMEs and general individuals to help stimulate the economy.

4. Expansion of Foreign Banks

Banks from Thailand, Vietnam, China, and Malaysia that have established branches in Laos bring international standards and cross-border trade networks into the competitive landscape, compelling local banks to adapt vigorously.

The earnest development of Mobile Banking Apps by various banks in the Lao PDR has significantly transformed the cash-based nature of our society. This shift not only provides personal convenience but also yields broader societal benefits, as outlined below:

**4.1 ຄວາມສະດວກ ແລະ ປະຢັດຕົ້ນທຶນ (Efficiency & Saving)**

ປະຢັດເວລາ: ປະຊາຊົນບໍ່ຈຳເປັນຕ້ອງໄປຕໍ່ຄິວຢູ່ທະນາຄານຄືແຕ່ກ່ອນ, ການເຮັດທຸລະກຳຜ່ານມືຖື ໃຊ້ເວລາພຽງບໍ່ເທົ່າໃດວິນາທີ, ຫຼຸດຜ່ອນຄ່າໃຊ້ຈ່າຍ, ບໍ່ເສຍເວລາ ແລະ ຫຼຸດຜ່ອນຄ່າໃຊ້ຈ່າຍໃນການເດີນທາງ ແລະ ຄ່າທຳນຽມບາງຢ່າງທີ່ເຄີຍຈ່າຍຢູ່ເຄົາເຕີ.

**4.2. ກະຕຸ້ນເສດຖະກິດດິຈິຕອນ (Digital Economy)**

ການຊື້-ຂາຍຄ່ອງຕົວ: ການມີ QR Code ເຮັດໃຫ້ການຄ້າຂາຍຍ່ອຍ (ລວມເຖິງແມ່ຄ້າຊາວຂາຍຕາມຕະຫຼາດ) ສາມາດຮັບເງິນໄດ້ງ່າຍຂື້ນ, ບໍ່ຕ້ອງກັງວົນເລື່ອງເງິນທອນ ຫຼື ເງິນປອມ. ການຊຸກຍູ້ E-commerce: ເຮັດໃຫ້ການຊື້ເຄື່ອງອອນລາຍ ເຕີບໂຕໄວ ເພາະລະບົບການຊຳລະເງິນມີຄວາມໝັ້ນຄົງ ແລະ ເຊື່ອມຕໍ່ກັນໄດ້ໝົດ.

**4.3. ເພີ່ມການເຂົ້າເຖິງການເງິນ (Financial Inclusion)**

ການເຂົ້າເຖິງບໍລິການດ້ານການເງິນ: ປະຊາຊົນທີ່ຢູ່ເຂດຫ່າງໄກສອກຫຼີກ ທີ່ບໍ່ມີສາຂາທະນາຄານຕັ້ງຢູ່ ກໍ່ສາມາດເຂົ້າເຖິງບໍລິການທາງການເງິນໄດ້ ຂໍພຽງແຕ່ມີສັນຍານອິນເຕີເນັດ ແລະ ມືຖື.
ຄວາມຮູ້ທາງການເງິນ: App ເຮັດໃຫ້ຄົນເຫັນລາຍຮັບລາຍຈ່າຍຂອງຕົນເອງໄດ້ຕະຫຼອດເວລາ, ຊ່ວຍໃຫ້ວາງແຜນການເງິນໄດ້ດີຂື້ນ.

**4.4. ຄວາມປອດໄພ ແລະ ຄວາມໂປ່ງໃສ (Security & Transparency)**

- ຫຼຸດຜ່ອນການຖືເງິນສົດ: ການຖືເງິນສົດຈຳນວນຫຼາຍມີຄວາມສ່ຽງຕໍ່ການຖືກລັກຂະໂມຍ ຫຼື ເຮັດຕົກເຮ່ຍເສຍຫາຍ, ການໃຊ້ App ຈະມີລະບົບ Password ແລະ ການຢືນຢັນຕົວຕົນທີ່ປອດໄພກວ່າ.
- ການຕິດຕາມ ແລະ ກວດສອບ: ສາມາດຕິດຕາມທຸກການເຄື່ອນໄຫວເຂົ້າ-ອອກເງິນ ແລະ ມີຫຼັກຖານ (E-receipt) ທີ່ຊັດເຈນສາມາດກວດສອບຄືນໄດ້ທຸກເມື່ອ ເຮັດໃຫ້ການສໍ້ໂກງເຮັດໄດ້ຍາກຂື້ນ.

**4.5 ຜົນກະທົບຕໍ່ສິ່ງແວດລ້ອມ (Eco-friendly)**

ຫຼຸດຜ່ອນການໃຊ້ເຈ້ຍ: ບໍ່ວ່າຈະເປັນໃບຖອນເງິນ, ໃບໂອນເງິນ ຫຼື ປື້ມບັນຊີ, ທຸກຢ່າງຖືກປ່ຽນເປັນດິຈິຕອນ ເຮັດໃຫ້ຫຼຸດຜ່ອນການນຳໃຊ້ເຈ້ຍໃນປະລິມານມະຫາສານ.

**4.1 Efficiency & Saving**

- Time Savings: Citizens no longer need to queue at banks as they did in the past. Mobile transactions take mere seconds, saving time and reducing travel expenses and certain fees previously incurred at the counter.

**4.2 Stimulating the Digital Economy**

- Fluid Transactions: The widespread use of QR Codes enables retail merchants (including market vendors) to receive payments easily, eliminating concerns regarding exact change or counterfeit currency.
- Boosting E-commerce: Facilitates rapid growth in online shopping due to secure and fully integrated payment systems.

**4.3 Enhancing Financial Inclusion**

- Access to Financial Services: Citizens in remote areas without physical bank branches can access financial services, provided they have an internet connection and a mobile phone.
- Financial Literacy: The Apps allow individuals to monitor their income and expenses in real time, thereby improving their financial planning capabilities.

**4.4 Security and Transparency**

- Reducing Cash Dependency: Carrying large amounts of physical cash entails a risk of theft, loss, or damage. Utilizing Apps involves secure password systems and authentication processes, significantly enhancing security.
- Tracking and Auditing: Every financial transaction (inflows and outflows) can be monitored, and clear electronic receipts (E-receipts) are generated. This allows for verifiable records at any time, making fraudulent activities substantially more difficult to execute.

**4.5 Environmental Impact (Eco-friendly)**

- Reducing Paper Consumption: Whether it involves withdrawal slips, transfer forms, or passbooks, the transition to digital formats results in a massive reduction in paper usage.



# IV ການດຳເນີນທຸລະກິດ ຂອງທະນາຄານຮ່ວມພັດທະນາ ມະຫາຊົນ ປະຈຳປີ 2025 \ Business Performance of Joint Development Bank Public in 2025

ໃນປີ 2025 ທີ່ຜ່ານມາ, ເສດຖະກິດ ສປປ ລາວ ມີທ່າຂະຫຍາຍຕົວດີຂຶ້ນ ຍ້ອນມີການເປີດປະເທດຢ່າງເຕັມຮູບແບບ, ສະພາບເສດຖະກິດພາຍໃນກໍ່ຄ່ອຍໆມີທ່າອ່ຽງດີຂຶ້ນ, ຍ້ອນການເອົາໃຈໃສ່ຂອງລັດຖະບານໃນຊຸມປີທີ່ຜ່ານມາ, ເຊິ່ງເປັນຜົນດີໃຫ້ແກ່ການດຳເນີນທຸລະກິດ ຂອງທະນາຄານຮ່ວມພັດທະນາ ມະຫາຊົນ (JDB) ແລະ ສາມາດປະຕິບັດໄດ້ລື່ນຄາດໝາຍ ທີ່ວາງໄວ້ ຄື:

- ຍອດຊັບສິນທັງໝົດ ເພີ້ມຂຶ້ນ 32 % ທຽບໃສ່ປີ 2024
- ຍອດເງິນຝາກ ເພີ້ມຂຶ້ນ 29 % ທຽບໃສ່ປີ 2024
- ຍອດສິນເຊື່ອ ເພີ້ມຂຶ້ນ 22 % ທຽບໃສ່ປີ 2024

ທະນາຄານຮ່ວມພັດທະນາ ມະຫາຊົນ (JDB) ສຸມໃສ່ ດ້ານວຽກງານການພັດທະນາ ລະບົບເຕັກໂນໂລຊີໃຫ້ທັນສະໄໝ ໂດຍສະເພາະການຍົກລະດັບລະບົບການບໍລິການທະນາຄານແບບເກົ່າ ຫັນເປັນລະບົບທະນາຄານທີ່ທັນສະໄໝ ໄດ້ມາດຕະຖານສາກົນ. ຮອງຮັບຫຼາຍຊ່ອງທາງ ແລະ ລະບົບການໂອນເງິນກັບສາກົນ ທະນາຄານຮ່ວມພັດທະນາ ມະຫາຊົນ (JDB) ໄດ້ພັດທະນາອົງກອນ ແລະ ຜະລິດຕະພັນທາງການເງິນໃໝ່ໆ ຢ່າງສະໝໍ່າສະເໝີ ປະສານກັບເຕັກໂນໂລຊີໃໝ່ ແລະ ຜະລິດຕະພັນເອເລັກໂຕຼນິກທີ່ທັນສະໄໝ ເພື່ອຮອງຮັບການບໍລິການລູກຄ້າ ໃນຍຸກ Digital, ນຳໃຊ້ AI ເຂົ້າມາບໍລິຫານຈັດການໃຫ້ສະດວກສະບາຍຍິ່ງຂຶ້ນ, ລູກຄ້າສາມາດເຮັດທຸລະກຳດ້ວຍຕົນເອງ ເທິງມືຖື ໃນທຸກພື້ນທີ່ຂອງໂລກ ທີ່ມີສັນຍານ Internet, ເປັນຕົ້ນແມ່ນ JDB Yes Mobile Banking ທະນາຄານເທິງມືຖື ເປັນໜຶ່ງໃນການບໍລິການທີ່ໂດດເດັ່ນ ຊ່ວຍຕອບສະໜອງການເຮັດທຸລະກຳທາງການເງິນ ແລະ ທຸລະກິດຂອງລູກຄ້າ ສະດວກສະບາຍ ວ່ອງໄວ, ທັນສະໄໝ ແລະ ປອດໄພ ເຊິ່ງຖືກນຳໃຊ້ຢ່າງກວ້າງຂວາງ ໃນສັງຄົມລາວ.

ທະນາຄານ ຮ່ວມພັດທະນາ ມະຫາຊົນ ຫຼື (JDB) ໄດ້ປະສົບຜົນສຳເລັດ ໃນການປິດການຊື້ຂາຍຮຸ້ນຢ່າງເປັນທາງການພາຍຫຼັງປະສົບຜົນສຳເລັດໃນການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ຈຳນວນ 75,333,900 ຮຸ້ນ, ລາຄາ 8,800 ກີບ/ຮຸ້ນ ແລະ ສາມາດລະດົມທຶນໄດ້ 656,158,260,000 ກີບ ຫຼື ປະມານ 30 ລ້ານໂດລາ. ຫຼ້າສຸດ, ການເປີດຂາຍຮຸ້ນຄັ້ງທຳອິດຂອງ JDB ໃນຕອນເຊົ້າຂອງວັນທີ 10 ຕຸລາ 2025, ແລະ ໃນວັນທີ 25 ທັນວາ 2025 ໄດ້ຈ່າຍເງິນປັນຜົນ ປີ 2024 ໃຫ້ແກ່ຜູ້ຖືຮຸ້ນສຳເລັດເປັນທີ່ຮຽບຮ້ອຍແລ້ວ.

ດ້ານແຫຼ່ງທຶນ ແລະ ແຜນການເປົ້າຫມາຍ KPI ປະຈຳປີ 2026 ຈະຕ້ອງຊອກຫາແຫຼ່ງລາຍຮັບເພີ່ມ ຈາກຜະລິດຕະພັນທີ່ມີໃນປະຈຸບັນ. ການລະດົມທຶນ ຕ້ອງຕິດພັນກັບການປ່ອຍເງິນກູ້, ຕິດພັນກັນກັບການເປີດບັນຊີເງິນຝາກຂອງລູກຄ້າແຕ່ລະລາຍ ທັງສຳນັກງານໃຫຍ່ ແລະ ໜ່ວຍບໍລິການ ຕາມແຜນ KPI ທີ່ວາງໄວ້.

ວຽກງານຈັດຕັ້ງ-ພະນັກງານ: ຕ້ອງສ້າງຄວາມສາມັກຄີກັນເປັນປຶກແຜ່ນ, ຍົກລະດັບຄວາມຮູ້, ຄວາມສາມາດ ຂອງພະນັກງານທຸກລະດັບໃຫ້ເຂັ້ມແຂງ. ໃນກອງປະຊຸມ ໄດ້ຍ້ອງຍໍຊົມເຊີຍ ໜ່ວຍບໍລິການທີ່ມີຜົນງານດີເດັ່ນທີ່ບັນລຸເປົ້າໝາຍ KPI ແຕ່ລະດ້ານ, ທີ່ມີຜົນງານດີເດັ່ນໃນການປະກອບສ່ວນເຂົ້າວຽກງານຂອງ ທະນາຄານຮ່ວມພັດທະນາ ມະຫາຊົນ (JDB) ເພື່ອໃຫ້ພະນັກງານໃຫ້ມີກຳລັງໃຈ ແລະ ຕັ້ງໜ້າປະຕິບັດວຽກງານໃຫ້ດີຂຶ້ນກວ່າເກົ່າ, ນອກຈາກນີ້ ທະນາຄານຮ່ວມພັດທະນາ ມະຫາຊົນ (JDB) ໄດ້ມີນະໂຍບາຍສູງໃຫ້ແກ່ພະນັກງານຂອງຕົນ ເພື່ອແກ້ໄຂຊີວິດການເປັນຢູ່ດີຂື້ນແຕ່ລະປີ.

During the past year of 2025, the economy of the Lao PDR exhibited an improved growth trajectory due to the full opening of the country. The domestic economic environment has gradually shown a positive trend, bolstered by the government's dedicated efforts in recent years. This favorable environment positively impacted the business operations of Joint Development Bank Public (JDB), enabling the bank to exceed its set targets as follows:

- Total Assets increased by 32% compared to 2024.
- Total Deposits increased by 29% compared to 2024.
- Total Credit (Loans) increased by 22% compared to 2024.

Joint Development Bank Public (JDB) concentrated its efforts on technological modernization, specifically upgrading legacy banking services into a modern banking system that meets international standards. Accommodating multiple channels and international money transfer systems, Joint Development Bank Public (JDB) has consistently developed the organization and introduced innovative financial products. These are integrated with new technologies and state-of-the-art electronic products to support customer service in the Digital Era. The bank has integrated AI to enhance management convenience, empowering customers to independently execute transactions on their mobile devices from anywhere in the world with an internet connection. Notably, the "JDB Yes Mobile Banking" application stands out as a premier service, facilitating convenient, rapid, modern, and secure financial and business transactions for customers, and it is widely utilized across Lao society.

Joint Development Bank Public (JDB) successfully closed its official share trading period following a successful Initial Public Offering (IPO) of 75,333,900 shares at a price of 8,800 LAK/share, successfully raising 656,158,260,000 LAK, or approximately 30 million USD. Most recently, following the commencement of JDB's initial share trading on the morning of 10 October 2025, the bank successfully completed the payment of the 2024 dividend to its shareholders on 25 December 2025.

Regarding Funding Sources and the 2026 KPI Target Plan: It is imperative to seek additional revenue streams from existing products. Capital mobilization must be integrated with credit disbursement, as well as the opening of deposit accounts by individual customers at both the Headquarters and Service Units, in strict accordance with the established KPI plans.

Organization and Personnel: We must build strong, cohesive solidarity and upgrade the knowledge and capabilities of employees at all levels to ensure robust performance. During the meeting, outstanding Service Units that successfully achieved their KPI targets in each respective area and made exceptional contributions to the operations of Joint Development Bank Public (JDB) were commended and praised. This recognition serves to boost employee morale and encourage them to perform their duties even more effectively. Furthermore, Joint Development Bank Public (JDB) has implemented high-level welfare policies for its employees to continuously improve their living standards year after year.

ທະນາຄານຮ່ວມພັດທະນາ ມະຫາຊົນ (JDB) ໃນໄລຍະຜ່ານມາ ໄດ້ປ່ອຍສິນເຊື່ອເຂົ້າໃນ ການສ້າງສາເສດຖະກິດ-ສັງຄົມ ກໍ່ຄື ການກໍ່ສ້າງພື້ນຖານໂຄງລ່າງຂອງ ສປປ ລາວ ແລະ ໄດ້ປະກອບສ່ວນຊ່ວຍເຫຼືອສັງຄົມຕະຫຼອດມາ. ໃນວັນທີ 30 ມັງກອນ 2026 ໄດ້ຈັດກອງປະຊຸມ ສະຫຼຸບຜົນການດຳເນີນທຸລະກິດ ແລະ ງານລ້ຽງຊົມເຊີຍຜົນສຳເລັດການດຳເນີນທຸລະກິດປະຈຳປີ 2025 ແລະ ແຜນການດຳເນີນທຸລະກິດ ປະຈຳປີ 2026 ຂອງທະນາຄານຮ່ວມພັດທະນາ ມະຫາຊົນ (JDB) ໃຫ້ກຽດກ່າວເປີດພິທີ ໂດຍ ທ່ານ ເອກະພັນ ພະພິທັກ ປະທານຜູ້ຖືຮຸ້ນ ທະນາຄານຮ່ວມພັດທະນາ ມະຫາຊົນ (JDB) ໂດຍມີການນຳ ພັກ-ລັດ ລະດັບສູງ ໃຫ້ກຽດເຂົ້າຮ່ວມໃນຄັ້ງນີ້ ພ້ອມດ້ວຍບັນດາລູກຄ້າຈຳນວນໜຶ່ງ ຕະຫຼອດເຖິງພະນັກງານຂອງທະນາຄານຮ່ວມພັດທະນາ ມະຫາຊົນ(JDB) ທົ່ວປະເທດກໍ່ໄດ້ເຂົ້າຮ່ວມຢ່າງພ້ອມພຽງ.

ໃນຄ່ຳຄືນຂອງງານດັ່ງກ່າວ ໄດ້ມີພິທີຈັດງານລ້ຽງຊົມເຊີຍຜົນສຳເລັດປະຈຳປີ 2025 ແລະ ໄດ້ມີວາລະພິເສດ ໃນການເຊັນບົດບັນທຶກຄວາມເຂົ້າໃຈ (MOU) ລະຫວ່າງທະນາຄານເພື່ອການສົ່ງອອກ ແລະ ນຳເຂົ້າແຫ່ງປະເທດໄທ (EXIM Bank Thailand) ແລະ ທະນາຄານຮ່ວມພັດທະນາ ມະຫາຊົນ (JDB) ຈາກນັ້ນກໍ່ໄດ້ຮັບຊົມວີດີໂອ ພາບຜົນງານຂອງທະນາຄານຮ່ວມພັດທະນາ ມະຫາຊົນ (JDB) ໃນປີ 2025 ທີ່ຜ່ານມາ ແລະ ຍັງມີວີດີໂອການເປີດຜະລິດຕະພັນໃໝ່ເຊັ່ນ: ການບໍລິການສິນເຊື່ອອອນລາຍ (Digital Loan Services), ການບໍລິການບັດສະເໝືອນຈິງ Virtual Card ແລະ ບັດສິນເຊື່ອສາກົນ ອິນຟີນິດ (Visa Credit Infinite).

ນອກຈາກນີ້ຍັງໄດ້ມີພິທີຈັບລາງວັນໃຫ້ລູກຄ້າຜູ້ໂຊກດີ ໃນໂຄງການແຈກໂຊກໃຫຍ່ ຍິ່ງໃຫຍ່ອະລັງການ, ເຊິ່ງເປັນລູກຄ້າສຳລັບເງິນຝາກປະຈຳ 5 ປີ. ຜູ້ໂຊກດີທີ່ໄດ້ຮັບໂຊກໃຫຍ່ ຢ່າງຍິ່ງໃຫຍ່ໃນຄັ້ງນີ້ໄດ້ແກ່: ທ່ານ ຄຳໄລ ປັນຍາຄູນ ເຊິ່ງເປັນລູກຄ້າເງິນຝາກປະຈຳ ຂອງທະນາຄານຮ່ວມພັດທະນາ ມະຫາຊົນ (JDB) ຈາກແຂວງ ເຊກອງ, ແລະ ເປັນຜູ້ໂຊກດີໄດ້ຮັບລາງວັນ ລົດ TOYOTA PRADO.

ໃນປີ 2026 ທະນາຄານຮ່ວມພັດທະນາ ມະຫາຊົນ (JDB) ຈະຕ້ອງ ໄດ້ອອກແຮງສູ້ຊົນສ້າງຜົນກຳໄລ ໃຫ້ບັນລຸເປົ້າໝາຍທີ່ວາງໄວ້ ແລະ ປະກອບສ່ວນມອບພັນທະອາກອນ ໃຫ້ກະຊວງການເງິນ ເພື່ອສ້າງສາພັດທະນາປະເທດຊາດ ໃຫ້ມີຄວາມຈະເລີນຮຸ່ງເຮືອງ ຕາມຄຳຂວັນຂອງ ທະນາຄານຮ່ວມພັດທະນາ ມະຫາຊົນ (JDB) ທີ່ວ່າ:
" ເຕີບໃຫ່ຍໄປພ້ອມກັນ".

In the past period, Joint Development Bank Public (JDB) has disbursed credit into socio-economic development and infrastructure construction within the Lao PDR, while consistently contributing to social welfare assistance. On 30 January 2026, the bank held the Business Performance Summary Meeting and a celebratory banquet for the successful 2025 business operations, alongside outlining the 2026 business plan of Joint Development Bank Public (JDB). The opening remarks were honorably delivered by Mr. Ekaphanh Phapithack, Chairman of the Shareholders of Joint Development Bank Public (JDB). The event was honored by the presence of high-ranking Party and State leaders, along with a number of esteemed customers and employees of Joint Development Bank Public (JDB) throughout the country.

During this evening, a banquet was held to celebrate the successes of 2025. It featured a special agenda item: the signing of a Memorandum of Understanding (MOU) between the Export-Import Bank of Thailand (EXIM Bank Thailand) and Joint Development Bank Public (JDB). Following the signing, attendees viewed a video presentation showcasing the achievements of Joint Development Bank Public (JDB) over the past year of 2025. Additionally, video presentations were shown to launch new products, including Digital Loan Services, Virtual Card services, and the Visa Credit Infinite card.

Furthermore, a lucky draw ceremony was conducted for customers participating in the "Grand Prize Giveaway" campaign, specifically targeting customers with 5-year fixed deposit accounts. The grand prize winner on this occasion was Mr. Khamlai Panyakoun, a fixed-deposit customer of Joint Development Bank Public (JDB) from Xekong Province, who won a TOYOTA PRADO.

In 2026, Joint Development Bank Public (JDB) will strive rigorously to generate profits that achieve the set targets and contribute tax obligations to the Ministry of Finance, thereby aiding in the prosperous development of the nation. This aligns with the slogan of Joint Development Bank Public (JDB): "Blooming Together."

# ທະນາຄານຮ່ວມພັດທະນາ ມະຫາຊົນ

"ເຕີບໃຫຍ່ໄປພ້ອມກັນ"

# JOINT DEVELOPMENT BANK PUBLIC

"BLOOMING TOGETHER"

# ວຽກງານເຄື່ອນໄຫວ ຊ່ວຍເຫຼືອສັງຄົມ ປີ 2025

## Corporate Social Responsibility (CSR) 2025




# "ເຕີບໃຫຍ່ໄປພ້ອມກັນ"

## "BLOOMING TOGETHER"

# ວຽກງານເຄື່ອນໄຫວ ຊ່ວຍເຫຼືອສັງຄົມ ປີ 2025

## Corporate Social Responsibility (CSR) 2025




ທະນາຄານຮ່ວມພັດທະນາ ມະຫາຊົນ
ມອບເງິນຊຸກຍູ້ກອງປະຊຸມໃຫຍ່ອົງຄະນະພັກກະຊວງການເງິນ ສະໄໝທີ IV
ມູນຄ່າ 500,000,000 ກີບ




ທະນາຄານຮ່ວມພັດທະນາ ມະຫາຊົນ
ມອບເງິນຊຸກຍູ້ກອງປະຊຸມໃຫຍ່
ຜູ້ແທນອົງຄະນະພັກທະນາຄານແຫ່ງ ສປປ ລາວ ຄັ້ງທີ V
ມູນຄ່າ 300,000,000 ກີບ




ທະນາຄານຮ່ວມພັດທະນາ ມະຫາຊົນ JDB
ມອບເງິນຊຸກຍູ້ກອງປະຊຸມຜູ້ແທນຄະນະພັກ ແຂວງ ວຽງຈັນ ຄັ້ງທີ VII
ມູນຄ່າ 300,000,000 ກີບ




ທະນາຄານຮ່ວມພັດທະນາ ມະຫາຊົນ
ສະໜັບສະໜູນກອງປະຊຸມໃຫຍ່ ອົງຄະນະພັກ ອົງການກາແດງແຫ່ງຊາດລາວ
ມູນຄ່າ 100,000,000 ກີບ



ທະນາຄານຮ່ວມພັດທະນາ ມະຫາຊົນ
ຄວ້າແຊ້ມ ເຮືອຊ່ວງປະເພນີຊາຍ ໃນງານບຸນອອກພັນສາປະວໍຣະນາ
ປະຈຳປີ 2025 ທີ່ ທ່າວັດຈັນ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ
ເປັນການຮັກສາແຊ້ມສະໄໝທີ 2 ຕິດຕໍ່ກັນ




ທະນາຄານຮ່ວມພັດທະນາ ມະຫາຊົນ
ສະໜັບສະໜູນ ກອງປະຊຸມໃຫຍ່ ຜູ້ແທນອົງຄະນະພັກ ແຂວງຫຼວງພະບາງ ຄັ້ງທີ IX
ລວມມູນຄ່າ 200,000,000 ກີບ




ທະນາຄານຮ່ວມພັດທະນາ ມະຫາຊົນ
ອຸປະຖຳງານ ເທດສະການບຸນອອກພັນສາ ປະວໍຣະນາ ປະຈຳປີ 2025
ຢູ່ທີ່ ນະຄອນປາກເຊ ແຂວງ ຈຳປາສັກ
ມູນຄ່າ 30,000,000 ກີບ




ທະນາຄານຮ່ວມພັດທະນາ ມະຫາຊົນ
ປະກອບສ່ວນອຸປະຖຳ ບຸນທີ່ເຂົ້າປະດັບດິນ ຊ່ວງເຮືອເດືອນ 9
ແລະ ສະໜັບສະໜູນເຮືອປະເພນີເຂົ້າຮ່ວມແຂ່ງຂັນ
ລວມມູນຄ່າ 30,000,000 ກີບ




ທະນາຄານຮ່ວມພັດທະນາ ມະຫາຊົນ JDB
ອຸປະຖຳງານບຸນຊ່ວງເຮືອປະເພນີ ປະຈຳປີ 2025 ເມືອງທຸລະຄົມ ແຂວງ ວຽງຈັນ
ທີ່ທ່ານ້ຳບ້ານເກີນກາງ ຫາດຊາຍທຣຸມ ເມືອງທຸລະຄົມ
ລວມມູນຄ່າ 30,000,000 ກີບ



ທະນາຄານຮ່ວມພັດທະນາ ມະຫາຊົນ
ມອບທຶນອຸປະຖຳທຶນກໍ່ສ້າງອາຄານຮຽນຫຼັງໃໝ່ ໃຫ້ແກ່
ໂຮງຮຽນປະຖົມ ບ້ານແກ້ງແຄນ ເມືອງເຊບັ້ງໄຟ ແຂວງຄຳມ່ວນ
ລວມມູນຄ່າ 916,000,000 ກີບ




ທະນາຄານຮ່ວມພັດທະນາ ມະຫາຊົນ
ມອບທຶນອຸປະຖຳທຶນກໍ່ສ້າງອາຄານຮຽນຫຼັງໃໝ່ ໃຫ້ແກ່
ໂຮງຮຽນປະຖົມ ບ້ານຫ້ວຍທອງ ນະຄອນຫຼວງພະບາງ
ລວມມູນຄ່າ 900,000,000 ກີບ




ທະນາຄານຮ່ວມພັດທະນາ ມະຫາຊົນ
ມອບເງິນຊຸກຍູ້ກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກ ແຂວງໄຊຍະບູລີ ຄັ້ງທີ່ VIII
ລວມມູນຄ່າ 50,000,000 ກີບ

# ທະນາຄານຮ່ວມພັດທະນາ ມະຫາຊົນ

**ເອກະສານລາຍງານການເງິນ**
(ອີງຕາມນະໂຍບາຍການບັນຊີຂອງທະນາຄານ ແລະ
ສອດຄ່ອງກັບລະບຽບການ ແລະ ແຈ້ງການທີ່ກ່ຽວຂ້ອງ
ຂອງ ທະນາຄານ ແຫ່ງ ສປປ ລາວ)

**ວັນທີ 31 ທັນວາ 2025**

**ທະນາຄານຮ່ວມພັດທະນາ ມະຫາຊົນ**

**ສຳລັບປີສິ້ນສຸດວັນທີ 31 ທັນວາ 2025**

| **ສາລະບານ** | **ໜ້າ** |
|---|---|
| ຂໍ້ມູນທົ່ວໄປ | 1 - 2 |
| ບົດລາຍງານຂອງຄະນະອຳນວຍການ | 3 |
| ບົດລາຍງານຂອງຜູ້ກວດສອບບັນຊີອິດສະຫຼະ | 4 - 8 |
| ໃບລາຍງານຜົນການດຳເນີນງານ | 9 |
| ໃບລາຍງານຖານະການເງິນ | 10 - 11 |
| ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ | 12 – 13 |
| ໃບລາຍງານກະແສເງິນສົດ | 14 - 16 |
| ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ | 17 – 45 |

## ທະນາຄານຮ່ວມພັດທະນາ ມະຫາຊົນ

### ຂໍ້ມູນທົ່ວໄປ

**ທະນາຄານ**

ທະນາຄານຮ່ວມພັດທະນາ ມະຫາຊົນ ("ທະນາຄານ") ແມ່ນທະນາຄານເອກະຊົນຈຳກັດ ທີ່ໄດ້ດຳເນີນງານ ແລະ ຈົດທະບຽນຢູ່ ໃນ ສປປ ລາວ.

ທະນາຄານໄດ້ສ້າງຕັ້ງຂຶ້ນພາຍໃຕ້ສັນຍາຮ່ວມລົງທຶນ ລົງວັນທີ 2 ກຸມພາ 1989 ລະຫວ່າງທະນາຄານ ແຫ່ງ ສປປ ລາວ ("ທຫລ") ແລະ ບໍລິສັດ ພົມສຸວັນ ໄຊໂລ ແລະ ອິບພິດ ຈຳກັດ, ເຊິ່ງເປັນບໍລິສັດຢູ່ປະເທດໄທ. ພາຍໃຕ້ຂໍ້ຕົກລົງ, ບໍລິສັດ ພົມສຸວັນ ໄຊໂລ ແລະ ອິບພິດ ຈຳກັດ ແມ່ນຖືຮຸ້ນ 70% ແລະ ທຫລ ແມ່ນ 30% ຕາມລຳດັບ. ໃນປີ 2010, ທຫລ ໄດ້ໂອນທຶນປະກອບທັງໝົດໃຫ້ແກ່ ບໍລິສັດ ພົມສຸວັນ ໄຊໂລ ແລະ ອິບພິດ ຈຳກັດ ແລະ ຫຼັງຈາກນັ້ນໃນປີ 2012, ບໍລິສັດ ພົມສຸວັນ ໄຊໂລ ແລະ ອິບພິດ ຈຳກັດ ໄດ້ຂາຍຮຸ້ນທັງ 100% ໃຫ້ແກ່ ນັກລົງທຶນພາຍໃນ.

ທະນາຄານດຳເນີນທຸລະກິດພາຍໃຕ້ຂໍ້ຕົກລົງ ເລກທີ 04/PMA ອອກໂດຍປະທານຫ້ອງວ່າການລັດຖະມົນຕີ ແລະ ຂໍ້ຕົກລົງ ເລກທີ 04/ທຫລ ລົງວັນທີ 21 ມັງກອນ 1989, ເຊິ່ງຖືກດັດແກ້ໂດຍ ໃບອະນຸຍາດລົງທຶນ ເລກທີ 133/10 ລົງວັນທີ 23 ກັນຍາ 2010 ອອກໂດຍກະຊວງແຜນການ ແລະ ການລົງທຶນ ແລະ ພາຍໃຕ້ໃບທະບຽນວິສະຫະກິດ 0234/ທຈທ ລົງວັນທີ 3 ພຶດສະພາ 2013 ເຊິ່ງອອກໂດຍກະຊວງອຸດສາຫະກຳ ແລະ ການຄ້າ.

ໃນປີ 2025, ທະນາຄານໄດ້ປ່ຽນມູນຄ່າຕາມມູນຄ່າທີ່ລະບຸໄວ້ຈາກ 10,000 ກີບ/ຮຸ້ນ ເປັນ 1,000 ກີບ/ຮຸ້ນ ແລະ ອອກຮຸ້ນໃໝ່ຈຳນວນ 75,333,000 ຮຸ້ນ ມູນຄ່າຕາມມູນຄ່າທີ່ລະບຸໄວ້ 1,000 ກີບ/ຮຸ້ນ ເພື່ອສະເໜີຂາຍຮຸ້ນໃຫ້ສາທາລະນະຊົນຄັ້ງທຳອິດ (IPO).

ທະນາຄານໄດ້ຮັບໃບຢັ້ງຢືນການອອກຮຸ້ນຈາກຄະນະກຳມະການຄຸ້ມຄອງຫຼັກຊັບ ສຳລັບການອອກຮຸ້ນໃນຕະຫຼາດຫຼັກຊັບລາວ ໃນວັນທີ 28 ສິງຫາ 2025 ແລະ ການຊື້ຂາຍຫຼັກຊັບໄດ້ເລີ່ມຕົ້ນໃນວັນທີ 10 ຕຸລາ 2025 ແລະ ໄດ້ຖືກຈົດທະບຽນໃນຕະຫຼາດຫຼັກຊັບລາວໃນວັນດຽວກັນ.

ກິດຈະກຳຫຼັກຂອງທະນາຄານແມ່ນໃຫ້ບໍລິການທາງດ້ານ: ການລະດົມທຶນ ແລະ ການຮັບຝາກເງິນໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ຈາກບັນດາອົງການຈັດຕັ້ງ ແລະ ບຸກຄົນຕ່າງໆ; ການປ່ອຍກູ້ໄລຍະສັ້ນ,ໄລຍະກາງ ແລະ ໄລຍະຍາວໃຫ້ແກ່ອົງການຈັດຕັ້ງ ແລະ ບຸກຄົນທົ່ວໄປ ອີງຕາມເນື້ອໃນ ແລະ ຄວາມອາດສາມາດຂອງແຫຼ່ງເງິນທຶນຂອງທະນາຄານ; ການເຮັດທຸລະກຳເງິນຕາຕ່າງປະເທດ; ບໍລິການດ້ານການເງິນລະຫວ່າງປະເທດ; ສ່ວນຫຼຸດໃບຢັ້ງຢືນການຄ້າ, ພັນທະບັດ ແລະ ເອກະສານທີ່ມີມູນຄ່າຕ່າງໆ; ໃຫ້ບໍລິການອື່ນໆດ້ານການທະນາຄານຕາມທີ່ທະນາຄານແຫ່ງ ສປປ ລາວ ວາງອອກ.

ທຶນຈົດທະບຽນ

ທຶນຈົດທະບຽນຖອກແລ້ວຂອງທະນາຄານ ໃນວັນທີ 31 ທັນວາ 2025 ແມ່ນ 750,000 ລ້ານກີບ (31 ທັນວາ 2024: 674,666 ລ້ານກີບ)

**ສະພາບໍລິຫານ**

ສະມາຊິກສະພາບໍລິຫານຂອງທະນາຄານ ພາຍໃນປີທີ່ສິ້ນສຸດວັນທີ 31 ທັນວາ 2025 ແລະ ໃນວັນທີ ທີ່ອອກບົດລາຍງານສະບັບນີ້ປະກອບມີ:

| ຊື່ | ຕຳແໜ່ງ | ວັນທີແຕ່ງຕັ້ງ |
|---|---|---|
| ທ່ານ ວິໄລ ສີພະພອນ | ປະທານ | ແຕ່ງຕັ້ງ ວັນທີ 15 ພຶດສະພາ 2025 |
| ທ່ານ ນາງ ພອນສະໄຫມ ສຸຂະພົນ | ຮອງປະທານ | ແຕ່ງຕັ້ງ ວັນທີ 15 ພຶດສະພາ 2025 |
| ທ່ານ ສາຄອນ ຍໍພັນໄຊ | ສະມາຊິກ | ແຕ່ງຕັ້ງ ວັນທີ 15 ພຶດສະພາ 2025 |
| ທ່ານ ຄຳສິງ ສອນສີນນະວົງ | ສະມາຊິກ | ແຕ່ງຕັ້ງ ວັນທີ 15 ພຶດສະພາ 2025 |
| ທານ ວິລັນເດດ ໄວຍະສິນສັກ | ສະມາຊິກ | ແຕ່ງຕັ້ງ ວັນທີ 15 ພຶດສະພາ 2025 |
| ທ່ານ ວິສຸດ ບົວສີສະອາດ | ສະມາຊິກ | ແຕ່ງຕັ້ງ ວັນທີ 15 ພຶດສະພາ 2025 |
| ທ່ານ ບຸນຊຸ່ມ ສີສະຫວັດ | ສະມາຊິກ | ແຕ່ງຕັ້ງ ວັນທີ 15 ພຶດສະພາ 2025 |
| ທ່ານ ສຸກສະຫວັນ ມະນີວັນ | ສະມາຊິກ | ແຕ່ງຕັ້ງ ວັນທີ 15 ພຶດສະພາ 2025 |
| ທ່ານ ຈອມຄຳ ບຸບຜາລີວັນ | ສະມາຊິກ | ແຕ່ງຕັ້ງ ວັນທີ 15 ພຶດສະພາ 2025 |

## ທະນາຄານຮ່ວມພັດທະນາ ມະຫາຊົນ

### ຂໍ້ມູນທົ່ວໄປ

#### ຄະນະອຳນວຍການ

ສະມາຊິກຄະນະອຳນວຍການ ພາຍໃນປີທີ່ສິ້ນສຸດວັນທີ 31 ທັນວາ 2025 ແລະ ໃນວັນທີ ທີ່ອອກບົດລາຍງານສະບັບນີ້ປະກອບມີ:

| ຊື່ | ຕຳແໜ່ງ | ວັນທີແຕ່ງຕັ້ງ / ລາອອກ |
|---|---|---|
| ທ່ານ ສາຄອນ ຍໍພັນໄຊ | ອຳນວຍການ | ແຕ່ງຕັ້ງ ວັນທີ 13 ຕຸລາ 2025 |
| ທ່ານ ວິລັນເດດ ໄວຍະສິນສັກ | ຮອງອຳນວຍການ | ແຕ່ງຕັ້ງ ວັນທີ 13 ຕຸລາ 2025 |
| ທ່ານ ຈັນທະພອນ ຈັນທະວົງ | ຮອງອຳນວຍການ | ແຕ່ງຕັ້ງ ວັນທີ 13 ຕຸລາ 2025 |
| ທ່ານ ຈັນຊະນະ ສີງຫາວົງ | ຮອງອຳນວຍການ | ແຕ່ງຕັ້ງ ວັນທີ 13 ຕຸລາ 2025 |
| ທ່ານ ນາງ ຄອນສະຫວັນ ວິຊາເທບ | ຮອງອຳນວຍການ | ແຕ່ງຕັ້ງ ວັນທີ 13 ຕຸລາ 2025 |
| ທ່ານ ນາງ ນິດຕາ ນາມມະວົງ | ຮອງອຳນວຍການ | ແຕ່ງຕັ້ງ ວັນທີ 13 ຕຸລາ 2025 |
| ທ່ານ ໄຊ ບຸລົມມະວົງ | ຮອງອຳນວຍການ | ແຕ່ງຕັ້ງ ວັນທີ 13 ຕຸລາ 2025 |
| ທ່ານ ວິລະພົງ ພິຈິດ | ຮອງອຳນວຍການ | ແຕ່ງຕັ້ງ ວັນທີ 13 ຕຸລາ 2025 |

#### ຕົວແທນທາງດ້ານກົດໝາຍ

ຕົວແທນທາງດ້ານກົດໝາຍຂອງທະນາຄານ ພາຍໃນປີທີ່ສິ້ນສຸດ ວັນທີ 31 ທັນວາ 2025 ແລະ ນະວັນທີອອກເອກະສານລາຍງານການເງິນສະບັບນີ້ແມ່ນ ທ່ານ ສາຄອນ ຍໍພັນໄຊ - ຜູ້ອຳນວຍການ.

#### ນັກກວດສອບ

ຜູ້ກວດສອບບັນຊີຂອງທະນາຄານ ແມ່ນ ບໍລິສັດ ພຣາຍສ໌ວໍເຕີເຮົ້າສ໌ກູບເປີສ໌ (ລາວ) ຈຳກັດ ຜູ້ດຽວ

**ທະນາຄານຮ່ວມພັດທະນາ ມະຫາຊົນ**

## ບົດລາຍງານຂອງຄະນະອຳນວຍການ

ຄະນະອຳນວຍການຂອງທະນາຄານຮ່ວມພັດທະນາ ມະຫາຊົນ ("ທະນາຄານ") ມີຄວາມຍິນດີໃນການນຳສະເໜີເອກະສານລາຍງານການເງິນຂອງທະນາຄານ ສຳລັບປີສິ້ນສຸດວັນທີ 31 ທັນວາ 2025.

### ຄວາມຮັບຜິດຊອບຂອງຄະນະອຳນວຍການຕໍ່ເອກະສານລາຍງານການເງິນ

ຄະນະອຳນວຍການຂອງທະນາຄານມີໜ້າທີ່ຮັບຜິດຊອບຕໍ່ການກະກຽມເອກະສານລາຍງານການເງິນ ທີ່ສະແດງໃຫ້ເຫັນຄວາມຖືກຕ້ອງຕາມຄວາມເປັນຈິງ ສຳລັບຖານະການເງິນ ແລະ ຜົນການດຳເນີນງານ ແລະ ກະແສເງິນສົດຂອງທະນາຄານພາຍໃນປີ. ໃນການກະກຽມເອກະສານລາຍງານການເງິນ. ຄະນະອຳນວຍການຂອງທະນາຄານຈະຕ້ອງ:

- ເລືອກເຟັ້ນເອົານະໂຍບາຍການບັນຊີທີ່ເໝາະສົມ ແລະ ນຳໃຊ້ຢ່າງສະໝໍ່າສະເໝີ;
- ພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ຮອບຄອບ;
- ຖະແຫລງການວ່າ ບັນດາມາດຕະຖານການບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດຕາມມາດຕະຖານ. ສິ່ງທີ່ໄດ້ປະຕິບັດແຕກຕ່າງຈາກມາດຕະຖານຈະຕ້ອງຖືກເປີດເຜີຍ ແລະ ອະທິບາຍຢູ່ໃນເອກະສານລາຍງານການເງິນ; ແລະ
- ກະກຽມເອກະສານລາຍງານການເງິນບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ. ຍົກເວັ້ນໃນກໍລະນີທີ່ທະນາຄານຫາກຕັ້ງຂໍ້ສົມມຸດຖານ ຫລື ຄາດຄະເນວ່າທະນາຄານຈະບໍ່ສາມາດດຳເນີນທຸລະກິດຕໍ່ໄປໄດ້.

ຄະນະອຳນວຍການຂອງທະນາຄານຮັບປະກັນວ່າ ບັນດາຂໍ້ມູນທາງການບັນຊີທີ່ຖືກບັນທຶກໄວ້ນັ້ນ ໄດ້ສະແດງເຖິງຄວາມຖືກຕ້ອງຢູ່ຕະຫລອດ. ຮັບປະກັນວ່າທຸກໆການເຄື່ອນໄຫວ ແລະ ຖານະການເງິນຂອງທະນາຄານ ແລະ ການບັນທຶກການບັນຊີແມ່ນສອດຄ່ອງກັບລະບົບການບັນຊີທີ່ໄດ້ນຳໃຊ້. ທະນາຄານຍັງຮັບຜິດຊອບຕໍ່ການຮັກສາຊັບສົມບັດຄົງທີ່ຂອງທະນາຄານ ແລະ ຮັບປະກັນວ່າທະນາຄານມີ ຂັ້ນຕອນຄົ້ນຫາ ແລະ ປ້ອງກັນການສໍ້ໂກງ ແລະ ສິ່ງທີ່ຜິດປົກກະຕິອື່ນໆ.

ຄະນະອຳນວຍການຂອງທະນາຄານໄດ້ຢັ້ງຢືນວ່າ ທະນາຄານ ໄດ້ປະຕິບັດຕາມຂໍ້ກຳນົດຂ້າງເທິງໃນການກະກຽມເອກະສານລາຍງານການເງິນ.

### ຖະແຫລງການຂອງຄະນະອຳນວຍການ

ຄະນະອຳນວຍການຂອງທະນາຄານມີຄວາມຍິນດີຖະແຫລງວ່າ ເອກະສານລາຍງານການເງິນສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2025 ໄດ້ສະແດງສະຖານະທາງການເງິນຂອງທະນາຄານ ຢ່າງຖືກຕ້ອງ ແລະ ສອດຄ່ອງກັບລະບຽບການ ແລະ ແຈ້ງການທີ່ກ່ຽວຂ້ອງ ຂອງ ທະນາຄານແຫ່ງ ສປປ ລາວ ແລະ ນະໂຍບາຍການບັນຊີ ຊຶ່ງອະທິບາຍໃນ ບົດອະທິບາຍຊ້ອນທ້າຍ ຂໍ້ທີ 2 ຂອງເອກະສານລາຍງານສະບັບນີ້.

ຕາງໜ້າ ແລະ ໃນນາມຂອງຄະນະອຳນວຍການ:

ທ່ານ ສາຄອນ ຍໍພັນໄຊ
ຜູ້ອຳນວຍການ

ນະຄອນຫຼວງວຽງຈັນ. ສປປ ລາວ
ວັນທີ: 28 ເມສາ 2026

pwc

**ບົດລາຍງານຂອງຜູ້ກວດສອບບັນຊີອິດສະຫຼະ**

**ເຖິງ: ຂາຮຸ້ນທະນາຄານ ຮ່ວມພັດທະນາ ມະຫາຊົນ**

## ຄວາມເຫັນ

ພວກເຮົາມີຄວາມເຫັນວ່າເອກະສານລາຍງານການເງິນ ຂອງ ທະນາຄານຮ່ວມພັດທະນາ ມະຫາຊົນ (“ທະນາຄານ”) ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2025 ໄດ້ສະແດງສະຖານະທາງການເງິນຂອງທະນາຄານ ຢ່າງຖືກຕ້ອງ ແລະ ສອດຄ່ອງກັບລະບຽບການ ແລະ ແຈ້ງການທີ່ກ່ຽວຂ້ອງ ຂອງ ທະນາຄານ ແຫ່ງ ສປປ ລາວ ແລະ ນະໂຍບາຍການບັນຊີ ຊຶ່ງອະທິບາຍໃນ ບົດອະທິບາຍຊ້ອນທ້າຍ ຂໍ້ທີ 2 ຂອງເອກະສານລາຍງານສະບັບນີ້.

## ເອກະສານລາຍງານການເງິນທີ່ກວດສອບ

ເອກະສານລາຍງານການເງິນຂອງທະນາຄານປະກອບດ້ວຍ:

- ໃບລາຍງານຜົນການດຳເນີນງານ ສຳລັບປີສິ້ນສຸດມື້ດຽວກັນ
- ໃບລາຍງານຖານະການເງິນ ໃນວັນທີ 31 ທັນວາ 2025
- ໃບລາຍງານສ່ວນປ່ຽນແປງທຶນ ສຳລັບປີສິ້ນສຸດມື້ດຽວກັນ
- ໃບລາຍງານກະແສເງິນສົດ ສຳລັບປີສິ້ນສຸດມື້ດຽວກັນ ແລະ
- ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນທີ່ສັງລວມຫຼັກການບັນຊີທີ່ສຳຄັນ ແລະ ຂໍ້ມູນອະທິບາຍອື່ນໆ.

## ພື້ນຖານໃນການອອກຄວາມເຫັນ

ພວກເຮົາໄດ້ດຳເນີນການກວດສອບ ຕາມມາດຕະຖານການກວດສອບສາກົນ (ISAs) ຄວາມຮັບຜິດຊອບຂອງພວກເຮົາພາຍໃຕ້ມາດຕະຖານໄດ້ລະບຸໄວ້ໃນໜ້າທີ່ຮັບຜິດຊອບຂອງຜູ້ກວດສອບພາຍນອກ ສຳລັບການກວດສອບ ເອກະສານລາຍງານການເງິນ ຂອງບົດລາຍງານພວກເຮົາ.

ພວກເຮົາເຊື່ອວ່າຫລັກຖານການກວດສອບທີ່ພວກເຮົາໄດ້ຮັບພຽງພໍ ແລະ ເຫມາະສົມເພື່ອເປັນພື້ນຖານສຳລັບການອອກຄວາມເຫັນຂອງພວກເຮົາ.

## ຄວາມເປັນອິດສະຫລະ

ພວກເຮົາມີຄວາມເປັນອິດສະຫຼະ ຈາກ ທະນາຄານ ຕາມຂໍ້ກຳນົດຈັນຍາບັນ ຂອງຜູ້ປະກອບວິຊາຊີບນັກບັນຊີ (ລວມເຖິງມາດຕະຖານຄວາມເປັນອິດສະຫຼະສາກົນ) ທີ່ກຳນົດໂດຍຄະນະກຳມະການຈັນຍາບັນ ນານາຊາດ ສຳລັບນັກບັນຊີ (IESBA Code). ພວກເຮົາໄດ້ປະຕິບັດຕາມຄວາມຮັບຜິດຊອບຫຼັກຈັນຍາບັນອື່ນໆ. ທີ່ສອດຄ່ອງກັບ ຈັນຍາບັນວິຊາຊີບນັກບັນຊີ (IESBA Code).

**ເນັ້ນໜັກໃສ່ໃນເລື່ອງ - ພື້ນຖານ ການບັນຊີ**

ພວກເຮົາຂໍເນັ້ນໃສ່ບົດອະທິບາຍຊ້ອນທ້າຍ 2 ຂອງເອກະສານລາຍງານການເງິນ, ເຊິ່ງອະທິບາຍພື້ນຖານຂອງການບັນຊີ. ເອກະສານລາຍງານການເງິນໄດ້ຖືກກະກຽມຕາມນະໂຍບາຍການບັນຊີຂອງທະນາຄານ ເຊິ່ງອາດຈະແຕກຕ່າງຈາກມາດຕະຖານການລາຍງານທາງການເງິນສາກົນ (IFRS). ດັ່ງນັ້ນ, ຜູ້ອ່ານຄວນຮັບຮູ້ວ່າເອກະສານລາຍງານການເງິນທີ່ປະກອບມາພ້ອມນີ້ບໍ່ໄດ້ມີຈຸດປະສົງເພື່ອນຳສະເໜີຖານະທາງການເງິນ ແລະ ຜົນການດຳເນີນງານທາງການເງິນ ແລະ ກະແສເງິນສົດຕາມ IFRS. ຄວາມຄິດເຫັນຂອງພວກເຮົາບໍ່ໄດ້ຖືກດັດແປງກ່ຽວກັບເລື່ອງນີ້.

**ເລື່ອງການກວດສອບຫຼັກ**

| ເລື່ອງການກວດສອບຫຼັກ | ວິທີການກວດສອບຂອງພວກເຮົາໄດ້ແກ້ໄຂບັນຫາການກວດສອບທີ່ສຳຄັນ |
|---|---|
| ***ເງິນແຮສຳລັບເງິນກູ້ຢືມໃຫ້ລູກຄ້າສິນເຊື່ອ***<br><br>ບົດອະທິບາຍຊ້ອນທ້າຍ 16.3 – ເງິນແຮສຳລັບເງິນກູ້ຢືມໃຫ້ລູກຄ້າສິນເຊື່ອ.<br><br>ໃນວັນທີ 31 ທັນວາ 2025, ເງິນກູ້ໃຫ້ລູກຄ້າມີມູນຄ່າ 25,126,112 ລ້ານກີບ, ເຊິ່ງກວມເອົາປະມານ 57% ຂອງຊັບສິນທັງໝົດຂອງທະນາຄານ, ເງິນແຮສຳລັບເງິນກູ້ຢືມໃຫ້ລູກຄ້າມີມູນຄ່າ 104,179 ລ້ານກີບ.<br><br>ການສຳຮອງຄ່າເສື່ອມມູນຄ່າ ເງິນກູ້ໃຫ້ກູ້ຢືມແກ່ລູກຄ້າແມ່ນໄດ້ຕັ້ງ ຂຶ້ນໂດຍອີງໃສ່ຈຳນວນວັນຄ້າງຊຳລະຕາມການກຳນົດໃນແຈ້ງການ 512/BOL ລົງວັນທີ 29 ມິຖຸນາ 2018. ເຖິງຢ່າງໃດກໍ່ຕາມ, ພວກເຮົາໄດ້ພິຈາລະນາວ່າມີຄວາມສຳຄັນໃນການກວດສອບຂອງພວກເຮົາ ເນື່ອງຈາກການປະເມີນສຳຮອງຄ່າເຊື່ອມມູນຄ່າເງິນກູ້ທີ່ກ່ຽວຂ້ອງກັບການຕັດສິນໃຈຂອງທາງຜູ້ບໍລິຫານໃນການຈັດປະເພດເງິນກູ້ ທີ່ມີປະສິດທິພາບ ຫຼື ບໍ່ມີປະສິດທິພາບໂດຍອີງໃສ່ປັດໄຈດ້ານປະລິມານ ແລະ ຄຸນນະພາບ.<br><br>ອີງຕາມລະດັບຄວາມສຳຄັນຕາມຄວາມເປັນຕົວຕົນ ແລະ ການຄາດຄະເນທີ່ບໍ່ແນ່ນອນ, ການຕັ້ງສຳຮອງຄ່າເສື່ອມມູນຄ່າສຳລັບເງິນກູ້ຢືມໃຫ້ລູກຄ້າແມ່ນເລື່ອງການກວດສອບຫຼັກ. | ພວກເຮົາໄດ້ປະຕິບັດຂັ້ນຕອນການກວດສອບຕໍ່ໄປນີ້ເພື່ອແກ້ໄຂຄວາມສ່ຽງທີ່ກ່ຽວຂ້ອງກັບການສຳຮອງເງິນກູ້ສຳລັບການສູນເສຍສິນເຊື່ອຂອງເງິນກູ້ໃຫ້ລູກຄ້າ:<br><br>• ພວກເຮົາໄດ້ປະຕິບັດຂັ້ນຕອນການປະເມີນຄວາມສ່ຽງໂດຍການປະເມີນທັງປັດໃຈພາຍໃນ ແລະ ພາຍນອກທີ່ອາດຈະສົ່ງຜົນກະທົບຕໍ່ປະສິດທິພາບການດຳເນີນງານຂອງລູກຄ້າເງິນກູ້ສ່ວນບຸກຄົນ, ຂະແໜງອຸດສາຫະກຳ ແລະ ກຸ່ມລູກຄ້າ. ລວມທັງການປະເມີນວ່າປັດໃຈດັ່ງກ່າວອາດຈະສົ່ງຜົນກະທົບຕໍ່ການຕັດສິນໃຈ ແລະ ການຄາດຄະເນຂອງຝ່າຍບໍລິຫານໃນການກຳນົດເງິນສຳຮອງສຳລັບການສູນເສຍສິນເຊື່ອຂອງເງິນກູ້ແນວໃດ.<br><br>• ພວກເຮົາໄດ້ປະເມີນ ແລະ ທົດສອບການຄວບຄຸມທົ່ວໄປດ້ານເຕັກໂນໂລຊີຂໍ້ມູນຂ່າວສານກ່ຽວກັບໂປຣແກຣມການເຂົ້າເຖິງ ແລະ ຂໍ້ມູນ, ການຄວບຄຸມຄວາມຄົບຖ້ວນຂອງຂໍ້ມູນຂອງລູກຄ້າທີ່ນຳໃຊ້ໃນການຄິດໄລ່ເງິນສຳຮອງສຳລັບການສູນເສຍສິນເຊື່ອ.<br><br>• ພວກເຮົາໄດ້ປະເມີນ ແລະ ທົດສອບການຄວບຄຸມຄູ່ມືທີ່ສຳຄັນກ່ຽວກັບຂະບວນການໃຫ້ກູ້ຢືມແກ່ລູກຄ້າ ແລະ ການສະຫງວນສຳລັບການສູນເສຍສິນເຊື່ອດັ່ງຕໍ່ໄປນີ້:<br><br>- ຂັ້ນຕອນການກຳນົດ ແລະ ການອະນຸມັດເງິນກູ້<br>- ຂະບວນການປະເມີນມູນຄ່າຫຼັກຊັບຄ້ຳປະກັນ<br>- ຄວາມຖືກຕ້ອງ ແລະ ຄວາມຄົບຖ້ວນຂອງການປ້ອນຂໍ້ມູນເຂົ້າໃນລະບົບທະນາຄານຫຼັກ. |

pwc

**ເລື່ອງການກວດສອບຫຼັກ**

| ເລື່ອງການກວດສອບຫຼັກ | ວິທີການກວດສອບຂອງພວກເຮົາໄດ້ແກ້ໄຂບັນຫາການກວດສອບທີ່ສຳຄັນ |
|---|---|
| ດັ່ງນັ້ນ, ພວກເຮົາໄດ້ເນັ້ນໜັກໃສ່ຫົວຂໍ້ນີ້ເປັນຫຼັກ ເນື່ອງຈາກຄວາມສ່ຽງທີ່ອາດເກີດຈາກການສະແດງຂໍ້ມູນທີ່ຜິດພາດ ເຊິ່ງເກີດຂຶ້ນຈາກການນຳໃຊ້ຂໍ້ກຳນົດດ້ານກົດລະບຽບ ແລະ ການຕັດສິນໃຈໃນການຄາດຄະເນຂອງຜູ້ບໍລິຫານໃນການປະເມີນຫັກເງິນແຮສຳລັບເງິນໃຫ້ກູ້ຢືມໃຫ້ລູກຄ້າສິນເຊື່ອ. | • ໃນຕົວຢ່າງ, ພວກເຮົາໄດ້ກວດສອບເງິນກູ້ທີ່ຖືກສຳຮອງຄ່າເສື່ອມມູນຄ່າ ທີ່ໄດ້ຈັດປະເພດຕາມບົນພື້ນຖານລາຍລູກຄ້າເງິນກູ້. ຂັ້ນຕອນຂອງພວກເຮົາປະກອບມີ:<br>- ໄດ້ປະເມີນ ແລະ ທົດສອບຄວາມຄົບຖ້ວນ ແລະ ຄວາມຖືກຕ້ອງຂອງຍອດເງິນກູ້ ແລະ ເງິນສຳຮອງສຳລັບການເສື່ອມຄ່າໃນວັນທີລາຍງານ;<br>- ໄດ້ທົດສອບການຈັດປະເພດຂອງເງິນກູ້ຂອງທະນາຄານຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ;<br>- ໄດ້ປະເມີນ ແລະ ທົດສອບຜົນກະທົບຂອງການປັບປຸງໂຄງສ້າງເງິນກູ້ຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ;<br>- ໄດ້ຄຳນວນການສຳຮອງຄ່າເສື່ອມມູນຄ່າ ເງິນກູ້ຄືນໃໝ່.<br><br>• ພວກເຮົາໄດ້ທົບທວນຄືນວຽກງານທີ່ປະຕິບັດໂດຍຜູ້ປະເມີນມູນຄ່າມືອາຊີບທີ່ເປັນເອກະລາດທີ່ທະນາຄານຈ້າງເພື່ອປະເມີນມູນຄ່າຫຼັກຊັບຄ້ຳປະກັນ. ພວກເຮົາໄດ້ປະເມີນຄຸນວຸດທິ ແລະ ຄວາມເປັນເອກະລາດຂອງເຂົາເຈົ້າ ແລະ ໄດ້ທົດສອບ, ໂດຍອີງໃສ່ຕົວຢ່າງ, ວ່າຝ່າຍບໍລິຫານໄດ້ນຳໃຊ້ຜົນການປະເມີນມູນຄ່າຫຼັກຊັບຄ້ຳປະກັນຢ່າງເໝາະສົມໃນການກຳນົດເງິນແຮສຳລັບການສູນເສຍສິນເຊື່ອຂອງເງິນກູ້ໃຫ້ລູກຄ້າຫຼືບໍ່.<br><br>ອີງຕາມຂັ້ນຕອນທີ່ໄດ້ປະຕິບັດ, ພວກເຮົາໄດ້ປະເມີນຄວາມຄົບຖ້ວນ ແລະ ຄວາມຖືກຕ້ອງຂອງການຕັ້ງສຳຮອງຄ່າເສື່ອມມູນຄ່າຂອງເງິນກູ້ໃຫ້ລູກຄ້າ ແລະ ການເປີດເຜີຍທີ່ກ່ຽວຂ້ອງໃນງົບການເງິນ ແລະ ໄດ້ປະເມີນການປະຕິບັດຕາມຂໍ້ກຳນົດຂອງທະນາຄານແຫ່ງ ສປປ ລາວ. |

**ຂໍ້ມູນອື່ນໆ**

ຜູ້ອຳນວຍການມີຄວາມຮັບຜິດຊອບຕໍ່ຂໍ້ມູນອື່ນໆ. ຂໍ້ມູນອື່ນໆປະກອບດ້ວຍຂໍ້ມູນທີ່ລວມຢູ່ໃນບົດລາຍງານປະຈຳປີ, ແຕ່ບໍ່ລວມເຖິງເອກະສານລາຍງານການເງິນ ແລະ ບົດລາຍງານຂອງຜູ້ກວດສອບບັນຊີຂອງພວກເຮົາ. ບົດລາຍງານປະຈຳປີຄາດວ່າຈະມີໃຫ້ພວກເຮົາຫຼັງຈາກວັນທີຂອງບົດລາຍງານຂອງຜູ້ກວດສອບບັນຊີນີ້.

ຄວາມຄິດເຫັນຂອງພວກເຮົາກ່ຽວກັບເອກະສານລາຍງານການເງິນບໍ່ໄດ້ກວມເອົາຂໍ້ມູນອື່ນໆ ແລະ ພວກເຮົາຈະບໍ່ສະແດງການສະຫຼຸບການຮັບປະກັນໃດໆກ່ຽວກັບເອກະສານນັ້ນໆ.

ໃນການກວດສອບເອກະສານລາຍງານການເງິນຂອງພວກເຮົາ, ຄວາມຮັບຜິດຊອບຂອງພວກເຮົາແມ່ນການອ່ານຂໍ້ມູນອື່ນໆທີ່ລະບຸໄວ້ຂ້າງເທິງ ແລະ ພິຈາລະນາວ່າຂໍ້ມູນນັ້ນສອດຄ່ອງກັບເອກະສານລາຍງານການເງິນ ຫຼື ຄວາມຮູ້ຂອງພວກເຮົາທີ່ໄດ້ຮັບຈາກການກວດສອບ ຫຼື ມີການລະບຸຜິດພາດ.

ເມື່ອພວກເຮົາອ່ານບົດລາຍງານປະຈຳປີ, ຖ້າພວກເຮົາສະຫຼຸບວ່າມີຂໍ້ມູນທີ່ບໍ່ຖືກຕ້ອງທີ່ສຳຄັນ, ພວກເຮົາຈຳເປັນຕ້ອງແຈ້ງເລື່ອງດັ່ງກ່າວໄປຫາຄະນະກຳມະການກວດສອບ.

ບໍລິສັດ ພຣາຍສ໌ວໍເຕີເຮົ້າສກູບເປີສ (ລາວ) ຈຳກັດຜູ້ດຽວ
ອາຄານ AGL, ຊັ້ນ 4, ອາຄານເລກທີ 33ຖະໜົນລ້ານຊ້າງ,
ຕູ້ ປ.ນ 7003, ນະຄອນຫຼວງວຽງຈັນ, ສປປ ລາວ,
ໂທ: +856 21 222718-9

www.pwc.com

pwc

**ຄວາມຮັບຜິດຊອບຂອງຄະນະຜູ້ອຳນວຍການ ຕໍ່ເອກະສານລາຍງານການເງິນ**

ຄະນະຜູ້ອຳນວຍການມີຄວາມຮັບຜິດຊອບສຳລັບການກະກຽມເອກະສານລາຍງານການເງິນ ໂດຍສອດຄ່ອງກັບ ລະບຽບການ ການບັນຊີທີ່ກ່ຽວຂ້ອງ ແລະ ແຈ້ງການ ຂອງ ທະນາຄານແຫ່ງ ສປປ ລາວ ແລະ ນະໂຍບາຍການບັນຊີ ດັ່ງທີ່ໄດ້ອະທິບາຍໄວ້ໃນ ບົດອະທິບາຍຊ້ອນທ້າຍ ຂໍ້ທີ 2 ຂອງເອກະສານລາຍງານການເງິນນີ້ ແລະ ການຄວບຄຸມພາຍໃນ ເຊິ່ງຜູ້ອຳນວຍການໄດ້ກຳນົດໄວ້ຢ່າງພຽງພໍ ເພື່ອສ້າງເອກະສານລາຍງານການເງິນ ທີ່ປາສະຈາກ ການລາຍງານບໍ່ຖືກຕ້ອງ ອັນເນື່ອງມາຈາກການສໍ້ໂກງ ຫຼື ຂໍ້ຜິດພາດ.

ໃນການກະກຽມເອກະສານລາຍງານການເງິນ, ຜູ້ອຳນວຍການມີຄວາມຮັບຜິດຊອບໃນການປະເມີນຄວາມສາມາດ ຂອງທະນາຄານໃນການດຳເນີນງານຢ່າງຕໍ່ເນື່ອງ, ເປີດເຜີຍເລື່ອງທີ່ກ່ຽວຂ້ອງກ່ຽວກັບການດຳເນີນງານຕໍ່ເນື່ອງ ຕາມຄວາມເໝາະສົມ ແລະ ການໃຊ້ພື້ນຖານບັນຊີສຳຫຼັບການດຳເນີນງານຢ່າງຕໍ່ເນື່ອງ, ຍົກເວັ້ນ ຜູ້ອຳນວຍການມີຄວາມຕັ້ງໃຈທີ່ຈະຍຸບ ກິດຈະການ ຫຼື ບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງໄດ້.

ຄະນະກຳມະການກວດສອບຊ່ວຍຜູ້ອຳນວຍການໃນການປະຕິບັດໜ້າທີ່ຮັບຜິດຊອບຂອງພວກເຂົາໃນການກວດສອບຂະບວນການລາຍງານທາງການເງິນຂອງບໍລິສັດ.

**ຄວາມຮັບຜິດຊອບຂອງຜູ້ກວດສອບ ຕໍ່ເອກະສານລາຍງານການເງິນ**

ວັດຖຸປະສົງຂອງພວກເຮົາ ແມ່ນເພື່ອໃຫ້ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າເອກະສານລາຍງານການເງິນປາສະຈາກການສະແດງຂໍ້ມູນຜິດພາດທີ່ເປັນສາລະສຳຄັນ, ບໍ່ວ່າເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ສະເໜີຄວາມເຫັນຂອງພວກເຮົາຕໍ່ເອກະສານລາຍງານການເງິນເຊິ່ງລວມຄວາມເຫັນຂອງຜູ້ກວດສອບ. ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນຄືຄວາມເຊື່ອໝັ້ນໃນລະດັບສູງແຕ່ບໍ່ໄດ້ເປັນການຮັບປະກັນວ່າການດຳເນີນການກວດສອບຕາມມາດຕະຖານການກວດສອບບັນຊີສາກົນຈະສາມາດກວດພົບ ຫຼື ປ້ອງກັນການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງທີ່ເປັນສາລະສຳຄັນສະເໝີໄປ ຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງອາດເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ຖືວ່າເປັນສາລະສຳຄັນເມື່ອຄາດການຢ່າງສົມເຫດສົມຜົນໄດ້ວ່າລາຍການຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງແຕ່ລະລາຍການ ຫຼື ທຸກລາຍການລວມກັນມີຜົນຕໍ່ການຕັດສິນໃຈທາງເສດຖະກິດຕໍ່ຜູ້ໃຊ້ເອກະສານລາຍງານການເງິນເຫຼົ່ານີ້.

ໃນການກວດສອບຂອງພວກເຮົາອີງຕາມມາດຕະຖານການກວດສອບບັນຊີສາກົນ, ພວກເຮົາໄດ້ໃຊ້ການປະເມີນຕາມຫຼັກວິຊາຊີບທີ່ຄວນຈະມີຕະຫຼອດການກວດສອບ. ການດຳເນີນງານຂອງພວກເຮົາລວມມີ:

- ການລະບຸ ແລະ ການປະເມີນຄວາມສ່ຽງຂອງການລາຍງານຜິດພາດທີ່ເປັນສາລະສຳຄັນຂອງເອກະສານລາຍງານການເງິນ ເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ, ການວາງແຜນ ແລະ ການດຳເນີນງານຕາມວິທີການກວດສອບເພື່ອຕອບສະໜອງຕໍ່ຄວາມສ່ຽງເຫຼົ່ານັ້ນ ແລະ ຫຼັກຖານທີ່ໄດ້ຈາກການກວດສອບ ທີ່ພວກເຮົາໄດ້ຮັບ ແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານສຳລັບການສະແດງຄຳເຫັນຂອງພວກເຮົາ. ຄວາມສ່ຽງທີ່ຈະບໍ່ພົບຂໍ້ມູນທີ່ຜິດພາດ ແລະ ເປັນສາລະສຳຄັນ ເຊິ່ງເກີດຈາກການສໍ້ໂກງມີສູງກວ່າຄວາມສ່ຽງທີ່ເກີດຈາກຂໍ້ຜິດພາດ, ເນື່ອງຈາກການສໍ້ໂກງອາດເກີດຈາກການສົມຮູ້ຮ່ວມຄິດປອມແປງເອກະສານຫຼັກຖານ, ການຕັ້ງໃຈລະເວັ້ນທີ່ຈະສະແດງຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ຫຼື ການເຂົ້າແຊກແຊງການຄວບຄຸມພາຍໃນ.
- ທຳຄວາມເຂົ້າໃຈ ແລະ ປະເມີນປະສິດທິພາບຂອງລະບົບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບ ເພື່ອກຳນົດຂັ້ນຕອນໃນການກວດສອບທີ່ແທດເໝາະກັບສະພາບຕົວຈິງ, ແຕ່ບໍ່ມີຈຸດປະສົງເພື່ອສະແດງຄວາມເຫັນກ່ຽວກັບ ປະສິດທິຜົນຂອງການຄວບຄຸມພາຍໃນຂອງທະນາຄານ.
- ປະເມີນຄວາມເໝາະສົມຂອງການນຳໃຊ້ນະໂຍບາຍການບັນຊີ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງບັນຊີ ລວມທັງການເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງທີ່ສ້າງຂຶ້ນໂດຍຜູ້ບໍລິຫານ.

ບໍລິສັດ ພຣາຍສວໍເຕີເຮົ້າສກູບເປີສ (ລາວ) ຈຳກັດຜູ້ດຽວ
ອາຄານ AGL, ຊັ້ນ 4, ອາຄານເລກທີ 33ຖະໜົນລ້ານຊ້າງ,
ຕູ້ ປ.ນ 7003, ນະຄອນຫຼວງວຽງຈັນ, ສປປ ລາວ,
ໂທ: +856 21 222718-9

pwc

- ສະຫລຸບກ່ຽວກັບຄວາມເໝາະສົມຂອງການໃຊ້ພື້ນຖານບັນຊີສຳຫຼັບການດຳເນີນງານຢ່າງຕໍ່ເນື່ອງຂອງຜູ້ບໍລິຫານ ແລະ ຫຼັກຖານການກວດສອບທີ່ໄດ້ຮັບວ່າບໍ່ມີຄວາມແນ່ນອນທີ່ມີສາລະສຳຄັນ ທີ່ກ່ຽວກັບເຫດການ ຫຼື ສະພາບຕົວຈິງທີ່ອາດມີປັດໃຈໃຫ້ເກີດຂໍ້ສົງໃສຢ່າງທີ່ມີສາລະສຳຄັນຕໍ່ຄວາມສາມາດໃນການດຳເນີນງານຢ່າງຕໍ່ເນື່ອງຂອງທະນາຄານ ຫຼື ບໍ່. ຖ້າພວກເຮົາສະຫຼຸບໄດ້ວ່າຄວາມບໍ່ແນ່ນອນທີ່ມີສາລະສຳຄັນ ພວກເຮົາຕ້ອງບັນທຶກໃນບົດລາຍງານຂອງຜູ້ກວດສອບຂອງພວກເຮົາທີ່ໄດ້ເປີດເຜີຍກ່ຽວກັບເອກະສານລາຍງານການເງິນເຊິ່ງການເປີດເຜີຍດັ່ງກ່າວບໍ່ພຽງພໍທີ່ຈະເຮັດໃຫ້ ຄວາມເຫັນຂອງພວກເຮົາຈະປ່ຽນແປງໄປ ຂໍ້ສະຫຼຸບຂອງພວກເຮົາຂຶ້ນຢູ່ກັບຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີ່ໃນບົດລາຍງານຂອງພວກເຮົາ. ເຖິງຢ່າງໃດກໍຕາມ ເຫດການ ຫຼື ສະພາບຕົວຈິງໃນອະນາຄົດອາດເປັນສາເຫດໃຫ້ທະນາຄານບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງໄດ້.

ພວກເຮົາໄດ້ສື່ສານກັບຜູ້ບໍລິຫານ ກ່ຽວກັບຂອບເຂດ ແລະ ຊ່ວງເວລາຂອງການກວດສອບຕາມທີ່ໄດ້ວາງແຜນໄວ້. ເຊິ່ງລວມເຖິງບັນຫາທີ່ສຳຄັນທີ່ພົບເຫັນໃນການກວດສອບ ແລະ ຂໍ້ບົກຜ່ອງຂອງການຄວບຄຸມພາຍໃນທີ່ເປັນສາລະສຳຄັນ ທີ່ພົບລະຫວ່າງການກວດສອບຂອງພວກເຮົາ.

ພວກເຮົາຍັງໄດ້ໃຫ້ຄຳແນະນຳແກ່ຄະນະກຳມະການກວດສອບວ່າພວກເຮົາໄດ້ປະຕິບັດຕາມຂໍ້ກຳນົດດ້ານຈັນຍາບັນທີ່ກ່ຽວຂ້ອງກັບຄວາມເປັນອິດສະຫຼະ ແລະ ສື່ສານກັບພວກເຂົາກ່ຽວກັບສາຍພົວພັນທັງໝົດ ແລະ ເລື່ອງອື່ນໆທີ່ອາດຈະຄິດວ່າມີຜົນກະທົບຕໍ່ຄວາມເປັນອິດສະຫຼະຂອງພວກເຮົາ ແລະ ໃນກໍລະນີທີ່ກ່ຽວຂ້ອງ, ການດຳເນີນການເພື່ອລົບລ້າງອຸປະສັກ ຫຼື ມາດຕະການປ້ອງກັນທີ່ນຳໃຊ້.

ຈາກບັນຫາທີ່ໄດ້ສື່ສານກັບຄະນະກຳມະການກວດສອບ, ພວກເຮົາກຳນົດບັນຫາທີ່ມີຄວາມສຳຄັນທີ່ສຸດໃນການກວດສອບເອກະສານລາຍງານການເງິນໃນປະຈຸບັນ ແລະ ເປັນບັນຫາຫຼັກໃນການກວດສອບ. ພວກເຮົາອະທິບາຍບັນຫາເຫຼົ່ານີ້ໃນບົດລາຍງານຂອງຜູ້ກວດສອບຂອງພວກເຮົາ ເວັ້ນເສຍແຕ່ວ່າກົດໝາຍ ຫຼື ລະບຽບການຫ້າມເປີດເຜີຍຕໍ່ສາທາລະນະກ່ຽວກັບບັນຫາດັ່ງກ່າວ ຫຼື ເມື່ອໃນສະຖານະການທີ່ຫາຍາກທີ່ສຸດ, ພວກເຮົາກຳນົດວ່າບັນຫາດັ່ງກ່າວບໍ່ຄວນຖືກສື່ສານໃນບົດລາຍງານຂອງພວກເຮົາ ເພາະວ່າຜົນສະທ້ອນທາງລົບຂອງການເຮັດແບບນັ້ນຄາດວ່າຈະມີນໍ້າໜັກຫຼາຍກວ່າຜົນປະໂຫຍດສາທາລະນະຂອງການສື່ສານ.

ບໍລິສັດ ພຣາຍສ໌ວໍເຕີເຮົ້າສ໌ກຸບເປີສ໌ (ລາວ) ຈຳກັດຜູ້ດຽວ

ໂດຍ: ອະພິສິດ ທ່ຽງຕົງພົນໂຍ
ຮຸ້ນສ່ວນ

ນະຄອນຫຼວງວຽງຈັນ, ສປປ ລາວ
ວັນທີ: 28 ເມສາ 2026

ບໍລິສັດ ພຣາຍສ໌ວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ
ອາຄານ AGL, ຊັ້ນ 4, ອາຄານເລກທີ 33ຖະໜົນລ້ານຊ້າງ,
ຕູ້ ປ.ນ 7003, ນະຄອນຫຼວງວຽງຈັນ, ສປປ ລາວ,
ໂທ: +856 21 222718-9

ທະນາຄານຮ່ວມພັດທະນາ ມະຫາຊົນ

## ໃບລາຍງານຜົນການດຳເນີນງານ
## ສຳລັບປີສິ້ນສຸດວັນທີ 31 ທັນວາ 2025

| | ບົດ ອະທິບາຍ | 2025 ລ້ານກີບ | 2024 ລ້ານກີບ |
|---|---|---|---|
| **ລາຍຮັບ ແລະ ລາຍຈ່າຍຈາກການດຳເນີນງານ** | | | |
| ລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍ | 3 | 2,287,061 | 1,904,904 |
| ລາຍຈ່າຍດອກເບ້ຍ ແລະ ຄ້າຍຄືດອກເບ້ຍ | 3 | (1,795,384) | (1,436,264) |
| **ລາຍຮັບສຸດທິຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍ** | | **491,677** | **468,640** |
| ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ | 4 | 937,748 | 761,638 |
| ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ | 4 | (152,225) | (126,086) |
| ກຳໄລສຸດທິຈາກລົງທຶນໃນຫຼັກຊັບ | 5 | 34,938 | 41,005 |
| ກຳໄລສຸດທິ ຈາກການຊື້-ຂາຍເງິນຕາຕ່າງປະເທດ | 6 | 143,321 | 279,353 |
| **ລາຍຮັບສຸດທິຈາກການດຳເນີນງານ** | | **1,455,459** | **1,424,550** |
| **ລາຍຮັບ ແລະ ລາຍຈ່າຍອື່ນໆ** | | | |
| ລາຍຮັບອື່ນໆຈາກການດຳເນີນງານ | 7 | 77,934 | 63,421 |
| ລາຍຈ່າຍບໍລິຫານ | | (452,689) | (368,281) |
| *- ເງິນເດືອນ ແລະ ຄ່າໃຊ້ຈ່າຍກ່ຽວກັບພະນັກງານ* | *8* | *(264,661)* | *(205,811)* |
| *- ລາຍຈ່າຍບໍລິຫານອື່ນໆ* | *9* | *(188,028)* | *(162,470)* |
| ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ | | (74,901) | (51,214) |
| ລາຍຈ່າຍອື່ນໆໃນການດຳເນີນງານ | 10 | (87,187) | (148,655) |
| ເງິນແຮສຸດທິຈາກເງິນກູ້ໃຫ້ລູກຄ້າທວງຍາກ | | (4,930) | 1,301 |
| **ລວມກຳໄລກ່ອນເສຍອາກອນ** | | **913,686** | **921,122** |
| ອາກອນກຳໄລພາຍໃນປີ | 28 | (195,608) | (179,861) |
| **ກຳໄລຫຼັງເສຍອາກອນ** | | **718,078** | **741,261** |
| **ກຳໄລຕໍ່ຮຸ້ນ (ກີບ)** | | | |
| ກຳໄລພື້ນຖານຕໍ່ຮຸ້ນ | 30 | 1,038 | 1,221 |

| ກະກຽມໂດຍ: | ອະນຸມັດໂດຍ: | ອະນຸມັດໂດຍ: |
|---|---|---|
| ທ່ານ ນາງ ວິລາຊິນີ ພິຈິດ | ທ່ານ ນາງ ສຸດທິດາ ທຳມະວົງ | ທ່ານ ສາຄອນ ຍໍພັນໄຊ |
| ຫົວໜ້າພະແນກບັນຊີ ແລະ ການເງິນ | ຫົວໜ້າພະແນກກວດສອບພາຍໃນ | ຜູ້ອຳນວຍການ |

ທະນາຄານ ຮ່ວມພັດທະນາ ມະຫາຊົນ JOINT DEVELOPMENT BANK Public

ນະຄອນຫຼວງວຽງຈັນ, ສປປ ລາວ
ວັນທີ: 28 ເມສາ 2026

ທະນາຄານຮ່ວມພັດທະນາ ມະຫາຊົນ

**ໃບລາຍງານຖານະການເງິນ**
**ໃນວັນທີ 31 ທັນວາ 2025**

| | ບົດ ອະທິບາຍ | 2025 ລ້ານກີບ | 2024 ລ້ານກີບ |
|---|---|---|---|
| **ຊັບສິນ** | | | |
| **ເງິນສົດ ແລະ ເງິນຝາກຢູ່ກັບ ທຫລ** | | **7,612,766** | **7,216,139** |
| ເງິນສົດ | 11 | 1,695,840 | 2,476,961 |
| ເງິນຝາກຢູ່ກັບ ທຫລ | 12 | 5,620,015 | 4,557,379 |
| ຄຳ ແລະ ສິ່ງຂອງທີ່ມີຄ່າອື່ນໆ | 13 | 296,911 | 181,799 |
| **ໜີ້ຕ້ອງຮັບຈາກທະນາຄານອື່ນ** | 14 | **2,621,257** | **1,298,605** |
| ເງິນຝາກກະແສລາຍວັນ | | 1,454,857 | 1,219,141 |
| ເງິນຝາກມີກຳນົດ | | 1,153,003 | 73,316 |
| ເງິນຝາກປະຢັດ | | 13,397 | 6,148 |
| **ການລົງທຶນໃນຫຼັກຊັບ** | 15 | **2,548,388** | **997,468** |
| ຫຼັກຊັບສຳລັບການຂາຍ | | 1,710 | 2,350 |
| ຫຼັກຊັບປະເພດຖືໄວ້ຈົນຄົບກຳນົດ | | 1,000,322 | 995,118 |
| ທີ່ດິນຝາກຂາຍ | | 911,644 | - |
| ການລົງທຶນອື່ນໆ | | 634,712 | - |
| **ເງິນໃຫ້ກູ້ຢືມແກ່ລູກຄ້າ, ສຸດທິ ຫຼັງຫັກເງິນແຮສະເພາະ** | 16 | **25,021,933** | **20,548,354** |
| **ການລົງທຶນໃນ ວິສາຫະກິດຮ່ວມທຶນ** | 17 | **11,656** | **2,698** |
| **ຊັບສິນບັດຄົງທີ່** | | **770,057** | **449,371** |
| ຊັບສິນບັດພວມຊື້ ແລະ ພວມກໍ່ສ້າງ | 18 | 22,141 | 7,816 |
| ຊັບສິນບັດຄົງທີ່ບໍ່ມີຕົວຕົນ | 19 | 481,970 | 234,891 |
| ຊັບສິນບັດຄົງທີ່ມີຕົວຕົນ | 20 | 246,852 | 186,095 |
| ສິດນຳໃຊ້ຊັບສິນ | 21 | 19,094 | 20,569 |
| **ຊັບສິນອື່ນໆ** | | **5,197,342** | **2,631,776** |
| ໜີ້ຕ້ອງຮັບດອກເບ້ຍຄ້າງຮັບ | | 273,759 | 222,897 |
| ຊັບສິນອື່ນໆ | 22 | 4,923,583 | 2,408,879 |
| **ລວມຊັບສິນ** | | **43,783,399** | **33,144,411** |

ກະກຽມໂດຍ: ອະນຸມັດໂດຍ: ອະນຸມັດໂດຍ:

ທ່ານ ນາງ ວິລາຊິນີ ພິຈິດ
ຫົວໜ້າພະແນກບັນຊີ ແລະ ການເງິນ

ທ່ານ ນາງ ສຸດທິດາ ທຳມະວົງ
ຫົວໜ້າພະແນກກວດສອບພາຍໃນ

ທ່ານ ສາຄອນ ຍໍພັນໄຊ
ຜູ້ອຳນວຍການ

ນະຄອນຫຼວງວຽງຈັນ, ສປປ ລາວ
ວັນທີ: 28 ເມສາ 2026

ທະນາຄານຮ່ວມພັດທະນາ ມະຫາຊົນ

## ໃບລາຍງານຖານະການເງິນ
## ໃນວັນທີ 31 ທັນວາ 2025

| | ບົດ ອະທິບາຍ | 2025 ລ້ານກີບ | 2024 ລ້ານກີບ |
|---|---|---|---|
| **ໜີ້ສິນ ແລະ ທຶນ** | | | |
| **ໜີ້ສິນ** | | | |
| **ໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນອື່ນໆ** | 23 | **3,174,493** | **2,630,625** |
| ເງິນຝາກກະແສລາຍວັນ ແລະ ເງິນຝາກປະຢັດ | | 518,992 | 214,659 |
| ເງິນຝາກມີກຳນົດ | | 911,331 | 1,360,134 |
| ເງິນກູ້ຢືມຈາກທະນາຄານ ແລະ ສະຖາບັນການເງິນອື່ນໆ | | 1,744,070 | 1,055,809 |
| ໜີ້ຕ້ອງສົ່ງອື່ນໆໃຫ້ທະນາຄານອື່ນໆ | | 100 | 23 |
| **ໜີ້ຕ້ອງສົ່ງໃຫ້ລູກຄ້າ** | 24 | **36,009,458** | **27,476,248** |
| ເງິນຝາກກະແສລາຍວັນ ແລະ ເງິນຝາກປະຢັດ | | 7,106,846 | 7,062,532 |
| ເງິນຝາກມີກຳນົດ | | 28,902,612 | 20,413,716 |
| **ໜີ້ສິນອື່ນໆ** | | **1,927,609** | **1,357,961** |
| ໜີ້ຕ້ອງສົ່ງດອກເບ້ຍຄ້າງຈ່າຍ | | 1,139,943 | 924,446 |
| ໜີ້ສິນອື່ນໆ | | 787,666 | 433,515 |
| **ລວມໜີ້ສິນ** | | **41,111,560** | **31,464,834** |
| **ທຶນ** | | | |
| ທຶນຈົດທະບຽນ | 25 | 750,000 | 674,666 |
| ສ່ວນເກີນມູນຄ່າຮຸ້ນ | 25 | 568,616 | - |
| ເງິນສຳຮອງຕາມກົດໝາຍ | 26 | 148,067 | 73,941 |
| ເງິນສຳຮອງທົ່ວໄປ | 26 | 102,229 | 95,094 |
| ເງິນແຮທົ່ວໄປສຳລັບກິດຈະກຳດ້ານສິນເຊື່ອ | | 107,934 | 91,562 |
| ໜີ້ສິນສຳລັບຊັບສິນທີ່ບໍ່ສາມາດເກັບຄືນໄດ້ | | 341,489 | 94,030 |
| ກຳໄລ/(ຂາດທຶນ) ທີ່ບໍ່ໄດ້ຮັບຈິງຈາກການປະເມີນມູນຄ່າຄຳຄືນໃໝ່ | | 15,408 | (10,995) |
| ກຳໄລສະສົມ | | 638,096 | 661,279 |
| **ລວມທຶນ** | | **2,671,839** | **1,679,577** |
| **ລວມໜີ້ສິນ ແລະ ທຶນ** | | **43,783,399** | **33,144,411** |

| ກະກຽມໂດຍ: | ອະນຸມັດໂດຍ: | ອະນຸມັດໂດຍ: |
|---|---|---|
| ທ່ານ ນາງ ວິລາຊິນີ ພິຈິດ | ທ່ານ ນາງ ສຸດທິດາ ທຳມະວົງ | ທ່ານ ສາຄອນ ບໍພັນໄຊ |
| ຫົວໜ້າພະແນກບັນຊີ ແລະ ການເງິນ | ຫົວໜ້າພະແນກກວດສອບພາຍໃນ | ຜູ້ອຳນວຍການ |

ທະນາຄານ ຮ່ວມພັດທະນາ ມະຫາຊົນ JOINT DEVELOPMENT BANK Public

ນະຄອນຫຼວງວຽງຈັນ, ສປປ ລາວ
ວັນທີ: 28 ເມສາ 2026

ທະນາຄານຮ່ວມພັດທະນາ ມະຫາຊົນ

## ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
## ສຳລັບປີສິ້ນສຸດວັນທີ 31 ທັນວາ 2025

| | ທຶນຈົດທະບຽນ ລ້ານກີບ | ສ່ວນເກີນມູນຄ່າຮຸ້ນ ລ້ານກີບ | ຄ່າເຜື່ອສຳລັບຊັບສິນທີ່ບໍ່ສາມາດກູ້ຄ່າຄືນໄດ້ ລ້ານກີບ | ກຳໄລ-ຂາດທຶນຈາກການຕີມູນຄ່າຄຳຄືນໃໝ່ ລ້ານກີບ | ເງິນແຮທົ່ວໄປສຳລັບກິດຈະກຳດ້ານສິນເຊື່ອ ລ້ານກີບ | ເງິນສຳຮອງຕາມກົດໝາຍ ລ້ານກີບ | ເງິນສຳຮອງທົ່ວໄປ ລ້ານກີບ | ກຳໄລສະສົມ/ (ຂາດທຶນສະສົມ) ລ້ານກີບ | ລວມ ລ້ານກີບ |
|---|---|---|---|---|---|---|---|---|---|
| **ຍອດເຫຼືອໃນວັນທີ 1 ມັງກອນ 2025** | 674,666 | - | 94,030 | (10,995) | 91,562 | 73,941 | 95,094 | 661,279 | 1,679,577 |
| ທຶນຈົດທະບຽນ (ບົດອະທິບາຍທີ 25) | 75,334 | - | - | - | - | - | - | - | 75,334 |
| ສ່ວນເກີນມູນຄ່າຮຸ້ນ (ບົດອະທິບາຍທີ 25) | - | 568,616 | - | - | - | - | - | - | 568,616 |
| ຊັບສິນທີ່ບໍ່ສາມາດຕີມູນຄ່າຄືນໄດ້ | - | - | 247,459 | - | - | - | - | - | 247,459 |
| ເງິນສຳຮອງຕາມກົດໝາຍ(ບົດອະທິບາຍທີ 26) | - | - | - | - | - | 74,126 | - | (74,126) | - |
| ເງິນສຳຮອງທົ່ວໄປ (ບົດອະທິບາຍທີ 26) | - | - | - | - | - | - | 7,135 | (7,135) | - |
| ເງິນປັນຜົນ (ບົດອະທິບາຍທີ 27) | | - | - | - | - | - | - | (660,000) | (660,000) |
| ການຕີມູນຄ່າຄືນໃໝ່ - ຄຳ | - | - | - | 26,403 | - | - | - | - | 26,403 |
| ເງິນແຮສຸດທິສຳລັບເງິນກູ້ທີ່ເກີດດອກອອກຜົນພາຍໃນປີ | - | - | - | - | 16,372 | - | - | - | 16,372 |
| ກຳໄລສຸດທິພາຍໃນປີ | - | - | - | - | - | - | - | 718,078 | 718,078 |
| **ຍອດເຫຼືອວັນທີ 31 ທັນວາ 2025** | **750,000** | **568,616** | **341,489** | **15,408** | **107,934** | **148,067** | **102,229** | **638,096** | **2,671,839** |

ກະກຽມໂດຍ:

ທ່ານ ນາງ ວິລາຊິນີ ພິຈິດ
ຫົວໜ້າພະແນກບັນຊີ ແລະ ການເງິນ

ອະນຸມັດໂດຍ:

ທ່ານ ນາງ ສຸດທິດາ ທຳມະວົງ
ຫົວໜ້າພະແນກກວດສອບພາຍໃນ

ອະນຸມັດໂດຍ:

ທ່ານ ສາຄອນ ຍົພັນໄຊ
ຜູ້ອຳນວຍການ

ທະນາຄານ ຮ່ວມພັດທະນາ ມະຫາຊົນ JOINT DEVELOPMENT BANK Public

ນະຄອນຫຼວງວຽງຈັນ, ສປປ ລາວ
ວັນທີ: 28 ເມສາ 2026

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນແຕ່ໜ້າ 17 ເຖິງ 45 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ.

## ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
## ສຳລັບປີສິ້ນສຸດວັນທີ 31 ທັນວາ 2025

| | ທຶນຈົດທະບຽນ ລ້ານກີບ | ສ່ວນເກີນມູນຄ່າຮຸ້ນ ລ້ານກີບ | ຄ່າເຜື່ອສຳລັບຊັບສິນທີ່ບໍ່ສາມາດຕີມູນຄ່າຄືນໄດ້ ລ້ານກີບ | ກຳໄລ-ຂາດທຶນຈາກການຕີມູນຄ່າຄ່າຄືນໃໝ່ ລ້ານກີບ | ເງິນສຳຮອງຕາມກົດໝາຍ ລ້ານກີບ | ເງິນສຳຮອງທົ່ວໄປ ລ້ານກີບ | ກຳໄລສະສົມ/(ຂາດທຶນສະສົມ) ລ້ານກີບ | ລວມ ລ້ານກີບ |
|---|---|---|---|---|---|---|---|---|
| **ຍອດເຫຼືອໃນວັນທີ 1 ມັງກອນ 2024** | **474,666** | **94,030** | | **81,649** | **47,226** | **68,379** | **454,325** | **1,220,275** |
| ທຶນຈົດທະບຽນ (ບົດອະທິບາຍທີ 25) | 200,000 | - | - | - | - | - | - | 200,000 |
| ເງິນສຳຮອງຕາມກົດໝາຍ (ບົດອະທິບາຍທີ 26) | - | - | - | - | 26,715 | - | (26,715) | - |
| ເງິນສຳຮອງທົ່ວໄປ (ບົດອະທິບາຍທີ 26) | - | - | - | - | - | 26,715 | (26,715) | - |
| ເງິນປັນຜົນ (ບົດອະທິບາຍທີ 27) | - | - | - | - | - | - | (480,877) | (480,877) |
| ການສູນເສຍທີ່ຍັງບໍ່ທັນເກີດຂຶ້ນຈາກຄ່າ | | | (10,995) | | | | | (10,995) |
| ເງິນແຮສຸດທິສຳລັບເງິນກູ້ທີ່ເກີດດອກອອກຜົນພາຍໃນປີ | - | - | - | 9,913 | - | - | - | 9,913 |
| ກຳໄລສຸດທິພາຍໃນປີ | - | - | - | - | - | - | 741,261 | 741,261 |
| **ຍອດເຫຼືອວັນທີ 31 ທັນວາ 2024** | **674,666** | **94,030** | **(10,995)** | **91,562** | **73,941** | **95,094** | **661,279** | **1,679,577** |

ກະກຽມໂດຍ: ອະນຸມັດໂດຍ: ອະນຸມັດໂດຍ:

ທະນາຄານ ຮ່ວມພັດທະນາ ມະຫາຊົນ JOINT DEVELOPMENT BANK Public ນະຄອນ ຫຼວງ ວຽງຈັນ ແຫ່ງ ສປປ ລາວ

| ທ່ານ ນາງ ວິລາຊິນີ ພິຈິດ<br>ຫົວໜ້າພະແນກບັນຊີ ແລະ ການເງິນ | ທ່ານ ນາງ ສຸດທິດາ ທຳມະວົງ<br>ຫົວໜ້າພະແນກກວດສອບພາຍໃນ | ທ່ານ ສາຄອນ ຍໍພັນໄຊ<br>ຜູ້ອຳນວຍການ |
|---|---|---|

ນະຄອນຫຼວງວຽງຈັນ, ສປປ ລາວ
ວັນທີ: 28 ເມສາ 2026

ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແຕ່ໜ້າ 17 ເຖິງ 45 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ທະນາຄານຮ່ວມພັດທະນາ ມະຫາຊົນ

## ໃບລາຍງານກະແສເງິນສົດ
## ສຳລັບປີສິ້ນສຸດວັນທີ 31 ທັນວາ 2025

| | ບົດ ອະທິບາຍ | 2025 ລ້ານກີບ | 2024 ລ້ານກີບ |
|---|---|---|---|
| **ກິດຈະກຳການດຳເນີນງານ** | | | |
| **ກຳໄລສຸດທິກ່ອນຫັກອາກອນ** | | **913,686** | **921,122** |
| *ດັດແກ້ສຳລັບ:* | | | |
| ລາຍຈ່າຍຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ | 19; 20; 21 | 74,902 | 51,214 |
| ສະສາງອອກ | | - | 7,800 |
| ຂາດທຶນຈາກຂາຍຊັບສິນ | | 372 | - |
| ເງິນແຮສຳລັບໜີ້ເສຍ | | 104,179 | 63,682 |
| ລາຍຮັບດອກເບ້ຍ | 3 | (2,287,061) | (1,904,904) |
| ລາຍຈ່າຍດອກເບ້ຍ | 3 | 1,795,384 | 1,436,264 |
| ລາຍຮັບຈາກຄຳ | | (47,651) | - |
| **ກະແສເງິນສົດທີ່ໃຊ້ໃນກິດຈະກຳດຳເນີນງານກ່ອນການປ່ຽນແປງຂອງຊັບສິນ ແລະ ໜີ້ສິນດຳເນີນງານ** | | **553,811** | **575,178** |
| *ເພີ່ມຂຶ້ນ/(ຫຼຸດລົງ) ໃນຊັບສິນໃນການດຳເນີນງານ* | | | |
| ໜີ້ຕ້ອງຮັບຈາກທະນາຄານອື່ນ | | 767,008 | (255,319) |
| ເງິນກູ້ໃຫ້ລູກຄ້າ | | (5,427,373) | (3,964,137) |
| ຊັບສິນອື່ນໆ | | (2,587,242) | (502,448) |
| *ເພີ່ມຂຶ້ນ/(ຫຼຸດລົງ) ໃນໜີ້ສິນໃນການດຳເນີນງານ* | | | |
| ໜີ້ຕ້ອງສົ່ງໃຫ້ ທຫລ ແລະ ທະນາຄານອື່ນ | | (144,392) | 891,448 |
| ໜີ້ຕ້ອງສົ່ງລູກຄ້າ | | 8,533,210 | 5,609,085 |
| ໜີ້ສິນອື່ນໆ | | 443,964 | 56,407 |
| **ກະແສເງິນສົດຈາກການດຳເນີນງານການຊຳລະອາກອນກຳໄລປີ** | | **2,138,986** | **2,410,214** |
| ດອກເບ້ຍຕ້ອງຈ່າຍ | | (1,579,887) | (1,212,692) |
| ດອກເບ້ຍຕ້ອງຮັບ | | 2,236,201 | 1,901,610 |
| ອາກອນກຳໄລ | | (209,280) | (85,005) |
| **ກະແສເງິນສົດສຸດທິໃນກິດຈະກຳດຳເນີນງານ** | | **2,586,020** | **3,014,127** |

ກະກຽມໂດຍ:

ທ່ານ ນາງ ວິລາຊີບີ ພິຈິດ
ຫົວໜ້າພະແນກບັນຊີ ແລະ ການເງິນ

ອະນຸມັດໂດຍ:

ທ່ານ ນາງ ສຸດທິດາ ທຳມະວົງ
ຫົວໜ້າພະແນກກວດສອບພາຍໃນ

ອະນຸມັດໂດຍ:

ທ່ານ ສາຄອນ ຍໍພັນໄຊ
ຜູ້ອຳນວຍການ

ນະຄອນຫຼວງວຽງຈັນ, ສປປ ລາວ
ວັນທີ: 28 ເມສາ 2026

ທະນາຄານຮ່ວມພັດທະນາ ມະຫາຊົນ

**ໃບລາຍງານກະແສເງິນສົດ**
**ສໍາລັບປີສິ້ນສຸດວັນທີ 31 ທັນວາ 2025**

| | ບົດ ອະທິບາຍ | 2025 ລ້ານກີບ | 2024 ລ້ານກີບ |
|---|---|---|---|
| **ກິດຈະກໍາການລົງທຶນ** | | | |
| ການຈ່າຍເງິນສໍາລັບການກໍ່ສ້າງທີ່ກໍາລັງດໍາເນີນຢູ່ | 18 | (36,483) | (27,225) |
| ການຈ່າຍເງິນສໍາລັບຊັບສິນທີ່ບໍ່ມີຕົວຕົນ | 19 | (34,505) | (58,228) |
| ການຈ່າຍເງິນສໍາລັບຊັບສິນທີ່ມີຕົວຕົນ | 20 | (73,792) | (69,092) |
| ລາຍຮັບຈາກການຈໍາໜ່າຍຊັບສິນ | | 1,148 | - |
| ການຈ່າຍເງິນສໍາລັບສິດການນໍາໃຊ້ຊັບສິນ | 21 | (4,869) | (8,675) |
| ການຈ່າຍເງິນສໍາລັບຫຼັກຊັບທີ່ຖືໄວ້ຈົນຄົບກໍານົດ | | (15,616,637) | (1,297,654) |
| ລາຍຮັບຈາກການລົງທຶນ ທາງດ້ານການເງິນ - ຖືໄວ້ຈົນຄົບກໍານົດ | | 15,621,457 | 1,016,971 |
| ການຈ່າຍຈາກການຊື້ຄໍາ | 13 | (519,857) | (192,792) |
| ລາຍຮັບຈາກຂາຍຄໍາ | 13 | 420,153 | - |
| ການຈ່າຍເງິນສໍາລັບການລົງທຶນອື່ນໆ | 15.4 | (634,712) | - |
| ການຈ່າຍເງິນສໍາລັບການລົງທຶນໃນບໍລິສັດໃນເຄືອ ແລະ ການຮ່ວມທຶນ | 17 | (8,958) | (1,000) |
| **ກະແສເງິນສົດສຸດທິ ທີ່ເກີດຈາກກິດຈະກໍາການລົງທຶນ** | | **(887,055)** | **(637,695)** |

| ກະກຽມໂດຍ: | ອະນຸມັດໂດຍ: | ອະນຸມັດໂດຍ: |
|---|---|---|
| ທ່ານ ນາງ ວິລາຊິນີ ພິຈິດ | ທ່ານ ນາງ ສຸດທິດາ ທໍາມະວົງ | ທ່ານ ສາຄອນ ຍໍພັນໄຊ |
| ຫົວໜ້າພະແນກບັນຊີ ແລະ ການເງິນ | ຫົວໜ້າພະແນກກວດສອບພາຍໃນ | ຜູ້ອໍານວຍການ |

ນະຄອນຫຼວງວຽງຈັນ, ສປປ ລາວ
ວັນທີ: 28 ເມສາ 2026

ທະນາຄານຮ່ວມພັດທະນາ ມະຫາຊົນ

## ໃບລາຍງານກະແສເງິນສົດ
## ສຳລັບປີສິ້ນສຸດວັນທີ 31 ທັນວາ 2025

| | ບົດອະທິບາຍ | 2025 ລ້ານກີບ | 2024 ລ້ານກີບ |
|---|---|---|---|
| **ກະແສເງິນສົດສຸດທິນຳໃຊ້ເຂົ້າໃນກິດຈະການທາງການເງິນ** | | | |
| ການຈ່າຍເງິນປັນຜົນ | 27 | (660,000) | (232,789) |
| ການຈ່າຍເງິນສຳລັບການກູ້ຢືມເງິນຈາກ ທຫລ | | (569,580) | (435,155) |
| ການໄດ້ຮັບເງິນກູ້ຢືມເງິນຈາກ ທຫລ | | 1,257,840 | 113,559 |
| ສ່ວນເກີນມູນຄ່າຮຸ້ນ | 25 | 568,616 | - |
| ສ່ວນຂອງຜູ້ຖືຮຸ້ນ | 25 | 75,334 | - |
| **ກະແສເງິນສົດສຸດທິນຳໃຊ້ເຂົ້າໃນກິດຈະກຳທາງການເງິນ** | | **672,210** | **(554,385)** |
| ການປ່ຽນແປງສຸດທິເງິນສົດ ແລະ ທຽບເທົ່າເງິນສົດ | | 2,371,175 | 1,822,047 |
| ເງິນສົດ ແລະ ທຽບເທົ່າເງິນສົດໃນຕົ້ນປີ | | 6,748,974 | 4,926,927 |
| **ເງິນສົດ ແລະ ທຽບເທົ່າເງິນສົດໃນທ້າຍປີ** | **29** | **9,120,149** | **6,748,974** |
| ກິດຈະກຳການລົງທຶນທີ່ບໍ່ແມ່ນເງິນສົດ: | | | |
| - ການຈ່າຍເງິນປັນຜົນໂດຍຫັກລົບກັບໜີ້ຄ້າງຮັບຈາກຜູ້ຖືຮຸ້ນ ແລະ ອາກອນລາຍໄດ້ຈາກເງິນປັນຜົນ | | - | 248,088 |
| - ຊັບສິນທີ່ຖືກຝາກຂາຍເຊື່ອງຊົດເຊີຍກັບເງິນກູ້ໃຫ້ລູກຄ້າ | | 911,644 | - |
| - ສ່ວນປ່ຽນແປງຈາກການຕີລາຄາຊັບສິນຄືນໃໝ່ | | 247,459 | - |
| *ກຳໄລຈາກການຕີລາຄາຄືນສິດນຳໃຊ້ທີ່ດິນ* | | *223,619* | - |
| *ກຳໄລຈາກການຕີລາຄາຄືນອາຄານ* | | *23,840* | - |

ກະກຽມໂດຍ:

ທ່ານ ນາງ ວິລາຊິນີ ພິຈິດ
ຫົວໜ້າພະແນກບັນຊີ ແລະ ການເງິນ

ອະນຸມັດໂດຍ:

ທ່ານ ນາງ ສຸດທິດາ ທຳມະວົງ
ຫົວໜ້າພະແນກກວດສອບພາຍໃນ

ອະນຸມັດໂດຍ:

ທ່ານ ສາຄອນ ຍໍພັນໄຊ
ຜູ້ອຳນວຍການ

ນະຄອນຫຼວງວຽງຈັນ, ສປປ ລາວ
ວັນທີ: 28 ເມສາ 2026

**ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ**
**ສໍາລັບປີທີ່ສິ້ນສຸດວັນທີ 31 ທັນວາ 2025**

## 1. ຂໍ້ມູນກ່ຽວກັບທະນາຄານ

ທະນາຄານຮ່ວມພັດທະນາ ມະຫາຊົນ ("ທະນາຄານ") ແມ່ນທະນາຄານເອກະຊົນ ທີ່ໄດ້ດໍາເນີນງານ ແລະ ຈົດທະບຽນຢູ່ ໃນ ສປປ ລາວ.

ກິດຈະກໍາຫຼັກຂອງທະນາຄານແມ່ນໃຫ້ບໍລິການທາງດ້ານ: ການລະດົມທຶນ ແລະ ການຮັບຝາກເງິນໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ຈາກບັນດາອົງການຈັດຕັ້ງ ແລະ ບຸກຄົນຕ່າງໆ; ການປ່ອຍກູ້ໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວໃຫ້ແກ່ອົງການຈັດຕັ້ງ ແລະ ບຸກຄົນທົ່ວໄປ ອີງຕາມເນື້ອໃນ ແລະ ຄວາມອາດສາມາດຂອງແຫຼ່ງເງິນທຶນຂອງທະນາຄານ; ການເຮັດທຸລະກໍາເງິນຕາຕ່າງປະເທດ; ບໍລິການດ້ານການເງິນລະຫວ່າງປະເທດ; ສ່ວນຫຼຸດໃບຢັ້ງຢືນການຄ້າ, ພັນທະບັດ ແລະ ເອກະສານທີ່ມີມູນຄ່າຕ່າງໆ. ໃຫ້ບໍລິການອື່ນໆດ້ານການທະນາຄານຕາມທີ່ທະນາຄານແຫ່ງ ສປປ ລາວ (ທຫລ) ວາງອອກ.

ທະນາຄານເປັນສະມາຊິກສໍານັກງານປົກປ້ອງເງິນຝາກ, ທະນາຄານແຫ່ງ ສປປ ລາວ. ດັ່ງນັ້ນ ເງິນຝາກຂອງລູກຄ້າແມ່ນຮັບປະກັນໂດຍ ສໍານັກງານປົກປ້ອງເງິນຝາກ.

ສໍານັກງານໃຫຍ່ຂອງທະນາຄານ ຕັ້ງຢູ່ອາຄານ ເລກທີ 82, ຖະໜົນລ້ານຊ້າງ, ນະຄອນຫຼວງວຽງຈັນ ສປປ ລາວ.

ຂໍ້ມູນທາງດ້ານການເງິນແມ່ນສະແດງເປັນເງິນກີບ ແລະ ສະແດງທຽບເທົ່າເປັນຫົວໜ່ວຍ "ລ້ານ", ເວັ້ນເສຍແຕ່ຈະມີການລະບຸໄວ້ເປັນຢ່າງອື່ນ.

ຂໍ້ມູນທາງການເງິນໄດ້ອະນຸມັດໂດຍ (ຄະນະຜູ້ອໍານວຍການ) ໃນວັນທີ 28 ເມສາ 2026.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສໍາຄັນ

ເອກະສານລາຍງານການເງິນໄດ້ມີການກະກຽມຕາມຫຼັກການນະໂຍບາຍບັນຊີຂອງທະນະຄານທີ່ໄດ້ລະບຸໄວ້ດັ່ງລຸ່ມນີ້.

### 2.1 ພື້ນຖານໃນການກະກຽມ

ເອກະສານລາຍງານການເງິນ ຂອງທະນາຄານຖືກກະກຽມໂດຍສອດຄ່ອງກັບນະໂຍບາຍການບັນຊີຂອງທະນາຄານ ດັ່ງທີ່ອະທິບາຍໃນບົດຊ້ອນທ້າຍ ຂອງເອກະສານລາຍງານການເງິນ, ກົດລະບຽບ ແລະ ແຈ້ງການຂອງທະນາຄານແຫ່ງ ສປປ ລາວ. ການນໍາໃຊ້ຫຼັກການພື້ນຖານການບັນຊີ ອາດຈະແຕກຕ່າງຈາກຫຼັກການບັນຊີ ທີ່ຮັບຮອງເອົາໂດຍທົ່ວໄປໃນບັນດາປະເທດອື່ນໆ ແລະ ທີ່ບໍ່ຢູ່ໃນອໍານາດຄຸ້ມຄອງ ຂອງ ສປປ ລາວ. ເອກະສານລາຍງານການເງິນສະບັບນີ້ ບໍ່ໄດ້ເຈດຕະນາສະແດງຖານະການເງິນ ແລະ ຜົນການດໍາເນີນງານ ທີ່ບໍ່ຢູ່ໃນອໍານາດຄຸ້ມຄອງ ຂອງ ສປປ ລາວ.

ດ້ວຍເຫດນີ້ເອກະສານລາຍງານການເງິນດັ່ງກ່າວນີ້ ຈະໃຫ້ຂໍ້ມູນສະເພາະຜູ້ທີ່ໄດ້ຮັບແຈ້ງກ່ຽວກັບນະໂຍບາຍການບັນຊີຂອງທະນາຄານ, ລະບຽບການ ແລະ ແຈ້ງການອື່ນໆ ທີ່ກ່ຽວຂ້ອງ ເຊິ່ງອອກໂດຍທະນາຄານແຫ່ງ ສປປ ລາວ.

ການກະກຽມເອກະສານລາຍງານການເງິນເພື່ອໃຫ້ສອດຄ່ອງກັບວິທີການບັນຊີຂອງທະນາຄານທີ່ຮັບຮອງເອົານັ້ນ ຮຽກຮ້ອງໃຫ້ຝ່າຍຜູ້ບໍລິຫານ ຕ້ອງມີການຄາດຄະເນ ແລະ ວາງຂໍ້ສົມມຸດຖານຫຼາຍປະການ ເພື່ອ ສະແດງໃຫ້ເຫັນຈໍານວນເງິນຂອງຊັບສິນ ແລະ ໜີ້ສິນ. ການເປີດເຜີຍຂໍ້ມູນ ຊັບສິນ ແລະ ໜີ້ສິນ ທີ່ອາດຈະເກີດຂຶ້ນໃນມື້ກະກຽມເອກະສານລາຍງານການເງິນ ແລະ ຈໍານວນລາຍຮັບ ແລະ ລາຍຈ່າຍ ໃນຮອບເວລາລາຍງານ. ສະນັ້ນ, ຕົວເລກທີ່ຄາດຄະເນປະຕິບັດດັ່ງກ່າວ ຕ້ອງກໍານົດຂຶ້ນບົນພື້ນຖານຄວາມຮັບຮູ້ທີ່ດີທີ່ສຸດຂອງຝ່າຍຜູ້ບໍລິຫານ ກ່ຽວກັບ ເຫດການ ແລະ ພາກປະຕິບັດຕົວຈິງໃນປັດຈຸບັນ. ຊຶ່ງຜົນຂອງການຄາດຄະເນນັ້ນ ອາດຈະແຕກຕ່າງຈາກການຄາດຄະເນໃນເບື້ອງຕົ້ນ.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 2.2 ການຮັບຮູ້ລາຍຮັບ ແລະ ລາຍຈ່າຍດອກເບ້ຍ

ການຮັບຮູ້ລາຍຮັບດອກເບ້ຍ

ລາຍຮັບຈາກດອກເບ້ຍແມ່ນຖືກຮັບຮູ້ຕາມຫຼັກການບັນຊີຄ້າງຮັບບົນພື້ນຖານການນຳໃຊ້ອັດຕາດອກເບ້ຍທີ່ໄດ້ລະບຸໄວ້ໃນສັນຍາເງິນກູ້ກັບລູກຄ້າຍົກເວັ້ນບັນຊີທີ່ບໍ່ເກີດດອກອອກຜົນແລະພິຈາລະນາ ສະເພາະ.

ໃນກໍລະນີທີ່ບັນຊີເງິນກູ້ກາຍມາເປັນບັນຊີທີ່ບໍ່ເກີດດອກອອກຜົນ ຫຼື ໃນເວລາທີ່ຜູ້ບໍລິຫານເຊື່ອວ່າຜູ້ກູ້ຢືມບໍ່ມີຄວາມສາມາດໃນການຈ່າຍຄືນເງິນຕົ້ນ ແລະ ດອກເບ້ຍ ແມ່ນຈະຢຸດການບັນທຶກລາຍຮັບດອກເບ້ຍ ແລະ ສຳລັບລາຍການທີ່ບັນທຶກຮຽບຮ້ອຍແລ້ວຈະຖືກປີ້ນກັບລາຍການຄືນ. ລາຍຮັບດອກເບ້ຍຈະຖືກຮັບຮູ້ຖ້າຫາກມີການຮຽກເກັບດອກເບ້ຍຄ້າງຮັບຈາກເງິນໃຫ້ກູ້ຢືມທີ່ບໍ່ເກີດດອກອອກຜົນ ຫຼື ມີການໄດ້ຮັບເງິນຕົວຈິງ. ບັນຊີລູກຄ້າຈະຖືວ່າເປັນບັນຊີທີ່ບໍ່ເກີດດອກອອກຜົນເມື່ອການຊຳລະເງິນຄືນໃຫ້ກັບທະນະຄານໄດ້ຄ້າງຊຳລະເກີນສາມເດືອນ ຫຼື 90 ວັນ. ເຊິ່ງເປັນໄປຕາມກົດລະບຽບຂອງ ທຫລ.

ການຮັບຮູ້ລາຍຈ່າຍດອກເບ້ຍ

ລາຍຈ່າຍດອກເບ້ຍແມ່ນຈ່າຍໃຫ້ສຳລັບເງິນຝາກຈາກລູກຄ້າ, ທະນາຄານອື່ນ, ສະຖາບັນການເງິນ ແລະ ເງິນກູ້ຢືມ ແມ່ນຖືກຮັບຮູ້ຕາມຫຼັກການບັນຊີບົນພື້ນຖານຄ້າງຈ່າຍ.

### 2.3 ການຮັບຮູ້ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ

ຄ່າທຳນຽມ ແລະ ຄ່າບໍລິການ ປະກອບມີ ຄ່າທຳນຽມທີ່ໄດ້ຮັບສຳລັບການໂອນເງິນ (ລວມເຖິງການຊຳລະແຊັກ), ທຸລະກຳແລກປ່ຽນເງິນຕາຕ່າງປະເທດ, ການຄ້ຳປະກັນທາງການເງິນ ແລະ ບໍລິການດ້ານການທະນາຄານອື່ນໆ.

ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການແມ່ນຮັບຮູ້ໃນໃບລາຍງານຜົນການດຳເນີນງານ ຕາມພື້ນຖານເງິນສົດ.

### 2.4 ການຮັບຮູ້ລາຍຮັບເງິນປັນຜົນ

ລາຍຮັບເງິນປັນຜົນຂອງການລົງທຶນໃນຮຸ້ນແມ່ນຈະຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານ ໃນເວລາທີ່ທະນາຄານມີສິດໃນການຮັບເງິນປັນຜົນນັ້ນ.

### 2.5 ການເຄື່ອນໄຫວທີ່ເປັນເງິນຕາຕ່າງປະເທດ ແລະ ການປ່ຽນຄ່າເງິນຕາຕ່າງປະເທດ

ຂໍ້ມູນການເງິນແມ່ນສະແດງເປັນເງິນກີບ, ຊັບສິນ ແລະ ໜີ້ສິນທາງການເງິນທີ່ເປັນສະກຸນເງິນຕາຕ່າງປະເທດ ແມ່ນຈະໄດ້ມີການປ່ຽນຄ່າເງິນຕາດັ່ງກ່າວເປັນສະກຸນເງິນກີບ ໃນທ້າຍປີໂດຍໃຊ້ອັດຕາແລກປ່ຽນໃນມື້ທີ່ປິດບັນຊີທ້າຍງວດ. ລາຍຮັບ ແລະ ລາຍຈ່າຍ ທີ່ເປັນສະກຸນເງິນຕາຕ່າງປະເທດທີ່ເກີດຂຶ້ນໃນໄລຍະຈະຖືກປ່ຽນຄ່າເປັນເງິນສະກຸນເງິນກີບໃນມື້ທີ່ລາຍການເຄື່ອນໄຫວນັ້ນເກີດຂຶ້ນ. ກຳໄລ ແລະ ຂາດທຶນ ຈາກອັດຕາແລກປ່ຽນ ຂອງ ຊັບສິນ ແລະ ໜີ້ສິນ ທາງການເງິນ ແມ່ນໄດ້ຮັບຮູ້ໃນໃບລາຍງານຜົນການດຳເນີນງານເມື່ອລາຍການນັ້ນເກີດຂຶ້ນ.

### 2.6 ເງິນສົດ ແລະ ທຽບເທົ່າເງິນສົດ

ເງິນສົດ ແລະ ທຽບເທົ່າເງິນສົດແມ່ນລວມມີ ເງິນສົດ ແລະ ການລົງທຶນໄລຍະສັ້ນ ທີ່ມີສະພາບຄ່ອງສູງ ໂດຍມີອາຍຸຄົບກຳນົດຕ່ຳກວ່າ ຫຼື ທຽບເທົ່າ 30 ວັນ ເຊິ່ງພ້ອມທີ່ຈະປ່ຽນເປັນເງິນສົດໄດ້, ຄຳ ແລະ ບັນຊີໜີ້ຕ້ອງຮັບຈາກທະນາຄານອື່ນ ທີ່ມີອາຍຸຄົບກຳນົດຕ່ຳກວ່າ ຫຼື ທຽບເທົ່າ 30 ວັນ.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 2.6 ເງິນສົດ ແລະ ທຽບເທົ່າເງິນສົດ (ຕໍ່)

#### 2.6.1 ຄຳ ແລະ ວັດຖຸມີຄ່າ

ອີງຕາມ ສາລະບານບັນຊີທີ່ອອກໂດຍ ກົມບັນຊີທະນາຄານແຫ່ງ ສປປ ລາວ, ຄຳຖືກຈັດປະເພດເປັນເງິນ ແລະ ທຽບເທົ່າເງິນສົດ.

ຄະນະອຳນວຍການມີຈຸດປະສົງຖືຄອງຄຳໄວ້ໂດຍບໍ່ມີກຳນົດ, ຊຶ່ງອາດຈະຂາຍອອກໄປເພື່ອຕອບສະໜອງຕໍ່ຄວາມຕ້ອງການດ້ານສະພາບຄ່ອງ ຫຼື ເມື່ອມີການປ່ຽນແປງຂອງລາຄາຕະຫຼາດ, ແມ່ນຈະລວມຢູ່ໃນຊັບສິນບໍ່ໝູນວຽນ, ຍົກເວັ້ນທາງຄະນະອຳນວຍການໄດ້ສະແດງຄວາມຕັ້ງໃຈໃນການຖືຄອງໄວ້ເພື່ອການລົງທຶນຢ່າງໜ້ອຍ ຕໍ່າກວ່າ 12 ເດືອນ ນັບຈາກວັນທີ່ລາຍງານຖານະການເງິນ ຫຼື ນອກຈາກວ່າຈະຕ້ອງຂາຍເພື່ອເພີ່ມທຶນໃນການດຳເນີນງານ ໃນກໍລະນີນີ້ ແມ່ນຈະຖືກລວມເຂົ້າໃນຊັບສິນໝູນວຽນ.

ຄຳຈະຖືກຮັບຮູ້ໃນເບື້ອງຕົ້ນຕາມມູນຄ່າຕົ້ນທຶນ ຊຶ່ງທຽບເທົ່າກັບມູນຄ່າຍຸດຕິທຳໂດຍຄຳນຶງເຖິງມູນຄ່າຊື້ ບວກກັບຄ່າໃຊ້ຈ່າຍໃນການເຮັດທຸລະກຳ ແລະ ການປະເມີນໃນເວລາຕໍ່ມາຕາມມູນຄ່າຍຸດຕິທຳ.

ມູນຄ່າຍຸດຕິທຳຂອງຄຳ ແມ່ນອີງຕາມລາຄາເມື່ອປິດທຸລະກຳໃນມື້ທີ່ລາຍງານຖານະການເງິນ ໂດຍອ້າງອີງຈາກຕະຫຼາດ London Bullion Market Association (LBMA). ກຳໄລ ແລະ ຂາດທຶນທີ່ຍັງບໍ່ເກີດຂຶ້ນແທ້ຂອງຄຳ ຈະຮັບຮູ້ໃນສ່ວນຂອງຜູ້ຖືຮຸ້ນ.

ເມື່ອມີການຂາຍຄຳ ຄວາມແຕກຕ່າງລະຫວ່າງລາຄາຂາຍ ສຸດທິ ແລະ ມູນຄ່າຕາມບັນຊີຈະຖືກບັນທຶກ ຫຼື ຮັບຮູ້ໃນໃບລາຍງານຜົນການດຳເນີນງານ. ກຳໄລ/(ຂາດທຸນ) ທີ່ຍັງບໍ່ໄດ້ຮັບຈາກການປັບຄ່າຄຳທີ່ເຄີຍຮັບຮູ້ໃນໃນສ່ວນຂອງຜູ້ຖືຮຸ້ນ.ຈະຖືກບັນທຶກ ຫຼື ຮັບຮູ້ໃນໃບລາຍງານຜົນການດຳເນີນງານ.

### 2.7 ເງິນກູ້ໃຫ້ລູກຄ້າ

ເງິນກູ້ໃຫ້ລູກຄ້າ ແມ່ນຖືກຮັບຮູ້ຕາມຕົ້ນທຶນ ແລະ ສະແດງຍອດເຫຼືອທ້າຍ ລົບໃຫ້ ເງິນແຮສຳລັບໜີ້ຕ້ອງຮັບທວງຍາກ.

### 2.8 ການຈັດປະເພດຂອງການສຳຮອງສຳລັບກິດຈະກຳສິນເຊື່ອ

ເງິນແຮສຳລັບໜີ້ເສຍ

ການຈັດປະເພດ

ອີງຕາມ ລະບຽບການ ຂອງທະນາຄານແຫ່ງ ສ.ປ.ປ ລາວ ສະບັບເລກທີ 512/ທຫລ ລົງວັນທີ 29 ມິຖຸນາ 2018, ໜັງສືທາງການສະບັບເລກທີ 898/ CBSD ລົງວັນທີ 14 ພະຈິກ 2018 ຮຽກຮ້ອງໃຫ້ມີການຈັດຊັ້ນໜີ້ ແລະ ເງິນແຮສຳລັບໜີ້ເສຍ. ດັ່ງນັ້ນ, ເງິນກູ້ແມ່ນຖືກຈັດຊັ້ນເປັນເງິນກູ້ທີ່ເກີດດອກອອກຜົນ ຫຼື ເງິນກູ້ທີ່ບໍ່ມີການເຄື່ອນໄຫວໂດຍອີງຕາມການຄ້າງຊຳລະ ແລະ ປັດໃຈທາງດ້ານຄຸນນະພາບອື່ນໆ.

ເງິນກູ້ຖືກຈັດຊັ້ນເປັນເງິນກູ້ປົກກະຕິ (ກຸ່ມ A) ຫຼື ເງິນກູ້ທີ່ຄວນເອົາໃຈໃສ່ ຫຼື ຕິດຕາມພິເສດ (ກຸ່ມ B) ແມ່ນຖືກພິຈາລະນາເປັນເງິນກູ້ທີ່ເກີດດອກອອກຜົນ. ເງິນກູ້ທີ່ຖືກຈັດຊັ້ນເປັນຕໍ່າກວ່າມາດຕະຖານ (ກຸ່ມ C) ຫຼື ໜີ້ສົງໃສ (ກຸ່ມ D) ຫຼື ໜີ້ສູນ (ກຸ່ມ E) ແມ່ນຖືກພິຈາລະນາເປັນເງິນກູ້ທີ່ບໍ່ມີການເຄື່ອນໄຫວ.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສໍາຄັນ (ຕໍ່)

### 2.8 ການຈັດປະເພດຂອງການສໍາຮອງສໍາລັບກິດຈະກໍາສິນເຊື່ອ (ຕໍ່)

ເງິນແຮ

ອີງຕາມກົດລະບຽບສະບັບໃໝ່ເລກທີ 512/ທຫລ ລົງວັນທີ 29 ມີຖຸນາ 2018 ກ່ຽວກັບວິທີການຄິດໄລ່ສໍາຮອງເງິນແຮສໍາລັບໜີ້ສິນໄດ້ລະບຸວ່າທະນາຄານສາມາດນໍາມາພິຈາລະນາໃນມູນຄ່າຫຼັກຊັບຄໍ້າປະກັນໃນອັດຕາເປີເຊັນທີ່ລະບຸໄວ້ໃນກົດລະບຽບຈະຖືກຫັກອອກຈາກຍອດຄ້າງຊໍາລະເງິນໃຫ້ກູ້ຢືມກ່ອນແລ້ວໃຫ້ອັດຕາສ່ວນຂອງເງິນແຮສໍາລັບໜີ້ເສຍໃຫ້.

ອີງຕາມກົດລະບຽບສະບັບເລກທີ 784/ທຫລ ລົງວັນທີ 3 ກັນຍາ 2019 ທະນາຄານທຸລະກິດທີ່ໃຫ້ເງິນກູ້ຢືມແກ່ ທຸລະກິດຂະໜາດກາງ ແລະ ຂະໜາດນ້ອຍ (SMEs) ພາຍໃຕ້ຂໍ້ກໍາກົດນີ້ມີສິດຕັ້ງສໍາຮອງເງິນແຮໃນອັດຕາ 0.20% ຂອງຍອດຄ້າງຊໍາລະເງິນໃຫ້ກູ້ຢືມແກ່ SMEs ເຊິ່ງຈັດຢູ່ໃນປະເພດປົກກະຕິ.

ສໍາລັບເງິນກູ້ທີ່ຕິດພັນກັບໂຄງການພັດທະນາພື້ນຖານໂຄງລ່າງຂອງລັດຖະບານທີ່ຄ້າງຊໍາລະ ແຕ່ໂຄງການຊໍາລະ ແມ່ນພາຍໃນກໍານົດເວລາຂອງລັດຖະບານ, ທະນາຄານໄດ້ຮັບອະນຸຍາດໃຫ້ຈັດປະເພດເງິນກູ້ດັ່ງກ່າວເປັນເງິນກູ້ພິເສດຕາມຈົດໝາຍເຫດທາງລັດຖະການ ສະບັບເລກທີ 172/ທຫລ ລົງວັນທີ 15 ພຶດສະພາ 2017 ອອກໂດຍທະນາຄານແຫ່ງ ສປປ ລາວ

ເງິນແຮແມ່ນໄດ້ຖືກຈັດປະເພດເປັນ ທົ່ວໄປ ແລະ ສະເພາະ ໂດຍອີງໃສ່ການຈັດປະເພດເງິນໃຫ້ກູ້ຢືມ. ຂ້າງລຸ່ມນີ້ແມ່ນສະຫຼຸບສັງລວມຂອງອັດຕາ ເງິນແຮສໍາຮອງ ທີ່ນໍາໃຊ້ສໍາລັບການຈັດປະເພດເງິນໃຫ້ກູ້ຢືມແຕ່ລະປະເພດ ໃນວັນທີຂອງໃບລາຍງານຖານະການເງິນ.

| ປະເພດຂອງໜີ້ | ປະເພດ | ການບັນຊີສໍາລັບຍອດເຫຼືອເງິນແຮ | ການຫັກເງິນແຮ | ວັນຄົບກໍານົດຊໍາລະ |
|---|---|---|---|---|
| **ເງິນກູ້ທີ່ເກີດດອກອອກຜົນ (ທົ່ວໄປ)** | | | | |
| A | ໜີ້ປົກກະຕິ | ບັນທຶກໃນທຶນ ແລະ ຄັງສໍາຮອງເພື່ອຫັກກັບຍອດເງິນໃຫ້ກູ້ຢືມ | 0.5% | ພາຍໃນ 29 ວັນ |
| B | ໜີ້ຄວນເອົາໃຈໃສ່ | | 3% | ລະຫວ່າງ 30 ຫາ 89 ວັນ |
| **ເງິນກູ້ທີ່ບໍ່ເກີດດອກອອກຜົນ (ສະເພາະ)** | | | | |
| C | ໜີ້ຕໍ່າກວ່າມາດຕະຖານ | ຫັກກັບຍອດເງິນໃຫ້ກູ້ຢືມ | 20% | ລະຫວ່າງ 90 ຫາ 179 ວັນ |
| D | ໜີ້ສົງໄສ | ຫັກກັບຍອດເງິນໃຫ້ກູ້ຢືມ | 50% | ລະຫວ່າງ 180 ຫາ 359 ວັນ |
| E | ໜີ້ສູນ | ຫັກກັບຍອດເງິນໃຫ້ກູ້ຢືມ | 100% | ເລີ່ມແຕ່ 360 ຫຼື ຫຼາຍກວ່ານັ້ນ |

(i) ຈໍານວນ ເງິນແຮ ແມ່ນຖືກຄິດໄລ່ໂດຍສູດຕໍ່ໄປນີ້:

a. ໜີ້ປົກກະຕິ = ອັດຕາເງິນແຮ x ຍອດຄ້າງຊໍາລະຂອງເງິນໃຫ້ກູ້ຢືມ
b. ໜີ້ຄວນເອົາໃຈໃສ່ = ອັດຕາເງິນແຮ x ຍອດຄ້າງຊໍາລະຂອງເງິນໃຫ້ກູ້ຢືມ - ມູນຄ່າບໍ່ມີສ່ວນຫຼຸດຂອງເງິນຄໍ້າປະກັນ

(ii) ຍອດເງິນແຮສໍາລັບເງິນໃຫ້ກູ້ຢືມເກີດດອກອອກຜົນກຸ່ມ A ຈະຖືກບັນທຶກໃນໃບລາຍງານຖານະການເງິນພາຍໃຕ້ "ເງິນແຮສໍາລັບເງິນໃຫ້ກູ້ຢືມທີ່ເກີດດອກອອກຜົນ" ພາຍໃຕ້ທຶນ ແລະ ຄັງສໍາຮອງ. ເງິນແຮສະສົມຂອງເງິນແຮສໍາລັບເງິນໃຫ້ກູ້ຢືມທີ່ບໍ່ເກີດດອກອອກຜົນ ແລະ ເງິນແຮ ສໍາລັບ ເງິນໃຫ້ກູ້ຢືມເກີດດອກອອກຜົນກຸ່ມ B ໄດ້ຖືກບັນທຶກໃນໃບລາຍງານຖານະການເງິນພາຍໃຕ້ "ເງິນໃຫ້ກູ້ຢືມແກ່ລູກຄ້າ, ຫັກ ເງິນແຮສໍາລັບເງິນໃຫ້ກູ້ຢືມທີ່ບໍ່ເກີດດອກອອກຜົນ".

## 2. ສະຫຼຸບນະໂຍບາຍການບັນຊີທີ່ສໍາຄັນ (ຕໍ່)

### 2.8 ການຈັດປະເພດຂອງການສໍາຮອງສໍາລັບກິດຈະກໍາສິນເຊື່ອ (ຕໍ່)

(iii) ການປ່ຽນແປງໃນເງິນແຮສໍາລັບເງິນໃຫ້ກູ້ຢືມທີ່ເກີດດອກອອກຜົນ ແມ່ນຖືກຮັບຮູ້ໃນໃບລາຍງານຜົນການດໍາເນີນງານ ເປັນ "ລາຍຈ່າຍໃນການດໍາເນີນງານອື່ນໆ" ສໍາລັບ ລາຍຈ່າຍເງິນແຮ, ແລະ "ລາຍຮັບໃນການດໍາເນີນງານອື່ນໆ" ສໍາລັບການກັບລາຍການຂອງລາຍຈ່າຍເງິນແຮ. ການປ່ຽນແປງໃນເງິນແຮສໍາລັບເງິນໃຫ້ກູ້ຢືມບໍ່ເກີດດອກອອກຜົນ ແມ່ນຖືກຮັບຮູ້ໃນໃບລາຍງານຜົນການດໍາເນີນງານ ພາຍໃຕ້ "ເງິນແຮສຸດທິສໍາລັບເງິນໃຫ້ກູ້ຢືມທີ່ບໍ່ເກີດດອກອອກຜົນ ປ່ຽນເປັນ /(ກັບລາຍການອອກ) ລາຍຈ່າຍ".

### 2.9 ສັນຍາເຊົ່າ

ຕາມການແຈ້ງເຕືອນເລກທີ 1433/ທຫລ ຂອງທະນາຄານແຫ່ງ ສປປ ລາວ ລົງວັນທີ 24 ຕຸລາ 2019 ທີ່ຮ້ອງຂໍໃຫ້ ທະນາຄານພານິດນໍາໃຊ້ບັນຊີເຊົ່າຕາມທີ່ກ່າວໄວ້ໃນຄູ່ມືຂອງການແຈ້ງເຕືອນເພື່ອການຈັດຕຽມ ແລະ ການລາຍງານ ເອກະສານລາຍງານການເງິນ.

ທະນາຄານຈະຮັບຮູ້ສິດນໍາໃຊ້ຊັບສິນ ແລະ ໜີ້ສິນການເຊົ່າສໍາລັບສັນຍາເຊົ່າທີ່ເຄີຍຈັດປະເພດມາກ່ອນເປັນສັນຍາເຊົ່າທາງ ການເງິນ ຫຼື ສັນຍາເຊົ່າໃນການດໍາເນີນງານ, ຍົກເວັ້ນສັນຍາເຊົ່າໄລຍະສັ້ນ ແລະ ສັນຍາເຊົ່າຊັບສິນທີ່ມີມູນຄ່າຕໍ່າ. ສິດນໍາໃຊ້ ຊັບສິນສໍາລັບສັນຍາເຊົ່າສ່ວນໃຫຍ່ຮັບຮູ້ໂດຍມູນຄ່າຕາມບັນຊີ ຖ້າວ່າມາດຕະຖານດັ່ງກ່າວໄດ້ຖືກນໍາໃຊ້ສະເໝີໄປ. ນອກຈາກການນໍາໃຊ້ອັດຕາການກູ້ຢືມທີ່ເພີ່ມຂຶ້ນໃນທໍາອິດຂອງການຍື່ນຄໍາຮ້ອງຂໍ, ໃນສັນຍາເຊົ່າບາງລາຍການ, ສິດນໍາໃຊ້ ຊັບສິນຖືກຮັບຮູ້ຈໍານວນທີ່ເທົ່າກັບໜີ້ສິນຕາມສັນຍາເຊົ່າ, ປັບປຸງສໍາລັບຄ່າເຊົ່າຈ່າຍລ່ວງໜ້າ ແລະ ຄ່າເຊົ່າຄ້າງຈ່າຍທີ່ຮັບຮູ້ ກ່ອນໜ້ານີ້ ໜີ້ສິນຕາມສັນຍາເຊົ່າຮັບຮູ້ຕາມມູນຄ່າປະຈຸບັນຂອງຈໍານວນເງິນທີ່ຊໍາລະຕາມສັນຍາເຊົ່າທີ່ເຫຼືອຄິດຫຼຸດໂດຍໃຊ້ ອັດຕາການກູ້ຢືມໃນມື້ທໍາອິດຂອງການຍື່ນຄໍາຮ້ອງຂໍ.

ສັນຍາເຊົ່າຫ້ອງການກ່ອນທີ່ຈະຮັບຮອງເອົາແຈ້ງການເລກທີ 1433/ທຫລ ທີ່ອອກໂດຍທະນາຄານແຫ່ງ ສປປ ລາວ ຕາມທີ່ ໄດ້ກ່າວມາຂ້າງເທິງ, ທະນາຄານໄດ້ຈັດປະເພດສັນຍາເຊົ່າແຕ່ລະສະບັບຂອງຕົນ - ຜູ້ເຊົ່າໃນວັນເລີ່ມຕົ້ນເປັນສັນຍາເຊົ່າ ດໍາເນີນງານ. ຄ່າທໍານຽມເຊົ່າຈະຖືກບັນທຶກເປັນຄ່າໃຊ້ຈ່າຍໃນໄລຍະເວລາໂດຍອີງຕາມໄລຍະເວລາຂອງສັນຍາ.

ສິດການນໍາໃຊ້ຊັບສິນ

ເມື່ອເລີ່ມຕົ້ນຂອງສັນຍາ, ທະນາຄານຈະປະເມີນວ່າສັນຍາແມ່ນ, ຫຼື ປະກອບດ້ວຍ, ການຈັດການ ສັນຍາເຊົ່າໂດຍອີງໃສ່ວ່າ ສັນຍາທີ່ສົ່ງກັບຜູ້ໃຊ້ (ຜູ້ເຊົ່າ) ສິດທິໃນການຄວບຄຸມການນໍາໃຊ້ຊັບສິນທີ່ກໍານົດໃນໄລຍະເວລາໃດໜຶ່ງ, ແລກປ່ຽນເພື່ອ ພິຈາລະນາ. ຖ້າສັນຍາມີຫຼາຍກວ່າອົງປະກອບຂອງສັນຍາເຊົ່າ, ຫຼື ການປະສົມປະສານຂອງສັນຍາເຊົ່າ ແລະ ການບໍລິການ, ສິ່ງຕອບແທນຈະຖືກປັນສ່ວນໃຫ້ແຕ່ລະອົງປະກອບຂອງສັນຍາເຊົ່າ ແລະ ບໍ່ແມ່ນການໃຫ້ເຊົ່າໂດຍສະຫຼຸບ ແລະ ໃນແຕ່ ລະການວັດມູນຄ່າໃຫມ່ແຕ່ລະຄັ້ງຕາມລາຄາຂາຍ ແບບແຍກສ່ວນທີ່ກ່ຽວຂ້ອງກັບ. ທະນາຄານລວມອົງປະກອບການເຊົ່າ ແລະ ບໍ່ແມ່ນການໃຫ້ເຊົ່າໃນກໍລະນີທີ່ບໍ່ສາມາດແຍກອົງປະກອບທີ່ບໍ່ແມ່ນການໃຫ້ເຊົ່າ.

ທະນາຄານຮັບຮູ້ ສິດການໃຊ້ຊັບສິນໃນມື້ເລີ່ມຕົ້ນສັນຍາເຊົ່າ (ເຊັ່ນວັນທີຊັບສິນພ້ອມໃຊ້ງານ), ສິດການໃຊ້ຊັບສິນແມ່ນ ສະແດງມູນຄ່າຕົ້ນທຶນເດີມຫັກໃຫ້ຄ່າຫຼຸ້ຍຫ້ຽນສະສົມ ແລະ ຂາດທຶນຈາກການດ້ອຍຄ່າ, ແລະ ປັບປຸງສໍາລັບການປະເມີນ ມູນຄ່າຄືນໃໝ່ຂອງໜີ້ສິນສັນຍາເຊົ່າ. ຕົ້ນທຶນຂອງສິດການໃຊ້ຊັບສິນປະກອບມີ ຈໍານວນຂອງໜີ້ສິນຕາມສັນຍາເຊົ່າທີ່ປັບປຸງ ສໍາລັບການຊໍາລະຄ່າເຊົ່າທີ່ເກີດຂຶ້ນໃນ ຫຼື ກ່ອນວັນເລີ່ມຕົ້ນ, ບວກໃຫ້ຕົ້ນທຶນທາງກົງມື້ທໍາອິດທີ່ເກີດຂຶ້ນ ແລະ ລາຍຈ່າຍ ໂດຍປະມານໃນການຮື້ຖອນ ແລະ ເອົາຊັບສິນທີ່ຕິດພັນອອກ ຫຼື ຟື້ນຟູຊັບສິນທີ່ຕິດພັນ ຫຼື ສະຖານທີ່ທີ່ຊັບສິນຕັ້ງຢູ່, ຫັກ ໃຫ້ແຮງຈູງໃຈໃນການເຊົ່າທີ່ໄດ້ຮັບ. ໄລຍະເວລາຂອງສັນຍາເຊົ່າ ລວມເຖິງໄລຍະເວລາທີ່ຄວບຄຸມໂດຍທາງເລືອກໃນການ ຂະຫຍາຍ ຖ້າຫາກກຸ່ມບໍລິສັດ ມີຄວາມໝັ້ນໃຈພໍສົມຄວນທີ່ຈະໃຊ້ຕົວເລືອກນັ້ນ. ຍົກເວັ້ນແຕ່ທະນາຄານ ມີຄວາມໝັ້ນໃຈ ພໍສົມຄວນຈະໄດ້ຮັບສິດຄວາມເປັນເຈົ້າຂອງຂອງຊັບສິນຕາມສັນຍາເຊົ່າໃນມື້ສິ້ນສຸດໄລຍະເວລາສັນຍາເຊົ່າ. ຮັບຮູ້ສິດການ ໃຊ້ຊັບສິນແມ່ນຫັກຄ່າຫຼຸ້ຍຫ້ຽນແບບສະໝໍ່າສະເໝີ ກັບໄລຍະເວລາທີ່ສັ້ນຂຶ້ນທີ່ປະເມີນອາຍຸການໃຊ້ງານ ແລະ ຕາມໄລຍະ ເວລາຂອງສັນຍາເຊົ່າ. ສິດການໃຊ້ຊັບສິນຕ້ອງໄດ້ຮັບການປະເມີນການດ້ອຍຄ່າ.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສໍາຄັນ (ຕໍ່)

### 2.9 ສັນຍາເຊົ່າ (ຕໍ່)

ໜີ້ສິນຕາມສັນຍາເຊົ່າ

ໃນມື້ເລີ່ມຕົ້ນຂອງສັນຍາເຊົ່າ, ທະນາຄານຮັບຮູ້ໜີ້ສິນຕາມສັນຍາເຊົ່າເຊິ່ງວັດໂດຍມູນຄ່າໃນປະຈຸບັນຂອງການຊໍາລະຕາມສັນຍາເຊົ່າຈະປະຕິບັດຕະຫຼອດອາຍຸຕາມສັນຍາເຊົ່າ. ການຊໍາລະຕາມສັນຍາເຊົ່າປະກອບມີຊໍາລະແບບຄົງທີ່ (ລວມເຖິງການຊໍາລະແບບຄົງທີ່ໃນສາລະສໍາຄັນ) ຫັກດ້ວຍແຮງຈູງໃຈຕາມສັນຍາເຊົ່າທີ່ໄດ້ຮັບ, ການຊໍາລະຕາມສັນຍາເຊົ່າຜັນແປເຊິ່ງຂຶ້ນຢູ່ກັບດັດສະນີ ຫຼື ອັດຕາ ແລະ ຈໍານວນທີ່ຄາດວ່າຈະພາຍໃຕ້ການຄໍ້າປະກັນມູນຄ່າຄົງເຫຼືອ. ການຊໍາລະຕາມສັນຍາເຊົ່າລວມເຖິງລາຄາການໃຊ້ສິດຂອງຕົວເລືອກການຊື້ທີ່ສົມເຫດສົມຜົນທີ່ທະນາຄານຈະໃຊ້ ແລະ ການຊໍາລະຄ່າປັບໃໝສໍາລັບການຍົກເລີກສັນຍາເຊົ່າ ຖ້າຫາກໄລຍະເວລາຕາມສັນຍາເຊົ່າສະແດງໃຫ້ເຫັນວ່າທະນາຄານໃຊ້ສິດໃນການຍົກເລີກ. ການຊໍາລະຄ່າເຊົ່າແບບຜັນແປທີ່ບໍ່ຂຶ້ນກັບດັດສະນີ ຫຼື ອັດຕາຈະຮັບຮູ້ເປັນລາຍຈ່າຍໃນໄລຍະເວລາທີ່ເຫດການ ຫຼື ເງື່ອນໄຂທີ່ກໍ່ໃຫ້ເກີດການຊໍາລະເກີດຂຶ້ນ.

ໃນການຄິດໄລ່ມູນຄ່າປະຈຸບັນຂອງການຊໍາລະຕາມສັນຍາເຊົ່າ, ທະນາຄານໃຊ້ອັດຕາການກູ້ຢືມທີ່ເພີ່ມຂຶ້ນ ໃນວັນທີເລີ່ມຕົ້ນຂອງສັນຍາ ຖ້າຫາກບໍ່ສາມາດກໍານົດອັດຕາດອກເບ້ຍ ໃນສັນຍາເຊົ່າໄດ້ທັນທີ ຫຼືຈາກວັນທີເລີ່ມຕົ້ນຂອງຈໍານວນໜີ້ສິນຕາມສັນຍາເຊົ່າຈະເພີ່ມຂຶ້ນ ເພື່ອໃຫ້ສອດຄ່ອງກັບການເພີ່ມຂຶ້ນຂອງດອກເບ້ຍ ແລະ ລົດລົງສໍາລັບຄ່າເຊົ່າທີ່ຈ່າຍໄປ ນອກຈາກນີ້ມູນຄ່າຕາມບັນຊີຂອງໜີ້ສິນຕາມສັນຍາເຊົ່າຈະຖືກວັດມູນຄ່າຄືນໃໝ່ ຖ້າຫາກມີການແກ້ໄຂປ່ຽນແປງໄລຍະເວລາຂອງສັນຍາເຊົ່າ ການປ່ຽນແປງຈໍານວນຕາມສັນຍາເຊົ່າຄົງທີ່ໃນສາລະສໍາຄັນ ຫຼື ການປ່ຽນແປງການປະເມີນເພື່ອຊື້ຊັບສິນທີ່ຕິດພັນ.

ການຈ່າຍເງິນສໍາລັບສິດການນໍາໃຊ້ຊັບສິນຖືກສະແດງໃນໃບລາຍງານກະແສເງິນສົດພາຍໃຕ້ກິດຈະກໍາການລົງທຶນ

### 2.10 ເງິນລົງທຶນໃນຫຼັກຊັບ

**ເງິນລົງທຶນເພື່ອຂາຍ**

ການລົງທຶນເພື່ອຂາຍລວມເຖິງ ເຄື່ອງມືທາງທຶນ ທີ່ທະນາຄານຕັ້ງໃຈຖືໄວ້ເພື່ອການລົງທຶນ ແລະ ພ້ອມທີ່ຈະຊື້ຂາຍ. ຫຼັກຊັບເຫຼົ່ານີ້ບໍ່ໄດ້ຖືກຊື້ຂາຍເລື້ອຍໆແຕ່ສາມາດຂາຍໄດ້ທຸກເວລາທີ່ຜົນປະໂຫຍດຂອງທຸລະກໍາ.

ການລົງທຶນເພື່ອຂາຍ ແມ່ນໄດ້ຮັບຮູ້ດ້ວຍມູນຄ່າຕົ້ນທຶນໃນເບື້ອງຕົ້ນ ແລະ ໃນເວລາຕໍ່ມາຈະຖືກປະເມີນດ້ວຍມູນຄ່າຍຸດຕິທໍາ

ມູນຄ່າຍຸດຕິທໍາຂອງການລົງທຶນເພື່ອຂາຍ ທີ່ຈໍາໜ່າຍຈະອີງຕາມລາຄາໃນມື້ທີ່ປິດບັນຊີ ໂດຍອີງຈາກຕະຫຼາດຫຼັກຊັບລາວ (LSX), ກໍາໄລ ແລະ ຂາດທຶນທີ່ຍັງບໍ່ເກີດຂຶ້ນແທ້ແມ່ນຈະຮັບຮູ້ໃນໃບລາຍງານຜົນການດໍາເນີນງານ.

ເມື່ອມີການຂາຍ ຄວາມແຕກຕ່າງລະຫວ່າງລາຄາຂາຍ ສຸດທິ ແລະ ມູນຄ່າຕາມບັນຊີຈະຖືກບັນທຶກ ຫຼື ຮັບຮູ້ໃນງົບກໍາໄລຂາດທຶນ.

**ເງິນລົງທຶນໃນພັນທະບັດທີ່ຖືຈົນຄົບກໍານົດ**

ເງິນລົງທຶນໃນພັນທະບັດລັດຖະບານ

ເງິນລົງທຶນໃນພັນທະບັດລັດຖະບານທີ່ຖືຈົນຄົບກໍານົດ, ໄດ້ຮັບຮູ້ດ້ວຍມູນຄ່າຕົ້ນທຶນໃນເບື້ອງຕົ້ນ ແລະ ໃນເວລາຕໍ່ມາຈະຖືກຮັບຮູ້ດ້ວຍມູນຄ່າຕົ້ນທຶນ, ແມ່ນມີການກໍານົດການຊໍາລະ ຫຼື ຄົບກໍານົດ ຊຶ່ງທະນາຄານ ມີຄວາມຕັ້ງໃຈ ແລະ ມີຄວາມສາມາດທີ່ຈະຖືຈົນຄົບກໍານົດ ເພື່ອຮັບດອກເບ້ຍ. ເມື່ອຂາຍກ່ອນວັນທີກໍານົດ ຫຼັກຊັບເຫຼົ່ານີ້ຈະຖືກຈັດປະເພດຄືນໃໝ່ເປັນຫຼັກຊັບເພື່ອການຄ້າ ຫຼື ຫຼັກຊັບເພື່ອຂາຍ.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 2.10 ເງິນລົງທຶນໃນຫຼັກຊັບ (ຕໍ່)

ພັນທະບັດລັດຖະບານຈາກການຊຳລະໜີ້

ພັນທະບັດລັດຖະບານຈາກການຊຳລະໜີ້ທີ່ຖືໄວ້ຈົນຄົບກຳນົດ,ຖືກຮັບຮູ້ເບື້ອງຕົ້ນທີ່ມູນຄ່າໜ້າບັດແລະຕໍ່ມາສະທ້ອນທີ່ມູນຄ່າໜ້າບັດໃນເອກະສານລາຍງານການເງິນ. ຄວາມແຕກຕ່າງລະຫວ່າງມູນຄ່າໜ້າບັດແລະລາຄາຊື້ຈະຖືກພິຈາລະນາເປັນສ່ວນຫຼຸດ. ສ່ວນຫຼຸດທີ່ເກີດຈາກການຊື້ພັນທະບັດລັດຖະບານຈະຖືກຮັບຮູ້ເປັນລາຍໄດ້ໃນໃບລາຍງານຜົນການດຳເນີນງານ. ໂດຍໃຊ້ວິທີການຮັບຮູ້ແບບເສັ້ນຊື່ໃນລະຫວ່າງປີຈາກວັນທີ່ຊື້ເຖິງວັນທີ່ຄົບກຳນົດ

### 2.11 ການລົງທຶນໃນ ວິສາຫະກິດຮ່ວມທຶນ

ຄວາມສົນໃຈໃນການຮ່ວມທຶນແມ່ນການລົງທຶນໃນ ບໍລິສັດ ອື່ນທີ່ທະນາຄານມີຂໍ້ຕົກລົງຮ່ວມທຶນແລະມີຕົວແທນເປັນກຳມະການໃນບໍລິສັດເຫຼົ່ານັ້ນ.

ການລົງທຶນໃນ ວິສາຫະກິດຮ່ວມທຶນແມ່ນຖືກຮັບຮູ້ເປັນຕົ້ນທຶນ ແລະ ສະແດງຢູ່ໃນໃບລາຍງານຖານະການເງິນ. ເງິນປັນຜົນ ແລະ ລາຍຮັບຈາກການລົງທຶນໃນ ການລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມຖືກສະແດງຢູ່ໃນໃບລາຍງານຜົນການດຳເນີນງານຄື: "ກຳໄລສຸດທິຈາກການລົງທຶນໃນຫຼັກຊັບທຶນ".

### 2.12 ຊັບສິນທີ່ຖືກຍຶດ

ຊັບສິນທີ່ຖືກຍຶດໝາຍເຖິງຊັບສິນທີ່ຖືກຍຶດເພາະການບໍ່ຈ່າຍຕາມສັນຍາກູ້ຢືມ. ທະນາຄານຈະປະມູນຊັບສິນເຫຼົ່ານີ້ເພື່ອກູ້ຄືນເງິນທີ່ຍັງຄ້າງ. ຊັບສິນທີ່ຖືກຍຶດໄດ້ຖືກບັນທຶກເມື່ອທະນາຄານມີສິດຕໍ່ສິນຊັບທີ່ຖືກຍຶດ.

ຊັບສິນທີ່ຖືກຍຶດຈະຖືກບັນທຶກເມື່ອທະນາຄານມີສິດເໜືອຊັບສິນທີ່ຖືກຍຶດ. ຊັບສິນທີ່ຖືກຍຶດຈະຖືກບັນທຶກໂດຍໃຊ້ຍອດຄ້າງຕາມສັນຍາຂອງລູກຄ້າ ແລະຈະຖືກປັບປຸງເມື່ອຂາຍ. ຄວາມແຕກຕ່າງລະຫວ່າງລາຄາຂາຍແລະຈຳນວນທີ່ບັນທຶກຈະຖືກຮັບຮູ້ເປັນກຳໄລຫຼືຂາດທຶນຈາກການຂາຍຊັບສິນທີ່ສະແດງລາຍຮັບ.

### 2.13 ຊັບສົມບັດຄົງທີ່

#### 2.13.1 ຊັບສິນຄົງທີ່ບໍ່ມີຕົວຕົນ

ຊັບສິນຄົງທີ່ບໍ່ມີຕົວຕົນ ປະກອບມີ ສິດນຳໃຊ້ທີ່ດິນ ແລະ ໂປຣແກຣມ. ການຊື້ລິຂະສິດໃນການນຳໃຊ້ໂປຣແກຣມ ຄອມພິວເຕີແມ່ນວັດໃນມູນຄ່າຕົ້ນທຶນ. ມູນຄ່າຕົ້ນທຶນເຫຼົ່ານີ້ ແມ່ນຫັກຄ່າເສື່ອມຕະຫຼອດອາຍຸການໃຊ້ງານດັ່ງຕໍ່ໄປນີ້:

| | |
|---|---|
| ສິດນຳໃຊ້ທີ່ດິນ (*) | ບໍ່ມີຄ່າເສື່ອມມູນຄ່າ |
| ໂປຣແກຣມ. | 20% |

(*): ສິດໃນການໃຊ້ທີ່ດິນໝາຍເຖິງທີ່ດິນທີ່ທະນາຄານເປັນເຈົ້າຂອງ ແຕ່ໄດ້ຖືກບັນທຶກໃນບັນຊີຕາມ ແຜນຜັງບັນຊີທີ່ອອກໂດຍ ທຫລ (BOL) ໃນຮູບແບບຂອງສິດໃນການໃຊ້ທີ່ດິນ. ຄ່າໃຊ້ຈ່າຍຂອງສິດໃນການໃຊ້ທີ່ດິນນັ້ນບໍ່ໄດ້ຖືກຫັກຄ່າເສື່ອມລາຄາໂດຍເຫດວ່າມີອາຍຸການໃຊ້ທີ່ບໍ່ຈຳກັດ

ຕົ້ນທຶນທີ່ກ່ຽວຂ້ອງກັບການບຳລຸງຮັກສາ ໂປຣແກຣມຄອມພິວເຕີ ແມ່ນຮັບຮູ້ເປັນລາຍຈ່າຍເມື່ອເກີດຂຶ້ນ.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 2.13 ຊັບສິນບັດຄົງທີ່ (ຕໍ່)

#### 2.13.2 ຊັບສິນຄົງທີ່ມີຕົວຕົນ

ຊັບສິນຄົງທີ່ມີຕົວຕົນປະກອບມີອາຄານ ແລະ ການປັບປຸງ, ອຸປະກອນຫ້ອງການ, ເຟີນິເຈີ້ ແລະ ສິ່ງຕິດຕັ້ງ ແລະ ພາຫະນະ.

ຊັບສິນຄົງທີ່ມີຕົວຕົນແມ່ນສະແດງລາຄາຕົ້ນທຶນຫັກຄ່າຫຼູ້ຍຫ້ຽນສະສົມ, ຖ້າມີ.

ຕົ້ນທຶນຂອງຊັບສິນຄົງທີ່ມີຕົວຕົນປະກອບມີລາຄາຊື້ບວກກັບລາຍຈ່າຍທາງກົງກັບການທີ່ໄດ້ນຳເອົາຊັບສິນມາເຂົ້າມາຢູ່ໃນສະພາບພ້ອມໃຊ້ງານຕາມຈຸດປະສົງການໃຊ້ງານ.

ລາຍຈ່າຍເພີ່ມເຕີມສຳລັບການປັບປຸງ ແລະ ການຕໍ່ອາຍຸການໃຊ້ງານ ແມ່ນໄດ້ຈົດເຂົ້າເປັນຕົ້ນທຶນ ແລະ ເປັນລາຍຈ່າຍສຳລັບການບຳລຸງຮັກສາ ແລະ ສ້ອມແປງ ເຂົ້າໃນໃບລາຍງານຜົນການດຳເນີນງານ, ຖ້າມີ

ເມື່ອຊັບສິນຂາຍ ຫຼື ສະສາງ. ຕົ້ນທຶນ ແລະ ຄ່າຫຼູ້ຍຫ້ຽນສະສົມ ຫຼື ຄ່າເສື່ອມມູນຄ່າ ແມ່ນໄດ້ລຶບອອກຈາກໃບລາຍງານຖານະການເງິນ ແລະ ກຳໄລ ຫຼື ຂາດທຶນ ທີ່ເກີດຈາກການສະສາງຈະຖືກບັນທຶກເຂົ້າໃນໃບລາຍງານຜົນການດຳເນີນງານ.

### 2.14 ຄ່າຫຼູ້ຍຫ້ຽນ

ຄ່າຫຼູ້ຍຫ້ຽນ ແລະ ການແບ່ງຈ່າຍຂອງຊັບສິນຄົງທີ່ມີຕົວຕົນແມ່ນຄິດໄລ່ແບບສະໝໍ່າສະເໝີ ຕາມອັດຕາທີ່ກຳນົດຕະຫຼອດອາຍຸການໃຊ້ງານໂດຍປະມານຕາມກົດໝາຍອາກອນສະບັບປັບປຸງເລກທີ 67 ລົງວັນທີ 18 ມິຖຸນາ 2019 ທີ່ມີຜົນບັງຄັບໃຊ້ສຳລັບຮອບໄລຍະການບັນຊີເລີ່ມຕັ້ງແຕ່ວັນທີ 1 ມັງກອນ 2020 ອັດຕາທີ່ໃຊ້ມີດັ່ງຕໍ່ໄປນີ້:

| | |
|---|---|
| ອາຄານ & ການປັບປຸງ | 5%-20% |
| ອຸປະກອນຫ້ອງການ | 20% |
| ພາຫະນະ | 20% |
| ເຟີນິເຈີ ແລະ ສິ່ງຕິດຕັ້ງ | 5%-20% |

### 2.15 ຄັງສຳຮອງຕາມລະບຽບການ

ພາຍໃຕ້ກົດໝາຍວ່າດ້ວຍທະນາຄານທຸລະກິດ ລົງວັນທີ 7 ທັນວາ 2018 ກຳນົດໃຫ້ທະນາຄານທຸລະກິດແບ່ງປັນກຳໄລສຸດທິໃຫ້ກອງທຶນ ສຳຮອງຕາມກົດໝາຍ, ເພື່ອຂະຫຍາຍທຸລະກິດ ແລະ ອື່ນໆ.

ອີງຕາມກົດໝາຍວິສາຫະກິດ, ທະນາຄານ ຈະຕ້ອງນຳເງິນ 10% ຂອງກຳໄລຫຼັງຈາກຫັກອາກອນໃນປີ ເຂົ້າກອງທຶນສຳຮອງຕາມກົດໝາຍ. ເມື່ອເງິນສຳຮອງຕາມກົດໝາຍຄົບ 50% ຂອງທຶນຈົດທະບຽນ, ທະນາຄານແມ່ນຕ້ອງຢຸດການສຳຮອງດັ່ງກ່າວ ຍົກເວັ້ນແຕ່ກົດໝາຍຈະກຳນົດໄວ້ເປັນຢ່າງອື່ນ. ທະນາຄານຈະບັນທຶກຫຼັງຈາກທີ່ໄດ້ຮັບການອະນຸມັດຈາກກອງປະຊຸມຜູ້ຖືຮຸ້ນ.

ຄັງຂະຫຍາຍທຸລະກິດ ແລະ ຄັງສຳຮອງອື່ນໆ ຈະຖືກສ້າງຂຶ້ນຕາມການຕັດສິນໃຈຂອງສະພາບໍລິຫານ.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 2.16 ອາກອນ

ທະນາຄານມີພັນທະຕ້ອງຈ່າຍອາກອນໃນອັດຕາ 20% ຂອງກຳໄລທັງໝົດກ່ອນຫັກອາກອນ ໂດຍອີງຕາມກົດໝາຍສ່ວຍສາອາກອນ.

ການມອບອາກອນຂອງທະນາຄານແມ່ນຕ້ອງຖືກກວດສອບຄືນໂດຍເຈົ້າໜ້າທີ່ສ່ວຍສາອາກອນ. ຍ້ອນວ່າການນຳໃຊ້ກົດໝາຍສ່ວຍສາອາກອນ ແລະ ລະບຽບການຕ່າງໆແມ່ນມີຫລາຍປະເພດເຊິ່ງອາດຈະແປຄວາມໄດ້ເປັນຫລາຍຢ່າງ. ຈຳນວນທີ່ໄດ້ຖືກລາຍງານຢູ່ໃນເອກະສານລາຍງານການເງິນ ອາດຈະມີການປ່ຽນແປງຂຶ້ນກັບການໄລ່ລຽງຂອງເຈົ້າໜ້າທີ່ສ່ວຍສາອາກອນ.

### 2.17 ຜົນປະໂຫຍດຂອງພະນັກງານ

ຜົນປະໂຫຍດພາຍຫຼັງອອກການ

ຜົນປະໂຫຍດພາຍຫຼັງອອກການແມ່ນຈ່າຍໃຫ້ພະນັກງານຂອງທະນາຄານ ໂດຍກອງທຶນປະກັນສັງຄົມທີ່ຂຶ້ນກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ. ທະນາຄານໄດ້ຈຳເປັນຕ້ອງປະກອບສ່ວນເຂົ້າໃນຜົນປະໂຫຍດຫລັງການອອກແຮງງານ ໂດຍການຈ່າຍຄ່າປະກັນສັງຄົມໃຫ້ອົງການປະກັນສັງຄົມໃນອັດຕາ 6.00% ຂອງເງິນເດືອນພື້ນຖານຂອງພະນັກງານຕໍ່ເດືອນ. ທະນາຄານບໍ່ມີພັນທະເພີ່ມເຕີມກ່ຽວກັບຜົນປະໂຫຍດຫຼັງການຈ້າງງານສຳລັບພະນັກງານຂອງຕົນນອກຈາກນີ້.

ຜົນປະໂຫຍດຈາກການເລີກຈ້າງ

ອີງຕາມມາດຕາ 82 ຂອງກົດໝາຍວ່າດ້ວຍແຮງງານ (ສະບັບປັບປຸງ) ເລກທີ 43/ສພຊ ລົງວັນທີ 24 ທັນວາ 2013 ແລະ ປະກາດໃຊ້ໂດຍປະທານປະເທດແຫ່ງ ສປປ ລາວ ຕາມລັດຖະດຳລັດເລກທີ 068/ປປທ ລົງວັນທີ 24 ມັງກອນ 2014. ທະນາຄານມີພັນທະຈ່າຍເງິນຊົດເຊີຍໃຫ້ພະນັກງານຜູ້ທີ່ຖືກເລີກຈ້າງຍ້ອນກໍລະນີດັ່ງລຸ່ມນີ້:

- ເມື່ອພະນັກງານບໍ່ມີສຸຂະພາບແຂງແຮງ ດັ່ງນັ້ນ, ຈຶ່ງບໍ່ສາມາດເຮັດວຽກຕໍ່ໄດ້ຢ່າງເຕັມເມັດເຕັມໜ່ວຍ
- ເມື່ອນາຍຈ້າງຫາກໄດ້ພິຈາລະນາວ່າມີຄວາມຈຳເປັນຈະຕ້ອງໄດ້ຫລຸດຈຳນວນພະນັກງານລົງເພື່ອປັບປຸງໂຄງສ້າງວຽກງານພາຍໃນໜ່ວຍງານ.

ສຳລັບການຍົກເລີກສັນຍາຈ້າງງານ ໃນຂົງເຂດທີ່ໄດ້ກ່າວມາຂ້າງເທິງນັ້ນ, ນາຍຈ້າງຕ້ອງຈ່າຍເງິນອຸດໜູນເທື່ອດຽວໃຫ້ພະນັກງານ ພື້ນຖານການຄິດໄລ່ແມ່ນ 10% ຂອງເງິນເດືອນພື້ນຖານກ່ອນເລີກຈ້າງຄູນໃຫ້ຈຳນວນເດືອນເຮັດວຽກ ຄູນດ້ວຍຈຳນວນເດືອນທັງໝົດທີ່ເຮັດວຽກ.

ໃນວັນທີ 31 ທັນວາ 2025, ບໍ່ມີພະນັກງານທະນາຄານຜູ້ທີ່ເລີກຈ້າງເກີດຂຶ້ນດັ່ງທີ່ກ່າວຂ້າງເທິງ, ດັ່ງນັ້ນ ທະນາຄານບໍ່ໄດ້ຫັກຄັງແຮສຳລັບການຍົກເລີກການຈ້າງດັ່ງກ່າວໃນເອກະສານລາຍງານການເງິນ.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສໍາຄັນ (ຕໍ່)

### 2.18 ທີ່ດິນຝາກຂາຍ

ທີ່ດິນຝາກຂາຍປະກອບດ້ວຍທີ່ດິນທີ່ທະນາຄານໄດ້ມາໂດຍຜ່ານການຕົກລົງຊໍາລະໜີ້ກັບລູກຄ້າ, ເຊິ່ງລູກຄ້າຈະໄດ້ຮັບສິດໃນການຊື້ທີ່ດິນຄືນໃນໄລຍະເວລາທີ່ໄດ້ຕົກລົງກັນ ແລະ ໃນລາຄາທີ່ກໍານົດໄວ້ຕາມທີ່ໄດ້ກໍານົດໄວ້ໃນສັນຍາຝາກຂາຍ.

ທີ່ດິນທີ່ຢູ່ພາຍໃຕ້ການຝາກຂາຍຈະຖືກບັນທຶກໂດຍໃຊ້ຍອດເງິນຄ້າງຊໍາລະຕາມສັນຍາຂອງລູກຄ້າ. ເມື່ອຂາຍແລ້ວ, ທີ່ດິນຈະຖືກຕີມູນຄ່າໂດຍອີງໃສ່ລາຄາຂາຍຕົວຈິງ. ສ່ວນຕ່າງລະຫວ່າງທີ່ໄດ້ຈາກການຂາຍ ແລະ ມູນຄ່າຕາມບັນຊີຂອງທີ່ດິນແມ່ນຖືກຮັບຮູ້ເປັນກໍາໄລ ຫຼື ຂາດທຶນຈາກການຂາຍຊັບສິນໃນໃບລາຍງານຜົນການດໍາເນີນງານ.

### 2.19 ການລົງທຶນອື່ນໆ

ການລົງທຶນອື່ນໆປະກອບດ້ວຍການລົງທຶນທີ່ທະນາຄານບໍ່ໄດ້ຈັດປະເພດເປັນຫຼັກຊັບທີ່ວາງໄວ້ເພື່ອຂາຍ ຫຼື ຫຼັກຊັບທີ່ຖືໄວ້ຈົນຄົບກໍານົດ. ການລົງທຶນເຫຼົ່ານີ້ເປັນຕົວແທນໃຫ້ແກ່ການຝາກເງິນທີ່ເຮັດຕາມຂໍ້ຕົກລົງການລົງທຶນຕາມສັນຍາ. ການລົງທຶນອື່ນໆແມ່ນຖືກຮັບຮູ້ໃນເບື້ອງຕົ້ນຕາມຈໍານວນເງິນທີ່ລົງທຶນຕາມເງື່ອນໄຂຂອງສັນຍາ. ຫຼັງຈາກການຮັບຮູ້ໃນເບື້ອງຕົ້ນ , ການລົງທຶນອື່ນໆແມ່ນຖືກຮັບຮູ້ຕາມມູນຄ່າທີ່ລົງທຶນ.

ກໍາໄລ ຫຼື ຂາດທຶນທີ່ເກີດຈາກການລົງທຶນອື່ນໆຈະຖືກຮັບຮູ້ເປັນກໍາໄລ ຫຼື ຂາດທຶນເມື່ອເງື່ອນໄຂທີ່ລະບຸໄວ້ໃນສັນຍາການລົງທຶນໄດ້ຮັບການປະຕິບັດສໍາເລັດ.

## 3. ລາຍຮັບສຸດທິຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍ

| | 2025<br>ລ້ານກີບ | 2024<br>ລ້ານກີບ |
|---|---:|---:|
| **ລາຍຮັບຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍຈາກ:** | | |
| ເງິນກູ້ທີ່ປ່ອຍໃຫ້ລູກຄ້າ | 2,169,804 | 1,826,137 |
| ເງິນຝາກລະຫວ່າງທະນາຄານ | 37,231 | 25,557 |
| ພັນທະບັດລັດຖະບານ ທີ່ອອກໃຫ້ໂດຍກະຊວງການເງິນ | 80,026 | 53,210 |
| | **2,287,061** | **1,904,904** |
| **ລາຍຈ່າຍດອກເບ້ຍ ແລະ ຄ້າຍຄືດອກເບ້ຍສໍາລັບ:** | | |
| ເງິນຝາກຂອງທະນາຄານອື່ນ | (139,634) | (143,123) |
| ເງິນຝາກຂອງລູກຄ້າ | (1,655,750) | (1,293,141) |
| | **(1,795,384)** | **(1,436,264)** |
| **ລາຍຮັບສຸດທິຈາກດອກເບ້ຍອື່ນໆ ແລະ ຄ້າຍຄືດອກເບ້ຍ** | **491,677** | **468,640** |

## 4. ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການ

| | 2025<br>ລ້ານກີບ | 2024<br>ລ້ານກີບ |
|---|---|---|
| **ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການຈາກ:** | | |
| ທຸລະກຳທາງດ້ານການເງິນ, ທຸລະກຳ ATM ແລະ ການໂອນເງິນ | 927,595 | 753,873 |
| ທຸລະກຳລະຫວ່າງທະນາຄານ | 3,710 | 2,372 |
| ການບໍລິການຊຳລະ | 6,443 | 5,393 |
| | **937,748** | **761,638** |
| **ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການຈາກ:** | | |
| ທຸລະກຳລະຫວ່າງທະນາຄານ | (127,787) | (102,648) |
| ການບໍລິການຊຳລະ | (24,438) | (23,438) |
| | **(152,225)** | **(126,086)** |
| **ລາຍຮັບສຸດທິຄ່າທຳນຽມ ແລະ ຄ່າບໍລິການ** | **785,523** | **635,552** |

## 5. ກຳໄລສຸດທິຈາກລົງທຶນໃນຫຼັກຊັບ

ກຳໄລສຸດທິຈາກການລົງທຶນຫຼັກຊັບສ່ວນຫຼາຍ ແມ່ນມາຈາກກຳໄລສ່ວນຫຼຸດພັນທະບັດ , ການຊຳລະໜີ້ຜ່ານພັນທະບັດຂອງລັດຖະບານ, ຈຳນວນເງິນ 34,938 ລ້ານກີບ (2024: 41,005 ລ້ານກີບ).

## 6. ກຳໄລສຸດທິຈາກການຊື້ - ຂາຍເງິນຕາຕ່າງປະເທດ

| | 2025<br>ລ້ານກີບ | 2024<br>ລ້ານກີບ |
|---|---|---|
| ກຳໄລຈາກການແລກປ່ຽນເງິນຕາຕ່າງປະເທດ | 41,685,617 | 66,802,556 |
| ຂາດທຶນຈາກການແລກປ່ຽນເງິນຕາຕ່າງປະເທດ | (41,542,296) | (66,523,203) |
| | **143,321** | **279,353** |

## 7. ລາຍຮັບອື່ນໆຈາກການດໍາເນີນງານ

| | 2025<br>ລ້ານກີບ | 2024<br>ລ້ານກີບ |
|---|---:|---:|
| ການປີ້ນກັບລາຍການດອກເບ້ຍຄ້າງຈ່າຍ ແລະ ລາຍຈ່າຍ | 3,092 | 20,815 |
| ເກັບຈາກໜີ້ເສຍທີ່ໄດ້ສະສາງອອກ | 8 | 3 |
| ລາຍຮັບຈາກການຂາຍຊັບສິນບັດ | 1,170 | 1,467 |
| ລາຍຈ່າຍທີ່ໄດ້ຮັບຄືນ | 7,376 | 6,821 |
| ລາຍຮັບທີ່ບໍ່ແມ່ນຈາກການດໍາເນີນງານ | 5,733 | 4,181 |
| ລາຍຮັບພິເສດ (1) | 12,904 | 30,134 |
| ລາຍຮັບຈາກຂາຍຄໍາ (2) | 47,651 | - |
| | **77,934** | **63,421** |

(1) ລາຍຮັບພິເສດສໍາລັບປີທີ່ສິ້ນສຸດວັນທີ 31 ທັນວາ 2025 ສ່ວນໃຫຍ່ມາຈາກກໍາໄລຈາກການຂາຍຊັບສິນທີ່ຖືກຍຶດມີຈໍານວນທັງໝົດ 12,904 ລ້ານກີບ (2024: 30,134 ລ້ານກີບ)

(2) ໃນປີ 2025, ທະນາຄານໄດ້ຮັບຮູ້ລາຍຮັບຈາກການຂາຍຄໍາທັງໝົດ 47,651 ລ້ານກີບ (ປີ 2024: ບໍ່ມີ).

## 8. ເງິນເດືອນ ແລະ ຄ່າໃຊ້ຈ່າຍອື່ນໆກ່ຽວກັບພະນັກງານ

| | 2025<br>ລ້ານກີບ | 2024<br>ລ້ານກີບ |
|---|---:|---:|
| ລາຍຈ່າຍເງິນເດືອນ ແລະ ຄ່າຈ້າງ | 128,148 | 103,944 |
| ລາຍຈ່າຍປະກັນສັງຄົມສໍາລັບພະນັກງານ | 2,194 | 2,249 |
| ໂບນັດ ແລະ ຜົນປະໂຫຍດອື່ນໆ | 87,397 | 68,968 |
| ລາຍຈ່າຍຝຶກອົບຮົມ | 468 | 1,337 |
| ຜົນປະໂຫຍດອື່ນໆ ສໍາລັບພະນັກງານ | 46,454 | 29,313 |
| | **264,661** | **205,811** |

## 9. ລາຍຈ່າຍບໍລິຫານອື່ນໆ

| | 2025<br>ລ້ານກີບ | 2024<br>ລ້ານກີບ |
|---|---|---|
| ຄ່ານາຍໜ້າ ແລະ ຜູ້ຊ່ວງວຊານ (1) | 23,403 | 21,582 |
| ຄ່ານ້ຳມັນ | 1,716 | 1,865 |
| ລາຍຈ່າຍໃນການເດີນທາງ | 4,359 | 4,833 |
| ລາຍຈ່າຍຄ່າໂຄສະນາ, ການຕະຫຼາດ ແລະ ການສົ່ງເສີມການຂາຍ | 15,280 | 11,118 |
| ລາຍຈ່າຍທົ່ວໄປ ແລະ ລາຍຈ່າຍບໍລິຫານ | 11,135 | 9,860 |
| ລາຍຈ່າຍຄ່າປະກັນໄພ | 1,289 | 1,247 |
| ຄ່າໄປສະນີ ແລະ ໂທລະຄົມມະນາຄົມ | 9,384 | 8,539 |
| ລາຍຈ່າຍຄ່າສ້ອມແປງ ແລະ ບຳລຸງຮັກສາ | 39,178 | 27,974 |
| ລາຍຈ່າຍຄ່າໄຟຟ້າ ແລະ ນ້ຳປະປາ | 6,027 | 5,363 |
| ລາຍຈ່າຍຄ່າເຊົ່າຫ້ອງການ | 24,219 | 11,781 |
| ລາຍຈ່າຍຄ່າບັນເທີງ | 11,826 | 13,259 |
| ລາຍຈ່າຍອື່ນໆ (2) | 40,212 | 45,049 |
| | **188,028** | **162,470** |

(1) ປະກອບດ້ວຍມູນຄ່າການກວດສອບປະມານ 717 ລ້ານກີບ.

(2) ລາຍຈ່າຍອື່ນໆ ສ່ວນໃຫຍ່ແມ່ນປະກອບດ້ວຍການຍົກເວັ້ນຄ່າທຳນຽມຕ່າງໆ ເຊັ່ນຄ່າທຳນຽມບັດ ແລະ ຄ່າປັບໄໝໃນການຊຳລະລ່າຊ້າ.

## 10. ລາຍຈ່າຍອື່ນໆໃນການດຳເນີນງານ

| | 2025<br>ລ້ານກີບ | 2024<br>ລ້ານກີບ |
|---|---|---|
| ລາຍຈ່າຍກອງທຶນປົກປ້ອງຜູ້ຝາກເງິນ | 30,954 | 25,244 |
| ລາຍຈ່າຍເງິນແຮສຸດທິສຳລັບເງິນກູ້ທີ່ເກີດດອກອອກຜົນ | 49,314 | 64,983 |
| ອື່ນໆ (1) | 6,919 | 58,428 |
| | **87,187** | **148,655** |

(1) ປະກອບດ້ວຍຄ່າໃຊ້ຈ່າຍອື່ນໆ ເຊັ່ນ: ຄ່າບໍລິຈາກ, ຄ່າທຳນຽມຜູ້ປະເມີນທີ່ດິນ ແລະ ຄ່າສະໜັບສະໜູນກິດຈະກຳ

## 11. ເງິນສົດໃນຄັງ

| | 2025<br>ລ້ານກີບ | 2024<br>ລ້ານກີບ |
|---|---|---|
| ເງິນສົດໃນຄັງເປັນສະກຸນເງິນກີບ | 342,902 | 215,969 |
| ເງິນສົດໃນຄັງເປັນສະກຸນເງິນຕ່າງປະເທດ | 1,352,938 | 2,260,992 |
| | **1,695,840** | **2,476,961** |

## 12. ເງິນຝາກຢູ່ກັບ ທຫລ

| | 2025 ລ້ານກີບ | 2024 ລ້ານກີບ |
|---|---:|---:|
| ເງິນຝາກກະແສລາຍວັນ | 3,761,217 | 3,046,724 |
| ເງິນຝາກພາກບັງຄັບ (i) | 1,858,792 | 1,510,649 |
| ເງິນຝາກສຳລັບທຶນຈົດທະບຽນ (ii) | 6 | 6 |
| | **5,620,015** | **4,557,379** |

ເງິນຝາກຢູ່ກັບທະນາຄານແຫ່ງ ສປປ ລາວ ລວມມີບັນຊີເງິນຝາກເພື່ອການຊຳລະສະສາງ ແລະ ເງິນຝາກແຮບັງຄັບ. ເງິນຝາກປະເພດນີ້ບໍ່ມີດອກເບ້ຍ.

(i) ອີງຕາມລະບຽບການຂອງ ທຫລ, ທະນາຄານຕ້ອງໄດ້ຮັກສາເງິນສົດສຳຮອງຢູ່ກັບ ທຫລ ໃນຮູບແບບຂອງເງິນຝາກພາກບັງຄັບ ເຊິ່ງຖືກຄິດໄລ່ສອງຄັ້ງຕໍ່ເດືອນໃນອັດຕາ 8% ສຳລັບເງິນກີບ ແລະ 10.00% - 11.00% ສຳລັບເງິນຕາຕ່າງປະເທດ (2024: 8% ສຳລັບເງິນກີບ ແລະ 10% - 11%) ຂອງເງິນຝາກລູກຄ້າທີ່ມີມື້ຄົບກຳນົດໜ້ອຍກວ່າ 12 ເດືອນ, ພາຍໃນປີ ທະນາຄານໄດ້ຮັກສາເງິນຝາກແຮບັງຄັບ ໂດຍສອດຄ່ອງກັບຂໍ້ກຳນົດຂອງ ທະນາຄານແຫ່ງ ສປປ ລາວ.

(ii) ອີງຕາມລະບຽບການ 02/PR ຂອງ ທຫລ, ທະນາຄານການຄ້າຕ້ອງຮັກສາຍອດເງິນຝາກພິເສດຂັ້ນຕ່ຳທີ່ທາງ ທຫລ ວາງອອກ ເຊິ່ງເທົ່າກັບ 25% ຂອງທຶນທີ່ຊຳລະແລ້ວ ເພື່ອຮັບປະກັນການດຳເນີນທຸລະກິດຢ່າງຕໍ່ເນື່ອງ. ໃນລະຫວ່າງປີ, ທະນາຄານໄດ້ຮັບການອະນຸມັດຈາກທະນາຄານແຫ່ງ ສປປ ລາວ ໃຫ້ນຳໃຊ້ທຶນຈົດທະບຽນທີ່ໄດ້ມາຈາກການອອກຈຳໜ່າຍຮຸ້ນເຂົ້າໃນການປ່ອຍສິນເຊື່ອໃຫ້ລູກຄ້າ 90% ແລະ 10% ເພື່ອລົງທຶນໃນເຕັກໂນໂລຊີ ແລະ ນະວັດຕະກຳການເງິນ.

## 13. ຄຳ ແລະ ວັດຖຸມີຄ່າອື່ນໆຢູ່ທະນາຄານ

| | 2025 ລ້ານກີບ | 2024 ລ້ານກີບ |
|---|---:|---:|
| ວັນທີ 01 ມັງກອນ | 181,799 | - |
| ເພີ່ມຂຶ້ນ | 519,857 | 192,794 |
| ຂາຍອອກ | (420,153) | - |
| ກຳໄລ/(ຂາດທຶນ) ທີ່ບໍ່ເກີດຂຶ້ນຈິງຈາກການຕີມູນຄ່າຄືນຂອງຄຳ | 15,408 | (10,995) |
| | **296,911** | **181,799** |

## 14. ໜີ້ຕ້ອງຮັບຈາກທະນາຄານອື່ນ

| | 2025<br>ລ້ານກີບ | 2024<br>ລ້ານກີບ |
|---|---|---|
| **ເງິນຝາກກະແສລາຍວັນຢູ່ກັບທະນາຄານອື່ນໆ** | **1,454,857** | **1,219,141** |
| - ທະນາຄານພາຍໃນປະເທດ | 87,465 | 47,798 |
| - ທະນາຄານຕ່າງປະເທດ | 1,367,392 | 1,171,343 |
| **ເງິນຝາກມີກຳນົດຢູ່ທະນາຄານອື່ນ** | **1,153,003** | **73,316** |
| - ທະນາຄານພາຍໃນປະເທດ (i) | 1,153,003 | 73,316 |
| **ເງິນຝາກປະຢັດຢູ່ທະນາຄານອື່ນ** (ii) | **13,397** | **6,148** |
| - ທະນາຄານພາຍໃນປະເທດ | 1,129 | 322 |
| - ທະນາຄານຕ່າງປະເທດ | 12,268 | 5,826 |
| | **2,621,257** | **1,298,605** |

ອັດຕາດອກເບ້ຍສຳລັບໜີ້ຕ້ອງສົ່ງທະນາຄານອື່ນພາຍໃນປີມີດັ່ງລຸ່ມນີ້:

(i) ເງິນຝາກໄລຍະຍາວເປັນສະກຸນໂດລາ, ມີໄລຍະເວລາ 3 ເດືອນ, ພ້ອມກັບດອກເບ້ຍ 3% - 12% ຕໍ່ປີ (2024: 3% - 12% ຕໍ່ປີ)

(ii) ເງິນຝາກປະຢັດບໍ່ມີໄລຍະເວລາ ແລະໄດ້ຮັບດອກເບ້ຍ 0% - 1% ຕໍ່ປີ (2024: 0% - 1% ຕໍ່ປີ)

## 15. ການລົງທຶນໃນຫຼັກຊັບ

| | 2025<br>ລ້ານກີບ | 2024<br>ລ້ານກີບ |
|---|---|---|
| ຫຼັກຊັບມີໄວ້ເພື່ອຂາຍ (15.1) | 1,710 | 2,350 |
| ຫຼັກຊັບທີ່ຖືຈົນຄົບກຳນົດ (15.2) | 1,000,322 | 995,118 |
| ຫຼັກຊັບທີ່ດິນ ທີ່ຝາກຂາຍ (15.3) | 911,644 | - |
| ຫຼັກຊັບອື່ນໆ (15.4) | 634,712 | - |
| | **2,548,388** | **997,468** |

### 15.1 ຫຼັກຊັບປະເພດມີໄວ້ເພື່ອຂາຍ

ຫຼັກຊັບເພື່ອຂາຍປະກອບດ້ວຍຮຸ້ນ 1,000,000 ຮຸ້ນຂອງບໍລິສັດ ໄຟຟ້າລາວ ມະຫາຊົນ, ເຊິ່ງເປັນບໍລິສັດຈົດທະບຽນ ໃນຕະຫຼາດຫຼັກຊັບລາວ.

## 15. ການລົງທຶນໃນຫຼັກຊັບ (ຕໍ່)

### 15.2 ຫຼັກຊັບປະເພດຖືໄວ້ຈົນຄົບກໍານົດ

ສະແດງເຖິງພັນທະບັດທີ່ອອກໂດຍກະຊວງການເງິນ, ລາຍລະອຽດຂອງພັນທະບັດທີ່ຖືຄອງຈົນຄົບກໍານົດອີງຕາມສັນຍາມີດັ່ງນີ້:

ລາຍລະອຽດຂອງພັນທະບັດທີ່ຖືຄອງຈົນຄົບກໍານົດອີງຕາມສັນຍາມີດັ່ງລຸ່ມນີ້:

| | 2025<br>ລ້ານກີບ | 2024<br>ລ້ານກີບ |
|---|---|---|
| ພາຍໃນ 1 ປີ | 330,726 | 79,561 |
| ໄລຍະເວລາ 1 ຫາ 5 ປີ | 499,094 | 354,771 |
| ໄລຍະເວລາເກີນ 5 ປີ | 170,502 | 560,786 |
| | **1,000,322** | **995,118** |

ລາຍລະອຽດອັດຕາດອກເບ້ຍ ພັນທະບັດທີ່ຖືໄວ້ຈົນຄົບກໍານົດ ມີດັ່ງນີ້:

| | 2025<br>% ຕໍ່ປີ | 2024<br>% ຕໍ່ປີ |
|---|---|---|
| ພາຍໃນ 1 ປີ | 5.50% | 5.50% |
| ໄລຍະເວລາ 1 ຫາ 5 ປີ | 4.50% - 5.20% | 4.50% - 5.20% |
| ໄລຍະເວລາເກີນ 5 ປີ | 5.30% - 6.00% | 5.30% - 6.00% |

### 15.3 ຫຼັກຊັບປະເພດທີ່ດິນ ທີ່ຝາກຂາຍ

ທີ່ດິນທີ່ຢູ່ພາຍໃຕ້ການຝາກຂາຍມູນຄ່າທັງໝົດ 911,644 ລ້ານກີບ ສ່ວນໃຫຍ່ແມ່ນທີ່ດິນທີ່ໄດ້ຮັບຈາກລູກຄ້າເງິນກູ້ເປັນສ່ວນໜຶ່ງຂອງຂໍ້ຕົກລົງການຊົດເຊີຍເງິນກູ້. ພາຍໃຕ້ສັນຍາເຫຼົ່ານີ້, ລູກຄ້າມີສິດທີ່ຈະຊື້ຊັບສິນຄືນຈາກທະນາຄານພາຍໃນໄລຍະເວລາທີ່ໄດ້ຕົກລົງກັນໃນສັນຍາ.

### 15.4 ຫຼັກຊັບປະເພດອື່ນໆ

ທະນາຄານໄດ້ລົງທຶນ 29 ລ້ານໂດລາສະຫະລັດໃນການລົງທຶນໄລຍະສັ້ນກັບ Bitqik ດ້ວຍອັດຕາຜົນຕອບແທນ 0.1% ຂອງການລົງທຶນ. ຫຼັງຈາກນັ້ນ, ທະນາຄານໄດ້ຮັບເງິນທັງໝົດ 29 ລ້ານໂດລາສະຫະລັດໃນເດືອນມັງກອນ 2026.

## 16. ເງິນໃຫ້ກູ້ແກ່ລູກຄ້າ, ສຸດທິຫຼັງຫັກເງິນແຮສະເພາະ

| | 2025<br>ລ້ານກີບ | 2024<br>ລ້ານກີບ |
|---|---|---|
| ເງິນກູ້ໃຫ້ກັບລູກຄ້າ | 25,126,112 | 20,642,218 |
| ຫັກເງິນແຮສະເພາະ | (104,179) | (93,864) |
| | **25,021,933** | **20,548,354** |

## 16. ເງິນໃຫ້ກູ້ແກ່ລູກຄ້າ, ສຸດທິຫຼັງຫັກເງິນແຮສະເພາະ (ຕໍ່)

ອັດຕາດອກເບ້ຍສໍາລັບເງິນກູ້ພາຍໃນປີ ມີດັ່ງລຸ່ມນີ້:

| | 2025<br>ອັດຕາດອກເບ້ຍ<br>% ຕໍ່ປີ | 2024<br>ອັດຕາດອກເບ້ຍ<br>% ຕໍ່ປີ |
|---|---|---|
| ເງິນກູ້ ແລະ ເງິນລ່ວງໜ້າເປັນສະກຸນເງິນກີບ | 5.50% - 16.00% | 5.50% - 16.00% |
| ເງິນກູ້ ແລະ ເງິນລ່ວງໜ້າເປັນສະກຸນເງິນໂດລາ | 7.00% - 14.00% | 7.00% - 14.00% |
| ເງິນກູ້ ແລະ ເງິນລ່ວງໜ້າເປັນສະກຸນເງິນບາດ | 7.00% - 14.00% | 7.00% - 14.00% |
| ເງິນກູ້ ແລະ ເງິນລ່ວງໜ້າເປັນສະກຸນເງິນຢວນ | 10.00% - 11.00% | 10.00% - 11.00% |

### 16.1 ວິເຄາະເງິນກູ້ຕາມສະກຸນເງິນ

| | 2025<br>ລ້ານກີບ | 2024<br>ລ້ານກີບ |
|---|---|---|
| ເງິນກູ້ ແລະ ເງິນລ່ວງໜ້າເປັນສະກຸນເງິນກີບ | 3,827,156 | 1,318,726 |
| ເງິນກູ້ ແລະ ເງິນລ່ວງໜ້າເປັນສະກຸນເງິນໂດລາ | 13,008,728 | 10,684,512 |
| ເງິນກູ້ ແລະ ເງິນລ່ວງໜ້າເປັນສະກຸນເງິນບາດ | 8,281,985 | 8,638,731 |
| ເງິນກູ້ ແລະ ເງິນລ່ວງໜ້າເປັນສະກຸນເງິນຢວນ | 8,243 | 249 |
| | **25,126,112** | **20,642,218** |

### 16.2 ວິເຄາະເງິນກູ້ຕາມຄຸນນະພາບເງິນກູ້

| | 2025<br>ລ້ານກີບ | 2024<br>ລ້ານກີບ |
|---|---|---|
| ໜີ້ເກີດດອກອອກຜົນ | | |
| ໜີ້ປົກກະຕິ | 21,586,754 | 18,420,440 |
| ໜີ້ຄວນເອົາໃຈໃສ່ | 3,378,406 | 2,125,789 |
| ໜີ້ບໍ່ເກີດດອກອອກຜົນ | | |
| ໜີ້ຕໍ່າກວ່າມາດຕະຖານ | 66,058 | - |
| ໜີ້ສົງໃສ | 16,494 | - |
| ໜີ້ສູນ | 78,400 | 95,989 |
| | **25,126,112** | **20,642,218** |

## 16. ເງິນໃຫ້ກູ້ຢືມແກ່ລູກຄ້າ, ສຸດທິຫັກເງິນແຮສະເພາະ(ຕໍ່)

### 16.3 ເງິນແຮສໍາລັບການສູນເສຍເງິນກູ້ໃຫ້ກັບລູກຄ້າ

ລາຍລະອຽດຂອງການຈັດຊັ້ນໜີ້ ແລະ ເງິນແຮຕາມລະບຽບການຂອງ ທຫລ ໃນວັນທີ 31 ທັນວາ 2025 ມີດັ່ງນີ້:

| ການຈັດຊັ້ນໜີ້ | ຍອດເຫຼືອເງິນກູ້ ລ້ານກີບ | ເງິນແຮສະເພາະ ລ້ານກີບ | ເງິນແຮທົ່ວໄປ ລ້ານກີບ |
|---|---:|---:|---:|
| ໜີ້ເກີດດອກອອກຜົນ | | | |
| - ໜີ້ປົກກະຕິ | 21,586,754 | - | 107,934 |
| - ໜີ້ຄວນເອົາໃຈໃສ່ | 3,378,406 | 75,454 | - |
| ໜີ້ບໍ່ເກີດດອກອອກຜົນ | | | |
| - ໜີ້ຕໍ່າກວ່າມາດຕະຖານ | 66,058 | 1,072 | - |
| - ໜີ້ສົງໃສ | 16,494 | 207 | - |
| - ໜີ້ສູນ | 78,400 | 27,446 | - |
| **ລວມ** | **25,126,112** | **104,179** | **107,934** |

ລາຍລະອຽດຂອງການຈັດຊັ້ນໜີ້ ແລະ ເງິນແຮຕາມລະບຽບການຂອງ ທຫລ ໃນວັນທີ 31 ທັນວາ 2024 ມີດັ່ງນີ້:

| ການຈັດຊັ້ນໜີ້ | ຍອດເຫຼືອເງິນກູ້ ລ້ານກີບ | ເງິນແຮສະເພາະ ລ້ານກີບ | ເງິນແຮທົ່ວໄປ ລ້ານກີບ |
|---|---:|---:|---:|
| ໜີ້ເກີດດອກອອກຜົນ | | | |
| - ໜີ້ປົກກະຕິ | 18,420,440 | - | 91,562 |
| - ໜີ້ຄວນເອົາໃຈໃສ່ | 2,125,789 | 63,774 | - |
| ໜີ້ບໍ່ເກີດດອກອອກຜົນ | | | |
| - ໜີ້ຕໍ່າກວ່າມາດຕະຖານ | - | - | - |
| - ໜີ້ສົງໃສ | - | - | - |
| - ໜີ້ສູນ | 95,989 | 30,090 | - |
| **ລວມ** | **20,642,218** | **93,864** | **91,562** |

## 17. ການລົງທຶນໃນ ວິສາຫະກິດຮ່ວມທຶນ

| | 2025 | | 2024 | |
|---|---|---|---|---|
| | ມູນຄ່າຕາມບັນຊີ ລ້ານກີບ | ທະນາຄານຖືຮຸ້ນ % | ມູນຄ່າຕາມບັນຊີ ລ້ານກີບ | ທະນາຄານຖືຮຸ້ນ % |
| ບໍລິສັດ ລາວເນເຊິນນໍ ເພເມັ້ນ ເນັດເວີກ ຈຳກັດ | 1,698 | 5% | 1,698 | 5% |
| ບໍລິສັດ ຕະຫຼາດແລກປ່ຽນເງິນຕາຕ່າງປະເທດ | 1,000 | 5% | 1,000 | 5% |
| ບໍລິສັດສຸພຣີມສະມາຕິບໍລິຫານກອງທຶນເພື່ອການລົງທຶນຈຳກັດ | 8,958 | 30% | - | - |
| | **11,656** | | **2,698** | |

- ບໍລິສັດ ລາວເນເຊິນນໍ ເພເມັ້ນ ເນັດເວີກ ຈຳກັດ (LAPNet) ໃນ ສປປ ລາວ ເປັນລະບົບການເຮັດທຸລະກຳຍ່ອຍ ເຮັດໜ້າທີ່ເປັນຕົວກາງລະຫວ່າງພາກສ່ວນການຊຳລະເງິນ ແລະ ຜູ້ໃຫ້ບໍລິການໃນລາວ,

- ບໍລິສັດ ຕະຫຼາດແລກປ່ຽນເງິນຕາຕ່າງປະເທດ (LFX) ຊຶ່ງເປັນລະບົບຕະຫຼາດແລກປ່ຽນເງິນຕາຕ່າງປະເທດແບບອອນໄລ ຜ່ານແອັບພິເຄຊັນ LFX mobile banking.

- ໃນປີ 2025, ທະນາຄານໄດ້ລົງທຶນຈຳນວນ 8,959 ລ້ານກີບ ໃນບໍລິສັດ Supreme Smarty Fund Management Company Limited, ເຊິ່ງເປັນບໍລິສັດທີ່ໃຫ້ບໍລິການບໍລິຫານກອງທຶນເພື່ອການລົງທຶນ.

## 18. ຊັບສິນບັດພອນຊື້ ແລະ ພອນກໍ່ສ້າງ

| | 2025 ລ້ານກີບ | 2024 ລ້ານກີບ |
|---|---|---|
| **ຍອດເຫຼືອ ໃນວັນທີ 01 ມັງກອນ** | **7,816** | **7,886** |
| - ຊື້ເພີ່ມ | 36,483 | 27,225 |
| - ໂອນເຂົ້າເປັນຊັບສິນບັດຄົງທີ່ມີຕົວຕົນ (ບົດອະທິບາຍເລກທີ 20) | (22,158) | (27,138) |
| - ສະສາງ | - | (157) |
| **ຍອດເຫຼືອ ໃນວັນທີ 31 ທັນວາ** | **22,141** | **7,816** |

## 19. ຊັບສິນບັດຄົງທີ່ບໍ່ມີຕົວຕົນ

| | ສິດນຳໃຊ້ທີ່ດິນ<br>ລ້ານກີບ | ຊ໊ອບແວ<br>ລ້ານກີບ | ລວມ<br>ລ້ານກີບ |
|---|---|---|---|
| **ວັນທີ 01 ມັງກອນ 2025** | | | |
| ຕົ້ນທຶນ | 213,975 | 52,132 | 266,107 |
| ຄ່າເສື່ອມລາຄາສະສົມ | - | (31,216) | (31,216) |
| **ມູນຄ່າຕາມບັນຊີສຸດທິ ວັນທີ 1 ມັງກອນ 2025** | **213,975** | **20,916** | **234,891** |
| **ປີສິ້ນສຸດວັນທີ 31 ທັນວາ 2025** | | | |
| ຍອດຍົກມາມູນຄ່າຕາມບັນຊີສຸດທິ | 213,975 | 20,916 | 234,891 |
| ເພີ່ມຂຶ້ນ | - | 34,505 | 34,505 |
| ປະເມີນຄືນ (*) | 223,619 | - | 223,619 |
| ຄ່າເສື່ອມລາຄາ | - | (11,045) | (11,045) |
| **ຍອດເຫຼືອມູນຄ່າຕາມບັນຊີສຸດທິ** | **437,594** | **44,376** | **481,970** |
| **ວັນທີ 31 ທັນວາ 2025** | | | |
| ຕົ້ນທຶນ | 437,594 | 86,637 | 524,231 |
| ຄ່າເສື່ອມລາຄາສະສົມ | - | (42,261) | (42,261) |
| **ມູນຄ່າຕາມບັນຊີສຸດທິ ໃນວັນທີ 31 ທັນວາ 2025** | **437,594** | **44,376** | **481,970** |

(*) ສິດນຳໃຊ້ທີ່ດິນ: ໃນລະຫວ່າງປີ 2025, ທະນາຄານໄດ້ປະເມີນຄືນສິດນຳໃຊ້ທີ່ດິນເພື່ອສະທ້ອນເຖິງມູນຄ່າຍຸດຕິທຳ. ການປະເມີນໄດ້ດຳເນີນໂດຍຜູ້ປະເມີນອິດສະຫຼະ.

| | ສິດນຳໃຊ້ທີ່ດິນ<br>ລ້ານກີບ | ຊ໊ອບແວ<br>ລ້ານກີບ | ລວມ<br>ລ້ານກີບ |
|---|---|---|---|
| **ວັນທີ 01 ມັງກອນ 2024** | | | |
| ຕົ້ນທຶນ | 169,541 | 83,700 | 253,241 |
| ຄ່າເສື່ອມລາຄາສະສົມ | - | (67,460) | (67,460) |
| **ມູນຄ່າຕາມບັນຊີສຸດທິ ວັນທີ 1 ມັງກອນ 2024** | **169,541** | **16,240** | **185,781** |
| **ປີສິ້ນສຸດວັນທີ 31 ທັນວາ 2024** | | | |
| ຍອດຍົກມາມູນຄ່າຕາມບັນຊີສຸດທິ | 169,541 | 16,240 | 185,781 |
| ເພີ່ມຂຶ້ນ | 49,179 | 9,049 | 58,228 |
| ຄ່າເສື່ອມລາຄາ | - | (2,879) | (2,879) |
| ສະສາງ - ມູນຄ່າສຸດທິ | (4,745) | (1,494) | (6,239) |
| **ຍອດເຫຼືອມູນຄ່າຕາມບັນຊີສຸດທິ** | **213,975** | **20,916** | **234,891** |
| **ວັນທີ 31 ທັນວາ 2024** | | | |
| ຕົ້ນທຶນ | 213,975 | 52,132 | 266,107 |
| ຄ່າເສື່ອມລາຄາສະສົມ | - | (31,216) | (31,216) |
| **ມູນຄ່າຕາມບັນຊີສຸດທິ ໃນວັນທີ 31 ທັນວາ 2024** | **213,975** | **20,916** | **234,891** |

## ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ
## ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2025

### 20. ຊັບສິນຄົງທີ່ມີຕົວຕົນ

ການເຄື່ອນໄຫວຂອງຊັບສິນບັດຄົງທີ່ມີຕົວຕົນ ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2025 ມີດັ່ງນີ້:

| | ອາຄານ ແລະ ການປັບປຸງ ລ້ານກີບ | ອຸປະກອນຫ້ອງການ ລ້ານກີບ | ເຟີນີເຈີ ແລະ ສິ່ງຕິດຕັ້ງ ລ້ານກີບ | ພາຫະນະ ລ້ານກີບ | ລວມ ລ້ານກີບ |
|---|---|---|---|---|---|
| **ວັນທີ 1 ມັງກອນ 2025** | | | | | |
| ຕົ້ນທຶນ | 64,969 | 157,113 | 132,591 | 29,236 | 383,909 |
| ຫັກ: ຄ່າຫຼຸ້ຍຫ້ຽນສະສົມ | (32,837) | (70,989) | (77,434) | (16,554) | (197,814) |
| **ມູນຄ່າຕາມບັນຊີສຸດທິ ໃນວັນທີ 1 ມັງກອນ 2025** | **32,132** | **86,124** | **55,157** | **12,682** | **186,095** |
| **ປີສິ້ນສຸດວັນທີ 31 ທັນວາ 2025** | | | | | |
| ຍອດຍົກມາມູນຄ່າຕາມບັນຊີສຸດທິ | 32,132 | 86,124 | 55,157 | 12,682 | 186,095 |
| ເພີ່ມຂຶ້ນ | 8,493 | 44,609 | 19,938 | 752 | 73,792 |
| ປະເມີນຄືນ | 23,840 | - | - | - | 23,840 |
| ໂອນເຂົ້າ / (ອອກ) (ບົດອະທິບາຍເລກທີ 18) | - | 19,293 | - | 2,865 | 22,158 |
| ສະສາງ - ມູນຄ່າສຸດທິ | - | (111) | (1,409) | - | (1,520) |
| ຄ່າຫຼຸ້ຍຫ້ຽນ | (3,384) | (32,420) | (17,999) | (3,710) | (57,513) |
| **ຍອດເຫຼືອມູນຄ່າຕາມບັນຊີສຸດທິ** | **61,081** | **117,495** | **55,687** | **12,589** | **246,852** |
| **ວັນທີ 31 ທັນວາ 2025** | | | | | |
| ຕົ້ນທຶນ | 97,302 | 220,904 | 151,120 | 32,853 | 502,179 |
| ຫັກ: ຄ່າຫຼຸ້ຍຫ້ຽນສະສົມ | (36,221) | (103,409) | (95,433) | (20,264) | (255,327) |
| **ມູນຄ່າຕາມບັນຊີສຸດທິ ໃນວັນທີ 31 ທັນວາ 2025** | **61,081** | **117,495** | **55,687** | **12,589** | **246,852** |

**ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ**
**ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2025**

## 20. ຊັບສິນຄົງທີ່ມີຕົວຕົນ

ການເຄື່ອນໄຫວຂອງຊັບສິນບັດຄົງທີ່ມີຕົວຕົນ ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2024 ມີດັ່ງນີ້:

| | ອາຄານ ແລະ ການປັບປຸງ ລ້ານກີບ | ອຸປະກອນຫ້ອງການ ລ້ານກີບ | ເຟີນິເຈີ ແລະ ສິ່ງຕິດຕັ້ງ ລ້ານກີບ | ພາຫະນະ ລ້ານກີບ | ລວມ ລ້ານກີບ |
|---|---|---|---|---|---|
| **ວັນທີ 1 ມັງກອນ 2024** | | | | | |
| ຕົ້ນທຶນ | 64,330 | 100,996 | 108,130 | 23,456 | 296,912 |
| ຫັກ: ຄ່າຫຼູ້ຍຫ້ຽນສະສົມ | (30,109) | (50,629) | (67,323) | (13,427) | (161,488) |
| **ມູນຄ່າຕາມບັນຊີສຸດທິ ໃນວັນທີ 1 ມັງກອນ 2024** | **34,221** | **50,367** | **40,807** | **10,029** | **135,424** |
| **ປີສິ້ນສຸດວັນທີ 31 ທັນວາ 2024** | | | | | |
| ຍອດຍົກມາມູນຄ່າຕາມບັນຊີສຸດທິ | 34,221 | 50,367 | 40,807 | 10,029 | 135,424 |
| ເພີ່ມຂຶ້ນ | 1,869 | 57,045 | 4,266 | 5,912 | 69,092 |
| ໂອນເຂົ້າ / (ອອກ) (ບົດອະທິບາຍເລກທີ 18) | - | 1,839 | 25,299 | - | 27,138 |
| ສະສາງ - ມູນຄ່າສຸດທິ | (677) | (72) | (655) | - | (1,404) |
| ຄ່າຫຼູ້ຍຫ້ຽນ | (3,281) | (23,055) | (14,560) | (3,259) | (44,155) |
| **ຍອດເຫຼືອມູນຄ່າຕາມບັນຊີສຸດທິ** | **32,132** | **86,124** | **55,157** | **12,682** | **186,095** |
| **ວັນທີ 31 ທັນວາ 2024** | | | | | |
| ຕົ້ນທຶນ | 64,969 | 157,113 | 132,591 | 29,236 | 383,909 |
| ຫັກ: ຄ່າຫຼູ້ຍຫ້ຽນສະສົມ | (32,837) | (70,989) | (77,434) | (16,554) | (197,814) |
| **ມູນຄ່າຕາມບັນຊີສຸດທິ ໃນວັນທີ 31 ທັນວາ 2024** | **32,132** | **86,124** | **55,157** | **12,682** | **186,095** |

## 21. ສິດນໍາໃຊ້ທີ່ດິນ

| | ລ້ານກີບ |
|---|---|
| **ວັນທີ 1 ມັງກອນ 2025** | |
| ຕົ້ນທຶນ | 33,629 |
| ຫັກ: ຄ່າຫຼຸ້ຍຫ້ຽນສະສົມ | (13,060) |
| **ມູນຄ່າຕາມບັນຊີສຸດທິ ໃນວັນທີ 1 ມັງກອນ 2025** | **20,569** |
| **ປີສິ້ນສຸດວັນທີ 31 ທັນວາ 2025** | |
| ຍອດຍົກມາມູນຄ່າຕາມບັນຊີສຸດທິ | 20,569 |
| ເພີ່ມຂຶ້ນ | 4,869 |
| ສະສາງ - ມູນຄ່າສຸດທິ | - |
| ຄ່າຫຼຸ້ຍຫ້ຽນ | (6,344) |
| **ຍອດເຫຼືອມູນຄ່າຕາມບັນຊີສຸດທິ** | **19,094** |
| **ວັນທີ 31 ທັນວາ 2025** | |
| ຕົ້ນທຶນ | 38,498 |
| ຫັກ: ຄ່າຫຼຸ້ຍຫ້ຽນສະສົມ | (19,404) |
| **ມູນຄ່າຕາມບັນຊີສຸດທິ ໃນວັນທີ 31 ທັນວາ 2025** | **19,094** |

## 22. ຊັບສິນອື່ນໆ

| | 2025<br>ລ້ານກີບ | 2024<br>ລ້ານກີບ |
|---|---|---|
| ພາສີທີ່ສາມາດເກັບຄືນໄດ້ | 3,032 | 3,032 |
| ເງິນລ່ວງໜ້າບັດເຄດິດຕ່າງປະເທດ | 25,192 | 47,981 |
| ລາຍຈ່າຍຈ່າຍລ່ວງໜ້າລໍຖ້າການແບ່ງສ່ວນ | 17,638 | 40,809 |
| ໜີ້ຕ້ອງຮັບຈາກພະນັກງານ | 12,337 | 12,617 |
| ຊັບສິນລໍຂາຍ | 3,875,567 | 1,728,588 |
| ອື່ນໆ | 989,817 | 575,852 |
| | **4,923,583** | **2,408,879** |

## 23. ໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນອື່ນ

| | 2025<br>ລ້ານກີບ | 2024<br>ລ້ານກີບ |
|---|---|---|
| **ເງິນຝາກກະແສລາຍວັນ** | **518,956** | **214,627** |
| ທະນາຄານ ແລະ ສະຖາບັນການເງິນພາຍໃນປະເທດ | 518,938 | 203,053 |
| ຄັງເງິນແຫ່ງຊາດ | 18 | 11,574 |
| **ເງິນຝາກປະຢັດ** | **36** | **32** |
| ທະນາຄານ ແລະ ສະຖາບັນການເງິນພາຍໃນປະເທດ | 36 | 32 |
| **ເງິນຝາກມີກຳນົດ** | **911,331** | **1,360,134** |
| ທະນາຄານ ແລະ ສະຖາບັນການເງິນພາຍໃນປະເທດ | 911,331 | 1,360,134 |
| ສະຖາບັນອື່ນໆ | | |
| **ເງິນກູ້ຢືມ** | **1,744,070** | **1,055,809** |
| ທະນາຄານ ແຫ່ງ ສປປ ລາວ | 1,744,070 | 1,055,809 |
| **ໜີ້ຕ້ອງສົ່ງອື່ນໆໃຫ້ທະນາຄານອື່ນ ແລະ ສະຖາບັນການເງິນອື່ນ** | **100** | **23** |
| | **3,174,493** | **2,630,625** |

ອັດຕາດອກເບ້ຍສຳລັບເງິນຝາກຈາກທະນາຄານອື່ນ ແລະ ສະຖາບັນການເງິນອື່ນ ພາຍໃນປີ ມີດັ່ງລຸ່ມນີ້:

| | 2025<br>% ຕໍ່ປີ | 2024<br>% ຕໍ່ປີ |
|---|---|---|
| ເງິນຝາກກະແສລາຍວັນ | 0.00% - 0.60% | 0.00% - 0.60% |
| ເງິນຝາກມີກຳນົດ | 3.20% - 13.00% | 3.20% - 13.00% |
| ເງິນຝາກປະຢັດ | 1.00% | 1.00% |

(*) ລາຍລະອຽດຂອງເງິນກູ້ຈາກ ທຫລ ນະວັນທີ 31 ທັນວາ 2025 ມີດັ່ງຕໍ່ໄປນີ້:

| ຈຸດປະສົງ | ສະກຸນເງິນ | ໄລຍະເວລາ | ອັດຕາດອກເບ້ຍ % ຕໍ່ປີ | 2025<br>ລ້ານກີບ |
|---|---|---|---|---|
| ໂຄງການສິນເຊື່ອແກ້ໄຂໂຄວິດ 19 | ກີບ | 6 ປີ | 3.00% | 389,582 |
| ສິນເຊື່ອສຳລັບກອງທຶນສົ່ງເສີມວິສາຫະກິດ ຂະໜາດນ້ອຍ ແລະ ກາງ (ທສວ) | ກີບ | 2 ປີ | 4.43% - 4.80% | 1,000,000 |
| ສິນເຊື່ອສຳລັບກອງທຶນສົ່ງເສີມວິສາຫະກິດ ຂະໜາດນ້ອຍ ແລະ ກາງ (ທສວ) | ກີບ | 5 ປີ | 2.50% | 354,488 |
| | | | | **1,744,070** |

## 23. ໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນອື່ນ (ຕໍ່)

(*) ລາຍລະອຽດຂອງເງິນກູ້ຈາກ ທຫລ ນະວັນທີ 31 ທັນວາ 2024 ມີດັ່ງຕໍ່ໄປນີ້:

| ຈຸດປະສົງ | ສະກຸນເງິນ | ໄລຍະເວລາ | ອັດຕາດອກເບ້ຍ % ຕໍ່ປີ | 2024<br>ລ້ານກີບ |
|---|---|---|---|---|
| ໂຄງການສິນເຊື່ອແກ້ໄຂໂຄວິດ 19 | ກີບ | 6 ປີ | 3.00% | 727,170 |
| ໂຄງການສິນເຊື່ອແກ້ໄຂໂຄວິດ 19 | ໂດລາ | 5 ປີ | 5.45% + 3 ເດືອນ CME SOFR | 216,580 |
| ສິນເຊື່ອສຳລັບກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ (ທສວ) | ກີບ | 5 ປີ | 2.50% | 112,059 |
| | | | | **1,055,809** |

## 24. ໜີ້ຕ້ອງສົ່ງໃຫ້ລູກຄ້າ

| | 2025<br>ລ້ານກີບ | 2024<br>ລ້ານກີບ |
|---|---|---|
| **ເງິນຝາກກະແສລາຍວັນ** | **1,418,091** | **2,056,549** |
| ເປັນສະກຸນເງິນກີບ | 270,185 | 423,243 |
| ເປັນສະກຸນເງິນຕາຕ່າງປະເທດ | 1,147,906 | 1,633,306 |
| **ເງິນຝາກປະຢັດ** | **5,688,755** | **5,005,983** |
| ເປັນສະກຸນເງິນກີບ | 1,181,545 | 972,579 |
| ເປັນສະກຸນເງິນຕາຕ່າງປະເທດ | 4,507,210 | 4,033,404 |
| **ເງິນຝາກມີກຳນົດ** | **28,902,612** | **20,413,716** |
| ເປັນສະກຸນເງິນກີບ | 3,515,200 | 1,366,500 |
| ເປັນສະກຸນເງິນຕາຕ່າງປະເທດ | 25,387,412 | 19,047,216 |
| | **36,009,458** | **27,476,248** |

ອັດຕາດອກເບ້ຍເງິນພາຍໃນປີຂອງເງິນຝາກດັ່ງກ່າວມີດັ່ງນີ້:

| | 2025<br>% ຕໍ່ປີ | 2024<br>% ຕໍ່ປີ |
|---|---|---|
| ເງິນຝາກກະແສລາຍວັນ | ບໍ່ມີດອກເບ້ຍ | ບໍ່ມີດອກເບ້ຍ |
| ເງິນຝາກປະຢັດສະກຸນເງິນກີບ | 0.85% - 1.89% | 0.85% - 1.89% |
| ເງິນຝາກປະຢັດສະກຸນເງິນໂດລາ | 0.50% - 3.00% | 0.50% - 3.00% |
| ເງິນຝາກປະຢັດສະກຸນເງິນບາດ | 0.50% - 3.00% | 0.50% - 3.00% |
| ເງິນຝາກປະຢັດສະກຸນເງິນຢວນ | 0.30% - 0.60% | 0.30% - 0.60% |
| ເງິນຝາກປະຈຳສະກຸນເງິນກີບ | 1.50% - 12.50% | 1.50% - 12.50% |
| ເງິນຝາກປະຈຳສະກຸນເງິນຕາຕ່າງປະເທດ | 2.00% - 10.00% | 2.00% - 10.00% |

## 25. ທຶນຈົດທະບຽນ

| | ທຶນຈົດທະບຽນ (ຮຸ້ນ) | ທຶນຈົດທະບຽນ (ລ້ານກີບ) | ອອກຮຸ້ນ ແລະ ທຶນຮຸ້ນທີ່ຈ່າຍແລ້ວ (ລ້ານກີບ) | ລວມ (ລ້ານກີບ) |
|---|---|---|---|---|
| ໃນວັນທີ 1 ມັງກອນ 2024 | 47,466,610 | 474,666 | - | 474,666 |
| ການອອກຮຸ້ນໃໝ່ | 20,000,000 | 200,000 | - | 200,000 |
| **ໃນວັນທີ 31 ທັນວາ 2024** | **67,466,610** | **674,666** | **-** | **674,666** |
| ໃນວັນທີ 1 ມັງກອນ 2025 | 607,199,490 | - | - | - |
| ການອອກຮຸ້ນໃໝ່ | 75,333,900 | 75,334 | 568,616 | 643,950 |
| **ໃນວັນທີ 31 ທັນວາ 2025** | 750,000,000 | 750,000 | **568,616** | **1,318,616** |

ອີງຕາມມະຕິກອງປະຊຸມຜູ້ຖືຮຸ້ນ ສະບັບເລກທີ 305/ທຄຮ ໃນປີ 2025, ທະນາຄານໄດ້ມີການປ່ຽນແປງມູນຄ່າທີ່ລະບຸໄວ້ຈາກ 10,000 ກີບ/ຮຸ້ນ ເປັນ 1,000 ກີບ/ຮຸ້ນ. ຜູ້ຖືຮຸ້ນເດີມໄດ້ຮັບຮຸ້ນໃນອັດຕາສ່ວນ 1:10.

ນອກຈາກນັ້ນ, ທະນາຄານໄດ້ອອກຮຸ້ນໃໝ່ຈຳນວນ 75,333,900 ຮຸ້ນໃນປີ 2025 ເພື່ອການສະເໜີຂາຍຮຸ້ນຄັ້ງທຳອິດ (IPO) ດ້ວຍມູນຄ່າຕາມມູນຄ່າທີ່ກຳນົດໄວ້ 1,000 ກີບ/ຮຸ້ນ, ໂດຍມີລາຄາຂາຍ 7,900 ກີບ ແລະ 8,800 ກີບ ສຳລັບນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ ສປປ ລາວ ຕາມລຳດັບ. ທະນາຄານມີສ່ວນໄດ້ສ່ວນເສຍຈາກທຶນຮຸ້ນຫຼັງຈາກຫັກຄ່າໃຊ້ຈ່າຍໃນການສະເໜີຂາຍຮຸ້ນແລ້ວ 568,616ລ້ານກີບ.

ໃນວັນທີ 31 ທັນວາ 2025, ຮຸ້ນທັງໝົດໄດ້ອອກໃຫ້ ແລະ ໄດ້ຖອກໝົດແລ້ວ.

## 26. ຄັງສຳຮອງ

### ຄັງສຳຮອງຕາມລະບຽບການ ແລະ ຄັງສຳຮອງທົ່ວໄປ

| | ຄັງສຳຮອງຕາມລະບຽບການ ລ້ານກີບ | ຄັງສຳຮອງທົ່ວໄປ ລ້ານກີບ | ລວມ ລ້ານກີບ |
|---|---|---|---|
| ໃນວັນທີ 1 ມັງກອນ 2024 | 47,226 | 68,379 | 115,605 |
| ແບ່ງເຂົ້າຄັງສຳຮອງ ສຳລັບປີ 2024 | 26,715 | 26,715 | 53,430 |
| **ໃນວັນທີ 31 ທັນວາ 2024** | **73,941** | **95,094** | **169,035** |
| ໃນວັນທີ 1 ມັງກອນ 2025 | 73,941 | 95,094 | 169,035 |
| ແບ່ງເຂົ້າຄັງສຳຮອງ ສຳລັບປີ 2025 | 74,126 | 7,135 | 81,261 |
| **ໃນວັນທີ 31 ທັນວາ 2025** | **148,067** | **102,229** | **250,296** |

ອີງຕາມກອງປະຊຸມຂອງຂາຮຸ້ນສາມັນ ເລກທີ 3022/ທຄຮ ໃນວັນທີ 24 ພະຈິກ 2025 ໄດ້ມີການອະນຸມັດການແບ່ງເງິນເຂົ້າຄັງສຳຮອງຕາມລະບຽບການ ແລະ ຄັງສຳຮອງທົ່ວໄປ. ການແບ່ງເງິນເຂົ້າຄັງສຳຮອງຕາມລະບຽບການເປັນ ຈຳນວນ 74,126 ລ້ານກີບ ແລະ ຄັງສຳຮອງທົ່ວໄປ ເປັນຈຳນວນ 7,135 ລ້ານກີບ.

## 27. ເງິນປັນຜົນ

| | 2025<br>ລ້ານກີບ | 2024<br>ລ້ານກີບ |
|---|---|---|
| ເງິນປັນຜົນ | 660,000 | 480,877 |

ວັນທີ 24 ພະຈິກ 2025, ກອງປະຊຸມຜູ້ຖືຮຸ້ນທົ່ວໄປ ໄດ້ອະນຸມັດເງິນປັນຜົນຈາກກຳໄລສຸດທິ ປະຈຳປີ 2024 ໃຫ້ແກ່ຜູ້ຖືຮຸ້ນ ຈຳນວນ 660,000 ລ້ານກີບ. ເງິນປັນຜົນເຫຼົ່ານີ້ໄດ້ຈ່າຍໃນ 25 ທັນວາ 2025.

ວັນທີ 9 ມັງກອນ 2024, ກອງປະຊຸມຜູ້ຖືຮຸ້ນທົ່ວໄປ ໄດ້ອະນຸມັດເງິນປັນຜົນຈາກກຳໄລສຸດທິ ປະຈຳປີ 2023 ໃຫ້ແກ່ຜູ້ຖືຮຸ້ນ ຈຳນວນ 480,877 ລ້ານກີບ. ເງິນປັນຜົນເຫຼົ່ານີ້ໄດ້ຈ່າຍໃນເດືອນກຸມພາ 2024.

## 28. ອາກອນ

### ອາກອນກຳໄລ

ລາຍຈ່າຍອາກອນກຳໄລປັດຈຸບັນ

ຄັງສຳຮອງແມ່ນຖືກສ້າງຂຶ້ນເພື່ອອາກອນກຳໄລໃນງວດປະຈຸບັນຕາມກົດໝາຍອາກອນ. ທະນາຄານມີພັນທະຕ້ອງຊຳລະອາກອນໃນອັດຕາ 20% ຂອງກຳໄລທີ່ຕ້ອງຈ່າຍທັງໝົດ ກ່ອນອາກອນກຳໄລ.

ໃນລະຫວ່າງປີ, ທະນາຄານໄດ້ຍື່ນຂໍ ແລະ ສຳເລັດການສະເໜີຂາຍຮຸ້ນສາທາລະນະຄັ້ງທຳອິດ (IPO) ແລະ ໄດ້ຈົດທະບຽນໃນວັນທີ 10 ຕຸລາ 2025. ພາຍໃຕ້ກົດໝາຍວ່າດ້ວຍພາສີທີ່ໃຊ້ກັບບໍລິສັດທີ່ຈົດທະບຽນ, ທະນາຄານມີສິດໄດ້ຮັບອັດຕາພາສີລາຍໄດ້ວິສາຫະກິດ 13% ຂອງກຳໄລທີ່ຕ້ອງເສຍພາສີກ່ອນພາສີລາຍໄດ້ເປັນເວລາສີ່ປີ, ມີຜົນບັງຄັບໃຊ້ນັບແຕ່ວັນທີ່ຈົດທະບຽນ.

| | 2025<br>ລ້ານກີບ | 2024<br>ລ້ານກີບ |
|---|---|---|
| **ກຳໄລ /(ຂາດທຶນ) ກ່ອນອາກອນ** | **913,686** | **921,122** |
| ລົບ: ລາຍການທີ່ບໍ່ໃຫ້ຖືເປັນລາຍຮັບ | (41,514,595) | (66,543,403) |
| ບວກ: ລາຍການທີ່ບໍ່ໃຫ້ຖືເປັນລາຍຈ່າຍ | 41,632,792 | 66,521,588 |
| **ກຳໄລທີ່ຕ້ອງເສຍອາກອນ** | **1,031,883** | **899,307** |
| **ອາກອນກຳໄລ** | **195,608** | **179,861** |
| | | |
| **ໜີ້ຕ້ອງຮັບອາກອນໃນຕອນຕົ້ນປີ** | 110,348 | 15,492 |
| ອາກອນກຳໄລ | 195,608 | 179,861 |
| ອາກອນຈ່າຍພາຍໃນປີ | (209,280) | (85,005) |
| **ອາກອນຄ້າງຮັບນະທ້າຍປີ** | **96,676** | **110,348** |

ການມອບອາກອນຂອງທະນາຄານຕ້ອງໄດ້ຮັບການກວດກາຄືນໂດຍເຈົ້າໜ້າທີ່ສ່ວຍສາອາກອນ. ເນື່ອງຈາກກົດໝາຍ ແລະ ກົດລະບຽບທາງດ້ານສ່ວຍສາອາກອນແມ່ນຖືກນຳໃຊ້ກັບລາຍການເຄື່ອນໄຫວຫຼາຍປະເພດ ເຊິ່ງອາດຈະມີການຕີຄວາມໝາຍທີ່ແຕກຕ່າງກັນ, ຈຳນວນເງິນທີ່ໄດ້ສະແດງຢູ່ໃນເອກະສານລາຍງານການເງິນພາຍໃນປີ ອາດຈະຖືກປັບປຸງຫຼັງຈາກມື້ໄລ່ລຽງຂອງເຈົ້າໜ້າທີ່ສ່ວຍສາອາກອນ.

## 29. ເງິນສົດ ແລະ ທຽບເທົ່າເງິນສົດ

| | 2025<br>ລ້ານກີບ | 2024<br>ລ້ານກີບ |
|---|---|---|
| ເງິນສົດໃນຄັງ | 1,695,840 | 2,476,961 |
| ເງິນຝາກກະແສລາຍວັນຢູ່ກັບ ທຫລ | 1,994,142 | 3,046,724 |
| ເງິນຝາກກະແສລາຍວັນຢູ່ກັບທະນາຄານອື່ນ | 5,430,167 | 1,225,289 |
| | **9,120,149** | **6,748,974** |

## 30. ກໍາໄລຕໍ່ຮຸ້ນ

ກໍາໄລຕໍ່ຮຸ້ນ (“EPS”) ຄິດໄລ່ໂດຍການຫານກໍາໄລສຸດທິຫຼັງຫັກພາສີທີ່ເປັນຂອງຜູ້ຖືຮຸ້ນທໍາມະດາດ້ວຍຈໍານວນຮຸ້ນທໍາມະດາສະເລ່ຍທີ່ມີນໍ້າໜັກທີ່ຍັງຄ້າງຢູ່ໃນລະຫວ່າງປີ.

ລາຍໄດ້ຕໍ່ຮຸ້ນສໍາລັບປີສິ້ນສຸດວັນທີ 31 ທັນວາ 2024 ບໍ່ຈໍາເປັນຕ້ອງເປີດເຜີຍໃນປີທີ່ຜ່ານມາ. ເພື່ອຈຸດປະສົງໃນການປຽບທຽບ, ລາຍໄດ້ຕໍ່ຮຸ້ນສໍາລັບປີສິ້ນສຸດວັນທີ 31 ທັນວາ 2024 ໄດ້ຖືກປັບປຸງໃໝ່ໂດຍການປັບຈໍານວນຮຸ້ນທໍາມະດາໂດຍອີງໃສ່ການປ່ຽນແປງມູນຄ່າທີ່ລະບຸໄວ້ຈາກ 10,000 ກີບຕໍ່ຮຸ້ນເປັນ 1,000 ກີບຕໍ່ຮຸ້ນໄດ້ເກີດຂຶ້ນໃນຕອນເລີ່ມຕົ້ນຂອງໄລຍະເວລາປຽບທຽບ, ເພື່ອຮັບປະກັນຄວາມສາມາດໃນການປຽບທຽບກັບປີປະຈຸບັນ.

ຕໍ່ໄປນີ້ແມ່ນຂໍ້ມູນທີ່ນໍາໃຊ້ໃນການຄິດໄລ່ລາຍໄດ້ຕໍ່ຮຸ້ນ.

| | 2025<br>ລ້ານກີບ | 2024<br>(ລາຍງານຄັ້ງກ່ອນ)<br>ລ້ານກີບ | 2024<br>(ດັດແກ້)<br>ລ້ານກີບ |
|---|---|---|---|
| ກໍາໄລສຸດທິ ທີ່ເປັນຂອງຜູ້ຖືຮຸ້ນສາມັນຂອງທະນາຄານ (ລ້ານກີບ) | 718,078 | 741,261 | 741,261 |
| ຈໍານວນຮຸ້ນທໍາມະດາໂດຍສະເລ່ຍທີ່ມີນໍ້າໜັກ (ຮຸ້ນ) | 691,930,119 | 674,666,100 | 607,268,839 |
| ກໍາໄລຕໍ່ຮຸ້ນ (LAK) | 1,038 | 1,099 | 1,221 |

## 31. ພາລະຜູກພັນ

| | 2025<br>ລ້ານກີບ | 2024<br>ລ້ານກີບ |
|---|---|---|
| ໜັງສືຄໍ້າປະກັນຂອງທະນາຄານ | 369,931 | 426,764 |

## 32. ເຫດການທີ່ເກີດຂຶ້ນຫລັງມື້ລາຍງານ

ການປະກາດ ການຈ່າຍເງິນປັນຜົນ

ໃນການປະຊຸມຄະນະກຳມະການຂອງທະນາຄານ ທີ່ຈັດຂຶ້ນໃນວັນທີ 26 ມີນາ 2026 ຄະນະສະພາຜູ້ບໍລິຫານທະນາຄານໄດ້ອະນຸມັດການຈ່າຍເງິນປັນຜົນຈາກກຳໄລສຸດທິ ສຳລັບປີສິ້ນສຸດວັນທີ 31 ທັນວາ 2025 ໃນອັດຕາ 800 ກີບຕໍ່ຫຸ້ນ (31 ທັນວາ 2024: 880 ກີບຕໍ່ຫຸ້ນ) ຄິດເປັນຈຳນວນເງິນປັນຜົນລວມທັງໝົດ 600,000 ລ້ານກີບ (31 ທັນວາ 2024: 660,000 ລ້ານກີບ).

pwc

# JOINT DEVELOPMENT BANK PUBLIC

## FINANCIAL STATEMENTS

(in accordance with the accounting policies of the Bank and the relevant accounting regulations and notifications of Bank of the Lao People's Democratic Republic)

**31 DECEMBER 2025**

**CONTENTS** **PAGES**

| | |
|---|---|
| General information | 1 - 2 |
| Report of management | 3 |
| Independent auditors' report | 4 - 7 |
| Statement of income | 8 |
| Statement of financial position | 9 - 10 |
| Statement of changes in equity | 11 - 12 |
| Statement of cash flows | 13 - 14 |
| Notes to the financial statements | 15 - 39 |

## JOINT DEVELOPMENT BANK PUBLIC

## GENERAL INFORMATION

### THE BANK

Joint Development Bank Public (the Bank, formerly Joint Development Bank Limited) is a public company which listed on the Securities Exchange of Lao PDR (LSX).

The Bank was established under a joint venture agreement dated 2 February 1989 between Bank of the Lao PDR ("the BOL") and Phomsouvanh Silo & Drying Ltd, a Company incorporated in Thailand. Under the agreement, Phomsouvanh Silo & Drying Ltd and the BOL owned 70% and 30% of the Bank's capital respectively. In 2010, the BOL transferred all its contributed capital to Phomsouvanh Silo & Drying Ltd. In 2012, Phomsouvanh Silo & Drying Ltd sold 100% its contributed capital to three individual domestic investors.

The Bank operated under Decision No. 04/PMA of the President of Ministerial Assembly and Decision No. 04/BOL of the Bank of the Lao PDR dated 21 January 1989, which were amended by Investment License No. 133/10 dated 23 September 2010 issued by Ministry of Planning and Investment and Enterprise Registration Certificate No.0234/ERU dated 3 May 2013 issued by the Ministry of Industry and Commerce.

In 2025, the Bank changed its par value from 10,000 LAK/share to 1,000 LAK/share and issue the new share 75,333,000 shares with par value 1,000 LAK/share for Initial Public Offering (IPO).

The Bank obtained the certificate of share issuance from the Lao Commission Office for share issuance in the Lao Securities Exchange on 28 August 2025, and trading commenced on 10 October 2025 and listed itself at the Lao Securities Exchange on the same date.

The principal activities of the Bank are to provide services on mobilizing and receiving short, medium and long term deposit funds from various organisations and individuals; lending on a short, medium and long term basis to various organisation and individuals up to the nature and ability of the Bank's capital resources; conducting foreign currency transactions; internal trade finance services, discounting of commercial notes, bonds and valued documents; providing transaction services between customers; and other banking services as approved by the BOL.

Share Capital

The share capital as at 31 December 2025 is LAKm 750,000 (31 December 2024: LAKm 674,666).

### BOARD OF DIRECTORS (BoD)

Members of the Board of Directors for the year ended 31 December 2025 and at the date of this report are as follows:

| Name | Title | Date of appointment |
|---|---|---|
| Mr. Vilay Siphaphone | Chairman | Appointed on 15 May 2025 |
| Mrs. PhonesamaySoukhaphon | Vice Chairman | Appointed on 15 May 2025 |
| Mr. Sakhone Yorphanxay | Member | Appointed on 15 May 2025 |
| Mr. Khamsing Sonesinnavong | Member | Appointed on 15 May 2025 |
| Mr. Vilarndeth Vayyasomsack | Member | Appointed on 15 May 2025 |
| Mr. Visoud Bouasisaard | Member | Appointed on 15 May 2025 |
| Mr. Bounsoum Sysavath | Member | Appointed on 15 May 2025 |
| Mr. Souksavanh Manyvanh | Member | Appointed on 15 May 2025 |
| Mr. Chomkham Boubphalyvanh | Member | Appointed on 15 May 2025 |

JOINT DEVELOPMENT BANK PUBLIC

## GENERAL INFORMATION

### MANAGEMENT

Members of the Management during the year ended 31 December 2025 and at the date of this report are as follows:

| Name | Title | Date of appointment/resignation |
|---|---|---|
| Mr. Sakhone Yorphanxay | General Director | Appointed on 13 Oct 2025 |
| Mr. Vilarndeth Vayyasomsack | Deputy General Director | Appointed on 13 Oct 2025 |
| Mr. Chanthaphone Chanthavong | Deputy General Director | Appointed on 13 Oct 2025 |
| Mr. Chansana Singhavong | Deputy General Director | Appointed on 13 Oct 2025 |
| Mrs. Khonesavanh Vixathep | Deputy General Director | Appointed on 13 Oct 2025 |
| Mrs. Nitta Nammavong | Deputy General Director | Appointed on 13 Oct 2025 |
| Mr. Xay Boulommavong | Deputy General Director | Appointed on 13 Oct 2025 |
| Mr. Vilaphong Phichit | Deputy General Director | Appointed on 13 Oct 2025 |

### LEGAL REPRESENTATIVE

The legal representative of the Bank during the year ended 31 December 2025 and as at the date of this report is Mr. Sakhone Yorphanxay – General Director.

### AUDITORS

The auditors of the Bank are PricewaterhouseCoopers (Lao) Sole Company Limited.

**JOINT DEVELOPMENT BANK PUBLIC**

## REPORT OF MANAGEMENT

The Management of Joint Development Bank Public ("the Bank") is pleased to present its report and the Bank's financial statements as at and for the year ended 31 December 2025.

### MANAGEMENT'S RESPONSIBILITY IN RESPECT OF THE FINANCIAL STATEMENTS

The Bank's Management is responsible for the financial statements of each interim financial period which give a true and fair view of the financial position of the Bank and of its operational results and its cash flows for the period. In preparing those financial statements, management is required to:

- select suitable accounting policies and then apply them consistently;
- make judgments and estimates that are reasonable and prudent;
- state whether applicable accounting standards have been followed, subject to any material departures disclosed and explained in the financial statements; and
- prepare the financial statements on the going concern basis unless it is inappropriate to presume that the Bank will continue its business.

Management is responsible for ensuring that proper accounting records are kept which disclose, with reasonable accuracy at any time, the financial position of the Bank and to ensure that the accounting records comply with the applied accounting system. It is also responsible for safeguarding the assets of the Bank and hence for taking reasonable steps for the prevention and detection of fraud and other irregularities.

Management confirmed that it has complied with the above requirements in preparing the accompanying interim financial statements.

### STATEMENT OF MANAGEMENT

Management does hereby state that, in its opinion, the accompanying financial statements as at 31 December 2025 are prepared, in all material respects, in accordance with the relevant regulations and notifications of the Bank of Lao People's Democratic Republic and the accounting policies described in Note 2 to the financial statements.

For and on behalf of Management:

Mr. Sakhone Yorphanxay
General Director

Vientiane Capital, Lao PDR
Date: 28 April 2026

pwc

## INDEPENDENT AUDITOR'S REPORT

**To: The shareholder of Joint Development Bank Public**

### Our opinion

